<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2007 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1, 3, 5, 7, 10, 13
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 1, 3, 5, 7, 10, 13
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 2, 9, 11
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lessons 2, 9, 11
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 4, 6, 8, 12, Easter Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 4, 6, 8, 12, Easter Lesson
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 1

## ຈຸດເລີ່ມຕົ້ນທີ່ຖືກຕ້ອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ກະສັດ 2: 10-12; 3:1-15

**ພູມຫລັງຂອງພຣະຄັມພີ:** 1 ກະສັດ 1-- 3

**ຈຸດສຳຄັນຂອງບົດຮຽນນີ້:** ການສແວງຫາສະຕິປັນຍາຂອງພຣະເຈົ້າເປັນຈຸດເລີ່ມຕົ້ນທີ່ຖືກຕ້ອງສຳລັບຜູ້ນຳ.

**ຄຳຖາມເພື່ອການຄົ້ນຄວ້າ:** ການຈະເປັນຜູ້ນຳພາທີ່ດີຕ້ອງເລີ່ມຈາກບ່ອນໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອພິສູດເບິ່ງຄຳອ້ອນວອນຂອງກະສັດໂຊໂລໂມນ ແລະຄຳຕອບຂອງພຣະເຈົ້າ ແລະເພື່ອຈະຮຽນຮູ້ຫລັກໃນການນຳພາ.

## ແຜນສຳລັບການສອນ

**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ເລີ່ມການຮຽນດ້ວຍຄຳຖາມ: ພວກເຮົາຮູ້ຫຍັງແດ່ກ່ຽວກັບ ກະສັດດາວິດ ແລະກະສັດໂຊໂລໂມນ. ໃຫ້ເວລາຕອບ ແລະສົນທະນາເລັກນ້ອຍ. ອະທິບາຍວ່າໃນບົດຮຽນຕໍ່ໄປນີ້ ບໍ່ແມ່ນພວກເຮົາຈະຮຽນຮູ້ພຽງແຕ່ປະວັດສາດໃນພຣະຄັມພີ ແຕ່ພວກເຮົາຈະຮຽນຮູ້ວ່າເປັນຫຍັງທຸກຢ່າງຈຶ່ງເກີດຂຶ້ນ ແລະເຫດການເຫລົ່ານັ້ນກ່ຽວຂ້ອງຫຍັງກັບການດຳເນີນຊີວິດຂອງພວກເຮົາໃນປັດຈຸບັນ.

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

2. ໃຊ້ "ຄຳຖາມເພື່ອການຄົ້ນຄວ້າ" ໃນຕົ້ນບົດຮຽນເພື່ອແນະນຳບົດຮຽນ (ການຈະເປັນຜູ້ນຳພາທີ່ດີຕ້ອງເລີ່ມຈາກບ່ອນໃດ?). ຊັກຊວນໃຫ້ນັກຮຽນທີ່ມີປະສົບການໃນດ້ານຕ່າງໆ (ທຸຣະກິດ, ອາສາສມັກ, ການເມືອງ, ຜູ້ນຳຄອບຄົວ, ແລະຜູ້ນຳໃນຄຣິສຕະຈັກ) ຕອບຄຳຖາມນີ້. ໃຫ້ຜູ້ນຶ່ງອ່ານ 1 ກະສັດ 2:10-12. ອະທິບາຍສິ່ງທີ່ດາວິດໄດ້ເຮັດກ່ອນຕາຍ ແລະການຂຶ້ນຄອງຣາດຂອງໂຊໂລໂມນໃນ 1 ກະສັດ 2: 1-10. ການປະພຶດຂອງອາໂດນີຢາມີສ່ວນສຳຄັນແນວໃດໃນການຂຶ້ນບັງລັງຂອງໂຊໂລໂມນ ແລະສິ່ງທີ່ໂຊໂລໂມນໄດ້ເຮັດຫລັງຈາກນັ້ນເພື່ອປົກປ້ອງບັນລັງຂອງທ່ານ. (ອ່ານ ແລະກະກຽມໄວ້ກ່ອນມື້ສອນ ເພື່ອທ່ານຈະໄດ້ອະທິບາຍຢ່າງແຈ່ມແຈ້ງ).

3. ອ່ານ 1 ກະສັດ 3:1-3. ຖາມ: ເປັນຫຍັງພຣະເຈົ້າຈຶ່ງບໍ່ພໍພຣະທັຍໃນຕົວໂຊໂລໂມນ? ອະທິບາຍວ່າ: ສມັຍນັ້ນອິສຣາເອນຍັງບໍ່ມີວິຫານຂອງພຣະເຈົ້າ; ພວກເຂົາເຈົ້າໄດ້ສ້າງແທນບູຊາໄວ້ຫລາຍໆບ່ອນ ເພື່ອຈະໄດ້ນຳເຄື່ອງບູຊາໄປໃຫ້ພຣະເຈົ້າ; ແຕ່ບັນຫາກໍຄືວ່າ ໂຊໂລໂມນ ໄດ້ສ້າງແທນບູຊາສຳລັບບັນດາເມັຽທັງຫລາຍຂອງຕົນ ເພື່ອພວກເຂົາຈະໄດ້ເຮັດພິທີຖວາຍບູຊາພວກພຣະຕ່າງຊາດ; ອ່ານ 1 ກະສັດ 11:7-8. ໂຊໂລໂມນຄວນນຳພວກເມັຽທັງຫລາຍໃຫ້ໄປຖວາຍບູຊາພຣະເຈົ້າ ທີ່ແທນຂອງພຣະຜູ້ເປັນເຈົ້າຜູ້ຊົງເປັນອົງບໍຣິສຸດ.

4. ອ່ານ 1 ກະສັດ 3: 4-15. ທົບທວນເບິ່ງຄຳອ້ອນວອນຂໍຂອງໂຊໂລໂມນ. ຖາມ: ທ່ານຄິດວ່າເປັນຫຍັງໂຊໂລໂມນຈຶ່ງທູນຂໍສະຕິປັນຍາ ໃນຂະນະທີ່ເຂົາສາມາດທູນຂໍສິ່ງອື່ນໆໄດ້? ເບິ່ງຂໍ້ 8-9, ພຣະເຈົ້າປະທານກຽດຕິຍົດ, ຊີວິດທີ່ຍືນຍາວ, ແລະອຳນາດໃຫ້ໂຊໂລໂມນ ເພາະການຮູ້ຈັກຖ່ອມຕົວຂອງທ່ານ. ອະທິບາຍວ່າກະສັດໂຊໂລໂມນກໍໄດ້

ເຮັດຫລາຍໆຢ່າງທີ່ຜິດພາດ; ແຕ່ການຮູ້ຈັກຖ່ອມຕົວເຮັດໃຫ້ທ່ານໄດ້ເປັນຜູ້ນຳຜູ້ຍິ່ງໃຫຍ່. ຜູ້ນຳຄຣິສຕະຈັກຄວນເຮັດຕາມແບບຢ່າງຂອງທ່ານໃນເຣື່ອງນີ້.

5. ພານັກຮຽນເບິ່ງ ຫລັກຖານເຣື່ອງສະຕິປັນຍາຂອງໂຊໂລໂມນ ໃນ 3:16-28. ແຕ່ງຜູ້ນຶ່ງໃຫ້ເປັນຜູ້ເວົ້າເຣື່ອງນີ້ໃຫ້ທຸກຄົນຟັງ (ທ່ານອາດຈະຕຽມລາວໄວ້ກ່ອນມື້ຈະຮຽນບົດຮຽນນີ້). ຖາມ: ພວກທ່ານຄິດວ່າພວກຜູ້ຍິງທັງສອງຄົນນີ້ ກຳລັງຄິດແນວໃດຢູ່ໃນໃຈຂອງເຂົາເຈົ້າ? ໂຊໂລໂມນໃຊ້ຂອງພຣະຣາຊປະທານຈາກພຣະເຈົ້າວິທີໃດ?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ໃຊ້ຄຳຖາມໃນພາກສຸດທ້າຍຂອງບົດຮຽນເພື່ອຊ່ວຍໃນຕອນນີ້; ທ່ານອາດຈະຕອບຄຳຖາມທັງໝົດ ຖ້າມີເວລາພໍ ແຕ່ຢ່າງນ້ອຍໃຫ້ໃຊ້ຄຳຖາມ 4 ແລະ 1:

   ຄຳຖາມທີ 4 - ທ່ານຈະຕອບພຣະເຈົ້າແນວໃດຖ້າພຣະອົງຊົງເວົ້າກັບທ່ານວ່າ, "ເຈົ້າຢາກໄດ້ຫຍັງ ເຮົາຈະໃຫ້ເຈົ້າ"? ໃຫ້ເວລາຕອບ. ຫລັງຈາກນັ້ນຖາມຕໍ່ວ່າ: ມີຫຍັງອີກແດ່ທີ່ພວກທ່ານຢາກໄດ້ຈາກພຣະເຈົ້າ?

   ຄຳຖາມ 1 - ມີຄຸນລັກສະນະແນວໃດແດ່ທີ່ຜູ້ນຳຄຣິສຕຽນຄວນສແດງອອກໃຫ້ເຫັນ? ໃຊ້ແບບຢ່າງໃນຊີວິດຂອງກະສັດໂຊໂລໂມນ.

7. ສລູບວ່າບົດຮຽນໃນມື້ນີ້ໄດ້ສອນຫຍັງກັບພວກເຮົາກ່ຽວກັບການນຳພາ. ປິດການຮຽນໂດຍອ້ອນວອນເພື່ອຜູ້ນຳໃນຄຣິສຕະຈັກ ແລະທຸກໆຄົນເພື່ອເຂົາເຈົ້າຈະໄດ້ນຳພາຄຣິສຕະຈັກ, ຄອບຄົວ, ສັງຄົມ ແລະທີ່ທຳງານ ຢ່າງຖືກຕ້ອງຕາມຫລັກຂອງພຣະເຈົ້າ.

*ດຣ. ສິດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ອ້ອນວອນຕໍ່ພຣະເຈົ້າຜູ້ຊົງຮັກສາຄຳສັນຍາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ກະສັດ 8:22-36, 41-51

**ພູມຫລັງຂອງພຣະຄັມພີ:** 1 ກະສັດ 7:1-9:9

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຕ້ອງການໃຫ້ມີຄວາມສັດຊື່ຕໍ່ພຣະອົງເວລາພວກເຮົາອ້ອນວອນຂໍສິ່ງທີ່ຕ້ອງການຈາກພຣະອົງ.

**ຄຳຖາມເພື່ອການຄົ້ນຄວ້າ:** ການອ້ອນວອນດ້ວຍໃຈຈິງເປັນເຄື່ອງໝາຍຂອງພະລັງຫລື ປັນຈຸດອ່ອນໄດ້ ໂດຍສະເພາະໃນກຸ່ມຜູ້ນຳທັງຫລາຍ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະສຳລວດກວດເບິ່ງເຖິງຄຳອ້ອນວອນຂອງຕົນເອງເພື່ອຈະເອົາມາປຽບກັບການອ້ອນວອນຂອງກະສັດຊາໂລໂມນ ເພື່ອຈະຮູ້ວ່າອັນໃດຄວນດັດແປງແກ້ໄຂໃນການອ້ອນວອນ.

## ອະທິບາຍພຣະຄຳພີ

### ການເຂົ້າໃຈໃນເນື້ອເຣື່ອງ

ການຊົງສ້າງພຣະວິຫານໂດຍກະສັດໂຊໂລໂມນໃຊ້ໜ້າດິນຫລາຍກວ່າສາມສິບຫ້າເອກເກີ ແລະໃຊ້ເວລາເຈັດປີຈຶ່ງສຳເຣັດ. ແຕ່ພຣະຣາຊວັງຂອງກະສັດໂຊໂລໂມນເປັນອີກເຣື່ອງນຶ່ງ. ໃນປຶ້ມ 1 ກະສັດ 7:1-12 ໄດ້ບອກພວກເຮົາເຖິງເຣື່ອງກະສັດໂຊໂລໂມນສ້າງພຣະຣາຊວັງຂອງຕົນເອງ. ເພິ່ນໃຊ້ເວລາສິບສາມປີສ້າງພຣະຣາຊວັງທີ່ປະກອບດ້ວຍຕຶກຫ້າຫລັງ. ເປັນໜ້າເສັຽໃຈພວກເຮົາບໍ່ອາດຮູ້ໄດ້ຢ່າງລະອຽດເຖິງຕຶກໃຫຍ່ຫ້າຫລັງນີ້ເລີຍ. ມີຕຶກຫລາຍໆຫລັງໄດ້ມີຊື່ເຊັ່ນ: "ເຮືອນໄມ້ຈາກປ່າປະເທດເລບານອນ, "ຫ້ອງເສົາໃຫຍ່" "ຫ້ອງບັນລັງ" ແລະຫ້ອງລູກສາວຂອງກະສັດຟາໂຣ." ກະສັດໂຊໂລໂມນຍັງມີພຣະຣາຊວັງສ່ວນຕົວອີກດ້ວຍ.

1 ກະສັດ 8:1-66 ໄດ້ບອກຜູ້ອ່ານເຖິງຫີບພຣະສັນຍາ ແລະການຖວາຍພຣະວິຫານ. ກະສັດໂຊໂລໂມນ ໄດ້ກ່າວວ່າພຣະເຢໂຮວ່າໄດ້ຮັກສາຄຳໝັ້ນສັນຍາຂອງພຣະອົງຕໍ່ພວກອິສຣາເອນທີ່ສາມາດເຫັນໄດ້ໃນການສ້າງພຣະວິຫານນີ້. ຄຳປາສັຍຂອງ ກະສັດໂຊໂລໂມນ ໄດ້ເວົ້າເຖິງຄຳສັນຍາຂອງພຣະເຈົ້າຕໍ່ກະສັດດາວິດຜູ້ເປັນບິດາໃນປຶ້ມ 2 ຊາມູເອນ 7 (ເບິ່ງ 1 ກະສັດ 8:24). ຄຳເວົ້າເຖິງຈິດໃຈ (8:17, ແປວ່າຫົວໃຈ) ໄດ້ບອກວ່າກະສັດດາວິດມີຄວາມຕັ້ງພຣະທັຍໃນການສ້າງພຣະວິຫານນີ້. ຄຳເວົ້ານີ້ໄດ້ກ່ຽວຂ້ອງເຖິງສອງພໍ່ລູກໃນການສ້າງພຣະວິຫານ ບໍ່ເປັນພຽງແຕ່ກະສັດໂຊໂລໂມນເທົ່ານັ້ນ.

1 ກະສັດ 8:22-53 ໄດ້ລາຍງານເຖິງການອ້ອນວອນຖວາຍ ເປັນສິ່ງເລີ້ມຕົ້ນດ້ວຍຄຳສັນຍາອັນສຳຄັນ ຂອງກະສັດດາວິດໃນຂໍ້ 14-21. ແນ່ນອນຄຳສັນຍານັ້ນມີຊີວິດແລະໝັ້ນຄົງດີ. ການອ້ອນວອນທີ່ພົບເຫັນຢູ່ໃນຂໍ້ 27-53 ໄດ້ບອກໃຫ້ຮູ້ຄັກວ່າ ພຣະເຈົ້າຍັງສະຖິດກັບພວກອິສຣາເອນດ້ວຍພຣະວິຫານນັ້ນ.

ຄຳອະທິບາຍໄດ້ປະກອບດ້ວຍພາສາຊຶ່ງເປັນຂໍ້ສຳຄັນທີ່ໃຊ້ໃນປຶ້ມ 2 ພຣະບັນຍັດ. ຄຳສັນຍາໄດ້ປະກອບດ້ວຍສອງພາກສ່ວນ ພຣະພອນແລະຄຳສາບແຊ່ງ (2 ພຣະບັນຍັດ 28).

## ການແປພຣະຄັມພີ

<u>ຄຳອ້ອນວອນຂອງ ກະສັດໂຊໂລໂມນ</u> ( 1 ກະສັດ 8:22-26)

<u>8:22.</u> ການທີ່ ກະສັດໂຊໂລໂມນ ມີໜ້າໃນການຖວາຍພຣະວິຫານໄດ້ບອກວ່າພຣະອົງໄດ້ຊົງສ້າງພຣະວິຫານ. ໃນລັກສະນະເປັນກະສັດ, ພຣະອົງມີໜ້າທີ່ເປັນຜູ້ນຳຫົວໜ້າສາສນາຄົນສູງສຸດ. ຄຳອ້ອນອອນຂອງພຣະອົງໄດ້ເສີມສຳພັນລະຫວ່າງພຣະວິຫານ ແລະເສື້ອສາຍຂອງກະສັດເພື່ອໃຫ້ຜູ້ເກີດມາທີຫລັງໄດ້ປະຕິບັດຕາມສິ່ງຕົນເອງໄດ້ກໍ່ຂື້ນ.

ກະສັດໂຊໂລໂມນ ໄດ້ຢືນຢູ່ເວລາເພິ່ນອ້ອນວອນຖວາຍພຣະວິຫານ, ແຕ່ໃນຂໍ້ 54 ໄດ້ບອກວ່າເພິ່ນໄດ້ຄຸເຂົ່າລົງ. ການທີ່ຢືນອ້ອນວອນນີ້ເປັນທຳນຽມຂອງພວກໂບຣານພວກຕາເວັນອອກເຄີຍປະຕິບັດ. ຄົນສ່ວນຫລາຍເຫັນວ່າເປັນການສັກສິດຖ້າວ່ານັ່ງຢູ່, ຜູ້ນ້ອຍທີ່ທູນຂໍກັບຜູ້ສັກສິດໄດ້ຢືນຕໍ່ໜ້າທູນຂໍຢູ່. ການຢືນຍົກມືຂື້ນກໍເປັນລັກສະນະອີກອັນນື່ງໃນການອ້ອນວອນທີ່ຄົນໃນສມັຍນັ້ນໄດ້ປະຕິດບັດ.

ກ່ອນສມັຍທີ່ພວກອິສຣາເອນໄດ້ເປັນອິພຍົບນັ້ນ ກະສັດໄດ້ທຳໜ້າທີ່ເປັນຫົວໜ້າສາສນາໃນບ່ອນນະມັສການຕໍ່ໜ້າແທ່ນບູຊາ. 2 ພຣະບັນຍັດ 6:13, ໄດ້ຂຽນໄວ້ຫລັງຈາກເປັນອົພຍົບ ໄດ້ບອກວ່າ ກະສັດໂຊໂລໂມນໄດ້ຢືນຢູ່ "ແທ່ນບູຊາທອງ." ກະສັດໂຊໂລໂມນ ໄດ້ທຳໜ້າທີ່ເປັນຜູ້ນຳທາງສາສນາເໝືອນກັບຜູ້ເປັນບິດາ ກະສັດດາວິດໃນເມື່ອເພິ່ນໄດ້ນຳເອົາຫີບພຣະສັນຍາໄປທີ່ກຸງເຢຣູຊາເລັມ (2 ຊາມູເອນ 6:14-20). ການຖວາຍທີ່ບ່ອນຕີເຂົ້າ ( 2 ຊາມູເອນ 24:25).

<u>8:23-24.</u> ການອ້ອນວອນໄດ້ເລີ້ມຕົ້ນດ້ວຍການຍົກຍ້ອງສັຣເສີນ. ກະສັດໂຊໂລໂມນ ໄດ້ຍົກຍ້ອງພຣະເຢໂຮວາຜູ້ສັກສິດ ແລະຜູ້ສັດຊື່ຕໍ່ພວກອິສຣາເອນ. ພຣະເຢໂຮວາ ເປັນພຣະເຈົ້າອົງພິເສດໃນຖ້າມກາງພະເຈົ້າຕ່າງໆໃນໂລກຈັກກະວານ. ຕາມທີ່ພຣະເຈົ້າໄດ້ເປັນອົງສັດຊື່ຕໍ່ການຊົງສ້າງ ພຣະອົງກໍສັດຊື່ຕໍ່ກະສັດດາວິດ ແລະກໍຍັງສັດຊື່ຕໍ່ເຊື້ອສາຍຂອງເພິ່ນອີກ.

ໃນຕອນສຸດທ້າຍຂອງຂໍ້ 23 ໄດ້ກ່າວວ່າພຣະເຢໂຮວາໄດ້ເປັນອົງສັກສິດ, ມີຄວາມຮັກໝັ້ນຄົງຕໍ່ຝູງຊົນ. ພຣະອົງໄດ້ເປັນຜູ້ເລີ້ມແລະເປີດເຜີຍຄວາມສັກສິດຂອງພຣະອົງຕໍ່ຝູງຄົນທັງຫລາຍ, ປະທານຄວາມລອດພົ້ນໃຫ້ (ອົພຍົບ) ແລະຍັງສັນຍາຄວາມຈິງຮັກພັກດີຕໍ່ຄົນຂອງພຣະອົງ. ມະນຸດຊາດມີຄວາມຮັບຜິດຊອບແລະສ້າງກັບຄວາມສຳພັນກັບພຣະອົງຜູ້ສັກສິດ.

ກະສັດໂຊໂລໂມນ ໄດ້ກ່າວປາທະກາຖານັ້ນໄດ້ປ່ຽນຄຳສັນຍາເກົ່າແກ່ໃຫ້ເປັນຄຳສັນຍາໃໝ່ກັບກະສັດດາວິດແລະເຊື້ອສາຍຂອງຕົນ. ຄຳສັນຍາຂອງພຣະເຈົ້າດ້ວຍຄຳເວົ້າໄດ້ກາຍເປັນຄວາມສັນຍາທີ່ເປັນຈິງ. ພຣະວິຫານເປັນບ່ອນທີ່ມະນຸດໄດ້ພົບກັບຜູ້ສັກສິດ ແລະຮ້ອງຫາຄວາມຊ່ອຍເຫລືອຈາກຜູ້ສັກສິດນັ້ນ.

<u>8:25-26.</u> ຂໍ້ 25 ໄດ້ປ່ຽນແປງຄວາມຍົກຍ້ອງສັຣເສີນໃຫ້ເປັນຄຳທູນຂໍ. ຄຳເວົ້າທີ່ສຳຄັນຄື "ຮັກສາ." ຂໍ້ 26 ໄດ້ບອກເຖິງຄວາມຄິດເຫັນທີ່ວ່າ "ໃຫ້ພຣະຄຳຂອງພຣະອົງເປັນຈິງ." ຄຳຮ້ອງຂໍນີ້ໄດ້ຢ້ຳເຖິງຄຳສັນຍາຂອງພຣະເຢໂຮວາ ວ່າພຣະອົງເປັນຫ່ວງໃຍຕໍ່ເຊື້ອສາຍຂອງກະສັດດາວິດ ແລະຈະເຮັດໃຫ້ມີຄົນຈາກເຊື້ອສາຍນີ້ຄອງບັນລັງອີກຕໍ່ໄປ. ການທູນຂໍຢ່າງນີ້ຂອງກະສັດໂຊໂລໂມນ ໄດ້ຂື້ນກັບ 2 ຊາມູເອັນ 7, ນີ້ເປັນຄຳເຕືອນທີ່ສັກສິດໃນ ເພງສັຣເສີນ 132. ພວກອິສຣາເອນໄດ້ເຊື່ອຟັງປື້ມ <u>ທໍຣາ</u> ຖືວ່າເປັນຄຳສັ່ງຂອງພຣະເຈົ້າ. ສິ່ງນັ້ນຈິ່ງເປັນເຣື່ອງສຳຄັນທີ່ພຣະເຢໂຮວາ

ໄດ້ຮັກສາຄວາມສັດຊື່ ແລະມີຄວາມສັມພັນກັບພວກອິສຣເອນ. ບົດຮຽນນີ້ບໍ່ຄວນສູນເສັຽໄປໃນຖ້າມການຝູງຊົນທີ່ຖືກເຈັບໄປເປັນຂ້າທາດໃນກຸງບາບີໂລນ ເປັນພວກທີ່ບໍ່ຮັກສາຄໍາສັ່ງ ຫລື ທໍຣາ.

ກະສັດໂຊໂລໂມນ ເໝືອນເປັນນັກການເມືອງ ເພິ່ນໄດ້ເຮັດໃຫ້ການຖວາຍພຣະວິຫານນີ້ກາຍເປັນໂອກາດທີ່ຈະສເນີສິ່ງທີ່ຕົນເອງຕ້ອງການ. ເພິ່ນໄດ້ເອົາການເມືອງ ແລະການຮັບໃຊ້ພຣະເຈົ້າສັບປົນຄົນເລກັນໄປ.

<u>**ໜ້າທີ່ການຮັບໃຊ້ໃນພຣະວິຫານ**</u> (1 ກະສັດ 8:27-53)

<u>8:27-30.</u> ຂໍ້ 27-53 ແມ່ນຄວາມທູນຂໍຂອງກະສັດໂຊໂລໂມນ. ເບື້ອງຫລັງຂອງຂໍ້ 27 ແມ່ນເວົ້າເຖິງພຣະວິຫານທີ່ເປັນບ່ອນສັກສິດມີຂອບເຂດ . ແ ຕ່ຢ່າງໃດກໍຕາມ ພຣະເຢໂຮວານັ້ນບໍ່ໄດ້ຢູ່ໃນແຕ່ພຣະວິຫານເທົ່ານັ້ນ ຈະແມ່ນໃນໂລກ ຫລືໃນຟ້າສວັນກໍດີ. ພຣະເຈົ້າມີເສຣີ ແລະຍິ່ງໃຫຍ່ທີ່ຈະສ້າງອັນໃດພຣະອົງຊົງເຮັດໄດ້. ໂລກນີ້ຫລືເມືອງຟ້າບໍ່ສາມາດໃຫ້ພຣະອົງສະຖິດຢູ່ຖ້າຈະທຽບກັບສະງ່າຣາສີ ແລະຄວາມຍິ່ງໃຫຍ່ຂອງພຣະອົງ. ຖ້າວ່າສິ່ງໃຫຍ່ທີ່ສຸດກໍຍັງບໍ່ມາດໃຫ້ພຣະອົງຢູ່ໄດ້ ຕຶກທີ່ມີມະນຸດສ້າງຂຶ້ນນັ້ນແຮ່ງບໍ່ພໍ່ຈະໃຫ້ພຣະອົງສະຖິດຢູ່ໄດ້ເລີຍ. ຄວາມເຂົ້າໃຈເຊັ່ນນີ້ໄດ້ໃຫ້ກໍາລັງໃຈແກ່ພວກຊະເລີຍ ຫລືຂ້າທາດທີ່ຖືກຈັບໄປກຸງບາບີໂລນ ເພາະພວກເຂົາບໍ່ມີໂອກາດທີ່ໄປໃນພຣະວິຫານ (ເພາະພຣະວິຫານນັ້ນໄດ້ຖືກທໍາລາຍໄປແລ້ວ).

ໃນຂໍ້ 28-30, ກະສັດໂຊໂລໂມນ ໄດ້ບອກວ່າຕົນເອງເປັນຜູ້ຮັບໃຊ້, ຜູ້ເປັນຕົວແທນຂອງສາສນາຕໍ່ພຣະພັກຂອງພຣະເຈົ້າ ເພື່ອປະຊາຊົນ. ໂມເຊກໍເປັນຕົວແທນຂອງປະຊາຊົນຕໍ່ພຣະພັກຂອງພຣະເຈົ້າ. ການອ້ອນວອນຂອງ ກະສັດໂຊໂລໂມນ ກໍແມ່ນສືບຕໍ່ຕາມທໍານຽມຂອງໂມເຊ. ຂໍ້ 30 ໄດ້ບອກເຖິງການເປັນທັງສອງຢ່າງຂອງກະສັດໂຊໂລໂມນຕໍ່ພຣະເຈົ້າ ເພິ່ນເປັນຜູ້ຮັບໃຊ້ ແລະ ຕໍ່ປະຊາຊົນເພິ່ນເປັນຕົວແທນ- "ຜູ້ຮັບໃຊ້ພຣະເຈົ້າ ແລະ ຄົນຂອງພຣະອົງ".

ໝາຍເຫດ, ພຣະວິຫານບໍ່ສາມາດບັນຈຸພຣະເຈົ້າໃຫ້ຢູ່ໄດ້, ແຕ່ພຣະນາມອັນສັກສິດຂອງພຣະອົງສາມາດຕິດຢູ່ໃນພຣະວິຫານໄດ້. "ເຣື່ອງພຣະເຈົ້າ" ເປັນເຣື່ອງກ່ຽວຂ້ອງໂດຍກົງກັລພຣະເຢໂຮວາ ແຕ່ບໍ່ໄດ້ຈໍາກັດໃນພຣະວິຫານເທົ່ານັ້ນ. ພຣະອົງເຈົ້າໄດ້ສະຖິດຢູ່ໃນເມືອງຟ້າສວັນ ແຕ່ພຣະເນດຂອງພຣະອົງໄດ້ຈ້ອງນອງເບິ່ງກຸງເຢຣູຊາເລັມ.

ພຣະວິຫານເປັນບ່ອນອະທິຖານ ອ້ອນວອນ ທີ່ພວກອິສຣາເອນເຂົ້າມາທູນຂໍຄວາມຕ້ອງປະສົງໃຫ້ຂຶ້ນໄປຫາພຣະເຈົ້າຜູ້ຮັບຟັງໃນຟ້າສວັນ. ຄໍາທູນຂໍສາມຢ່າງໃນຂໍ້ 30 ບອກເຖິງ "ໄດ້ຍິນ; ຮ້ອງໂຮ; ແລະ ອະພັຍ." ພຣະວິຫານເປັນບ່ອນຈັດໃຫ້ເປັນທາງໄດ້ຮັບການຍົກໂທດ.

<u>**ຄໍາທູນຂໍ 7 ຢ່າງຕໍ່ພຣະເຈົ້າ**</u> (1 ກະສັດ 8:31-53)

ຂໍ້ເຫລົ່ານີ້ປະກອບດ້ວຍຄໍາທູນຂໍ 7 ຢ່າງຕໍ່ພຣະເຈົ້າ. ຕອນນີ້ໄດ້ເວົ້າເຖິງການຮັບໃຊ້ທີ່ເນັ້ນເຖິງການໃຫ້ອະພັຍ. ຫລັກຄວາມເຊື່ອຂອງພວກຢິວອະນຸຍາດໃຫ້ມີການແປແບບໃໝ່ທີ່ຂຶ້ນກັບຄວາມຕ້ອງການຕາມສະພາບການຂອງກຸ່ມຝູງຊົນ. ພວກຢິວທີ່ຖືກຈັບໄປເປັນຊະເລີຍເສິກຕ້ອງການຄໍາຕອບສນອງຕໍ່ຄວາມຜິດພາດແນວນີ້. ຄວາມຕອບສນອງໃນຂໍ້ເຫລົ່ານີ້ໄດ້ເວົ້າເຖິງການຍົກໂທດທີ່ນໍາໄປເຖິງຄວາມເຊື່ອ. ພຣະຄໍາຕອນນີ້ບໍ່ໄດ້ເວົ້າເຖິງພຣະວິຫານອີກແລ້ວ ແລະໄດ້ເວົ້າເຖິງຝູງຊົນທີ່ຖືກຈັບໄປເປັນທາດ ພວກເຂົາກໍາລັງລໍຄອຍອະນາຄົດອັນໃໝ່ຈາກພຣະເຢໂຮວາ. ອະນາຄົດນັ້ນໄດ້ມາເຖິງພວກເຂົາຍ້ອນມີການອະພັຍ ຍົກໂທດໃຫ້.

8:31-32. ເປັນຄຳທູນຂໍອັນນຶ່ງເພື່ອໃຫ້ພຣະເຢໂຮວາຕັດສິນຢ່າງຢຸດຕິທັມ. ຜູ້ສັກສິດຄວນໄດ້ຍິນຄະດີ ແລະເປັນຜູ້ຕັດສິນ. ນີ້ແມ່ນການທູນຂໍພຣະຄຸນທີ່ເຕັມໄປດ້ວຍຄວາມເມດຕາ. ພຣະວິຫານກາຍເປັນບ່ອນທີ່ຜູ້ເຂົ້ານະມັສການໄດ້ຮັບການອະພັຍໃຫ້ຈາກຜູ້ສັກສິດອົງແທ້ຈິງ.

ຄຳເວົ້າທີ່ອ້າງເຖິງ "ບາບ" ໄດ້ບອກວ່າຄວາມບາບໄດ້ເກີດຂຶ້ນມາ. ຜົນເສັຽຫາຍໄດ້ເກີດຂຶ້ນມາແລ້ວ. "ຄວາມສາບານ" ປະກອບດ້ວຍຄຳສາບແສ່ງຕໍ່ຜູ້ທີ່ເຮັດຜິດ. ພວກອິສຣາເອນໄດ້ສືບຕໍ່ຄຳສັນຍາກັບພຣະເຈົ້າໄດ້ໃນເມື່ອພວກເຂົາໄດ້ສາລະພາບຄວາມຜິດບາບທັງສິ້ນ.

ຄຳກິຣິຍາ "ຕັດສິນ" ໃນຕອນນີ້ບໍ່ແມ່ນໃຊ້ແປໃນກົດໝາຍ. ແຕ່ແມ່ນຮ້ອງໃຫ້ພຣະເຈົ້າປົດປ່ອຍຄົນຂອງພຣະອົງຈາກພາວະສຸກເສີນຕ່າງໆ. ໃນການຕັດສິນຄວາມບາບ, ພຣະເຈົ້າໄດ້ກະທຳຢ່າງຖືກຕ້ອງ ແລະເຮັດໃຫ້ພວກອິສຣາເອນມີເປົ້າໝາຍແລະຈຸດປະສົງຢ່າງສັກສິດດີ.

ຄຳເວົ້າ "ຄວາມຜິດ" ແລະ "ສິນທັມ" ໄດ້ບອກເຖິງຄວາມໝາຍພິເສດໃນຕອນນີ້. "ສິນທັມ" ແປວ່າ ສົມຄວນ ຫລືມີຄວາມສາມາດຕາມທັມມະຊາດທີ່ຈະບອກເຖິງຈຸດປະສົງ. ຄົນສິນທັມຮັກສາຄຳໝັ້ນສັນຍາແລະສ້າງຄວາມສຳພັນກັບອົງພຣະຜູ້ເປັນເຈົ້າ. ແຕ່ຕົງກັນຂ້າມ, ຄວາມເວົ້າ "ຄວາມຜິດ" ເວົ້າເຖິງຜູ້ຄົນທີ່ໄດ້ແຍກຕົວອອກຈາກກຸ່ມຄົນຂອງພຣະເຈົ້າຜູ້ຮັກສາຄຳສັນຍາກັບພຣະອົງ.

8:33-34. ຄຳທູນຂໍອັນທີສອງໄດ້ເວົ້າເຖິງເຄາະກັມຂອງຊາດ. ອີງຕາມຫລັກຄວາມເຊື່ອຈາກປຶ້ມ 2 ພຣະບັນຍັດສອນວ່າເຄາະກັມຂອງຊາດນີ້ແມ່ນຄຳລົງໂທດຄວາມຜິດບາບຈາກພຣະເຈົ້າ. ຜູ້ທີ່ທູນຂໍນີ້ໄດ້ຍອມຮັບສະພາບເຖິງການກະທຳຄວາມຜິດ. ຜົນທີ່ຕ້ອງເຮັດນັ້ນຄື: "ກັບຄືນ"; "ສາລະພາບ" ; "ອ້ອນວອນ"; ແລະ "ຮ້ອງຂໍ." ຄຳເວົ້າກັບຄືນນີ້ເປັນຄຳສຳຄັນຕໍ່ພວກທີ່ຖືກຈັບໄປເປັນທາດ. ອະນາຄົດຂອງພວກອິສຣາເອນຂຶ້ນກັບການປ່ຽນທາງເດີນແລະຕ້ອນຮັບເອົາພຣະເຢໂຮວາ. ຄຳສາລະພາບນີ້ເກີດຂຶ້ນໃນບ້ານເຮືອນນີ້. ພຣະເຢໂຮວາຕອບຄວາມທູນຂໍຄືພຣະອົງ "ໄດ້ຍິນ, ໃຫ້ອະພັຍ ແລະໃຫ້ເຂົາຄືນດີໃນສະພາບເດີມ." ໃຫ້ຈຳໄວ້ວ່າພຣະເຈົ້າມີພຣະທັຍທີ່ຈະໃຫ້ອະພັຍສເມີ. ຜົນຈາກການທີ່ໃຫ້ອະພັຍນີ້ເຮັດໃຫ້ກັບຄືນດີອີກເໝືອນເດີມ. ໃນທີ່ສຸດພຣະເຢໂຮວາກໍຈະປະທານໃຫ້ພວກເຂົາກັບຄືນໄປຍັງແຜ່ນດິນທີ່ພວກເຂົາໄດ້ສູນເສັຽໄປຍ້ອນຄວາມຜິດບາບ.

8:35-36. ການທູນຂໍອັນທີສາມແມ່ນເວົ້າເຖິງພັຍທັມມະຊາດຂອງດິນຟ້າແຫ້ງແລ້ງ. ພວກອິສຣາເອນໄດ້ຕີຄວາມໝາຍຝົນຕົກທັງທີ ແລະຝົນຕົກສຸດທ້າຍແມ່ນພຣະພອນຈາກພຣະເຢໂຮວາ. ແຕ່ພວກເຂົາຍັງຕີຄວາມໝາຍອີກແນວໃໝ່ວ່າຖ້າຂາດຝົນຕົກລົງມາກໍແມ່ນການລົງໂທດຈາກພຣະເຈົ້າ. ພຣະເຢໂຮວາເປັນຜູ້ບັງຄັບບັນຊາທັມມະຊາດທຸກໆຢ່າງໃນຊາດອິສຣາເອນ.

8:37-40. ການທູນຂໍອັນທີສີ່ແມ່ນເວົ້າເຖິງພັຍທັມມະຊາດ. ລຳດັບຂອງພັຍທັມມະຊາດນີ້ແປກໃນແຜ່ນດິນປະເທດການາອານ. ມັນອາດເກີດຂຶ້ນໂດຍທີ່ບໍ່ມີນ້ຳ ຫລືນ້ຳນັ້ນຖືກເຮັດໃຫ້ສົກກະປົກ. ເປັນບ່ອນຄົນສັນຈອນໄປມາຫລາຍໃກ້ທິດຕາເວັນອອກ, ປະເທດປາແລສຕິນເປັນບ່ອນຕິດພະຍາດຕ່າງໆໄດ້ໂດຍງ່າຍ. ພະຍາດເຫລົ່ານີ້ອາດຖືກລົມພັດເຂົ້າມາທາງທະເລຊາຍໃນທິດຕາເວັນອອກໄດ້ ໂດຍສະເພາະແມ່ນເດືອນ 5-10. ມີນ້ຳຫລາຍໃນຍາມໃບໄມ້ປົ່ງແລະບາງຄັ້ງໃນຍາມຮ້ອນເຮັດໃຫ້ມີໝອກລາຍ. ຝູງແມງຕັກແຕນໄດ້ໄຂ່ໃນປ່າໄມ້ເຮັດໃຫ້ປະເທດປາເລສຕິນໄດ້ຮັບພະຍາດບາດເຍົາໄດ້ງ່າຍ. ເໝືອນດັ່ງຜູ້ປະກາດ ໂຈເອນໄດ້ໃຊ້ພວກຕັກແຕກເປັນພາບໃຫ້ເຂົ້າໃຈເຖິງການລົງໂທດຂອງພຣະເຢໂຮວາ.

ຄຳອ້ອນວອນໃນຂໍ້ 38 ໄດ້ບອກເຖິງພັຍທັມມະຊາດນັ້ນເປັນຂອງສ່ວນຕົວບຸກຄົນ - "ໃຜກໍຕາມ." ການທູນຂໍນັ້ນຮ້ອງໃຫ້ພຣະເຢໂຮວາຈົ່ງກະທຳຕາມຈິດໃຈຂອງຄົນນັ້ນ.

8:41-43. ຄຳທູນຂໍອັນທີຫ້າໄດ້ບອກເຖິງເຫດແລະສະພາບການທີ່ເຮັດໃຫ້ພວກອິສຣາເອັນຖືກຈັບເປັນທາດ. ພວກຕ່າງຊາດນັ້ນແມ່ນຄົນທີ່ບໍ່ໄດ້ຢູ່ໃນແຜ່ນດິນ ຜູ້ໄດ້ຍິນເຣື່ອງພຣະເຢໂຮວາແລະເຂົ້າມານະມັສການພຣະອົງ.

ຄຳອ້າງເຖິງຄວາມຍິ່ງໃຫຍ່ຂອງພຣະເຢໂຮວານັ້ນແມ່ນພຣະພັກຂອງພຣະເຈົ້າຜູ້ສັກສິດ. ຄຳຮູ້ເຖິງພຣະເຈົ້ານັ້ນໄດ້ແຜ່ຂຍາຍໄປເຖິງຊາຍແດນເພາະຍ້ອນມີພຣະວິຫານທີ່ໄດ້ຖືກສ້າງຂື້ນ.

ພຣະເຢໂຮວາໄດ້ຕອບຄຳທູນຂໍຂອງພວກຕ່າງດ້າວ ເຖິງຈະເປັນຢ່າງໃດກໍຕາມເຣື່ອງດັ່ງກ່າວນັ້ນຈະແຜ່ອອກໄປຂ້າງນອກຊື່ສຽງຂອງພຣະເຢໂຮວາກໍຂື້ນກັບການຕອບສນອງຂອງພຣະອົງຕໍ່ຄົນພວກນີ້.

8:44-45. ສົງຄາມແລະການຊະນະແມ່ນການທູນຂໍອັນທີຫົກ. ສະພາບການເປັນທາດຂອງກຸງບາບີໂລນກໍມີພາກສ່ວນໃນການທູນຂໍໃນເຣື່ອງນີ້. ປະວັດສາດຂອງພວກອິສຣາເອນໄດ້ເວົ້າເຖິງໜ້າທີ່ສັກສິດຂອງຜູ້ເຂົ້າສູ່ສົງຄາມໃນນາມພຣະເຢໂຮວາ. ຕໍ່ມາເຖິງສມັຍກະສັດປົກຄອງຣາຊແຜນດິນ ທະຫານຜູ້ມີອາຊີບເຮັດເສິກ ເວລາມີສົງຄາມພວກເຂົາກໍໄດ້ໄປສູ່ສນາມຮົບແທນໜ້າທີ່ອັນສັກສິດຂອງຜູ້ຊາຍທຸກໆຄົນໃນພວກອິສຣາເອນ. ຝູງຊົນຕ້ອງຕື່ນຕົວຖິ້ມໃຈເກົ່າແລະເອົາໃຈໃໝ່. ພວກເຂົາຄວນທູນຂໍໃຫ້ພຣະເຢໂຮວາຕັດສິນຜົນງານຂອງພວກ ເຂົາ.

8:46-53. ການທູນຂໍ້ອັນທີເຈັດເປັນຂໍ້ເຕືອນວ່າທຸກໆຄົນໄດ້ເຮັດຜິດບາບ. ຄວາມບາບນຳໄປເຖິງການຟ່າຍແພ້ ແລະເຮັດໃຫ້ເປັນທາດ. ພວກອິສຣາເອນພ້ອມດ້ວຍເພື່ອນບ້ານໃກ້ຄຽງມີພາກສ່ວນເຮັດໃຫ້ໄດ້ຮັບຄວາມຈິບຫາຍ-ຄືການການເປັນທາດ-ຖືກພຣະພິໂຣດຂອງພຣະເຈົ້າ.

ຂໍ້ນີ້ 47 ໄດ້ເລີ້ມຕົ້ນດ້ວຍ, "ຖ້າພວກເຂົາໄດ້ກັບໃຈໃໝ່" ໝາຍເຖິງການສາລະພາບຄວາມຜິດ. ໃນເມື່ອຝູງຊົນໄດ້ຮັບຄວາມທຸກທໍຣະມານນອກແຜ່ນດິນແຫ່ງພຣະສັນຍາ. ການໃຫ້ອະພັຍໂທດນັ້ນຕ້ອງຂື້ນກັບການສາລະພາບຜິດ ໝົດຫົວໃຈ. ຄຳເວົ້າໃນຂໍ້ 48 ຂໍຮ້ອງໃຫ້ທຸກໆຄົນສາລະພາບຄວາມຜິດບາບຂອງຕົນເອງ.

ການອ້ອນວອນຕໍ່ອົງພຣະຜູ້ເປັນເຈົ້າໃຫ້ມີຄວາມເມດຕາຕອບສະນອງຄຳທູນຂໍອັນທີເຈັດ. ຄຳເວົ້າແປ "ລ່ວງລ້ຳ" ( 1 ກະສັດ 8:50) ໄດ້ບອກເຖິງການແກ້ງກະບົດຕໍ່ພຣະປະສົງຂອງພຣະເຈົ້າ. ເຖິງແມ່ນການຕັ້ງໃຈເຮັດຄວາມຜິດ ກະສັດໂຊໂລໂມນໄດ້ຮ້ອງຂໍໃຫ້ພຣະເຈົ້າມີຄວາມເມດຕາປານີ. ຄວາມຈິງ ເພິ່ນໄດ້ຮ້ອງຂໍໃຫ້ພຣະຜູ້ເປັນເຈົ້າສະແດງຄວາມສົງສານຕໍ່ມະນຸດຊາດ ເພາະພວກຄົນເຫລົ່ານີ້ເປັນມູນມໍລະດົກຂອງພຣະເຢໂຮວາເອງ. ໝາຍຄວາມວ່າເປັນສິ່ງດີທີ່ພຣະເຢໂຮວາຄວນມີຄວາມເມດຕາສົງສານ.

## ໃຫ້ເອົາໃຈໃສ່ຕໍ່ຄວາມໝາຍ

ການອ້ອນວອນອາດເປັນສິ່ງເຫັນແກ່ຕົວ ຫລືເປັນຫ່ວງຕໍ່ຄວາມຕ້ອງການຂອງຄົນອື່ນ. ກະສັດໂຊໂລໂມນໄດ້ອ້ອນວອນເພື່ອປະຊາຊົນຂອງເພິ່ນ. ການທ້າທາຍປະຈຳອາທິດນີ້ແມ່ນໃຫ້ທ່ານອ້ອນວອນເພື່ອຄົນອື່ນ ບໍ່ແມ່ນເພື່ອແຕ່ຕົນເອງ ແລະໃຫ້ສັງເກດເບິ່ງວ່າທ່ານຈະໄດ້ຮັບສິ່ງໃດຈາກອົງພຣະຜູ້ເປັນເຈົ້າ.

ກະສັດໂຊໂລໂມນອ້ອນວອນນັ້ນເປັນຜົນຈາກຫລັກຄວາມເຊື່ອຂອງເພິ່ນ. ເພິ່ນໄດ້ສອນປະຊາຊົນໂດຍຜ່ານການອ້ອນວອນຂອງຕົນ. ທ່ານອາດຈະໄດ້ຮຽນເຖິງຫລັກຄວາມເຊື່ອຈາກບົດເພງທີ່ໃຊ້ໃນການນະມັສການ ແລະຈາກການອ້ອນວອນຂອງຜູ້ນຳນະມັສການນັ້ນ.

## <u>ແຜນການສອນ</u>

### ໃຫ້ກ່ຽວຂ້ອງກັບຊີວິດ.

1. ກ່ອນສອນໃຫ້ຊອກຫາຄົນເວົ້າເຣື່ອງທ່ານ ເປໂຕ ມາໂຊ ທີ່ກ່າວໃນຕອນບົດແນະນຳ. ບອກໃຫ້ຄົນອະທິບາຍເພີ້ມໂດຍຊອກເອົາເຣື່ອງຂອງທ່ານຈາກ ອິນເຕີແນດຫລືປື້ມເຖິງຜູ້ຊາຍຄົນນີ່ງຊື່ ທ່ານ ເປໂຕ ມາໂຊ. ບອກໃຫ້ຄົນນັ້ນເວົ້າບໍ່ໃຫ້ເກີນສອງນາທີ.

2. ເລີ້ມສຶກສາໃຫ້ຖາມຄົນໃນຫ້ອງວ່າພວກເຂົາໄດ້ຈຳທ່ານ ເປໂຕ ມາໂຊບໍ່. ຖ້າໃຜຈື່ໄດ້ກໍຂໍຮ້ອງໃຫ້ເວົ້າໃຫ້ຄົນອື່ນຟັງສັ້ນໆບໍ່ໃຫ້ຍາວເກີນຄວນ.

3. ໃຫ້ຂຽນຄຳຖາມສອງຄຳນີ້ໃສ່ໃນກະດານ:

ກ. ການອ້ອນວອນຂອງຂ້າພະເຈົ້າຄວນເປັນແນວໃດຕໍ່ພຣະເຈົ້າ?

ຂ. ຂ້າພະເຈົ້າຕ້ອງການປ່ຽນແປງວິທີທາງອ້ອນວອນຫລືບໍ່?

4. ບອກໃຫ້ສຶກສາຈາກ 1 ກະສັດ 5-7 ຈົນເຖິງບົດ "ສ້າງພຣະວິຫານຂອງພຣະເຈົ້າ" (1 ກະສັດ 5-7) ບອກໃຫ້ຄົນຕອບຕາມຄຳຖາມຕໍ່ໄປນີ້:

- ເປັນດ້ວຍເຫດໃດກະສັດໂຊໂລໂມນຈິ່ງເປັນຄົນສ້າງພຣະວິຫານແທນທີ່ຈະແມ່ນຜູ້ເປັນບິດາ?
- ສິ່ງຂອງຢ່າງໃດທີ່ກະສັດດາວິດໄດ້ຈັດຫາໃຫ້ເພື່ອຜູ້ເປັນລູກໃຊ້ໃນການສ້າງພຣະວິຫານນັ້ນ?
- ແມ່ນໃຜທີ່ກະສັດໂຊໂລໂມນໄດ້ໃຊ້ໃນການສ້າງພຣະວິຫານ?
- ໃຊ້ເວລາເທົ່າໃດການສ້າງພຣະວິຫານຈຶ່ງສຳເຣັດລົງ?

5. ນຳພາໃຫ້ຄົນອ່ານໃນໃຈ 1 ກະສັດ 8:1-11 ເຖິງການຖວາຍພຣະວິຫານ. ບອກໃຫ້ຜູ້ໃດຜູ້ນື່ງເວົ້າອອກມາວ່າແມ່ນຫຍັງໄດ້ເຂົ້າມາໃນສມອງເວລາອ່ານຢູ່ນັ້ນ.

6. ນຳພາໃຫ້ຄົນອ່ານ 1 ກະສັດ 8:22-30 ໃນກຸ່ມນັກຮຽນໃນຫ້ອງຮຽນຟັງຄຳອ້ອນວອນຂອງກະສັດໂຊໂລໂມນທີ່ເວົ້າເຖິງເຣື່ອງພຣະເຈົ້າ. ຖາມຄຳຖາມດັ່ງຕໍ່ລົງໄປນີ້:

- ກະສັດໂຊໂລໂມນໄດ້ເວົ້າເຖິງພຣະເຈົ້າຢ່າງໃດ?
- ຄຳສັນຍາອັນໃດທີ່ກະສັດໂຊໂລໂມນໄດ້ອ້າງເຖິງ?

7. ບອກໃຫ້ຄົນໃນຫ້ອງຊອກຫາຄຳທູນຂໍເຈາະຈົງຂອງກະສັດໂຊໂລໂມນ 1 ກະສັດ 8:31-51 ໃຫ້ໃຊ້ຄຳຖາມຕໍ່ໄປນີ້:

- ເມື່ອໃດເພື່ອນບ້ານເປັນຄົນຜິດ (8:31-32)
- ເມື່ອໃດເປັນການເສັຽຊັຍໃນສົງຄາມ ( 8:33-34)

- ເມື່ອໃດຕ້ອງການຝົນ (8:35-36)
- ເມື່ອໃດພັຍທັມມະຊາດໄດ້ເກີດຂຶ້ນ (8:37-40)
- ເມື່ອໃດພວກຕ່າງຊາດເຂົ້າມາອ້ອນວອນໄດ້ (8:41-43)
- ເມື່ອໃດຄວນເຮັດເສິກສົງຄາມ (8:44-45)
- ເມື່ອໃດຕ້ອງການສາລະພາບຄວາມຜິດບາບ (8:46-51).

*ດຣ. ບູນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 3
## ການເລືອກແບບໂງ່ໆຂອງຜູ້ນຳຄົນນຶ່ງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ກະສັດ 12: 1-20

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 1 ກະສັດ 11-- 12; 14: 21-31

**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອຜູ້ນຳຕັດສິນໃຈແບບໂງ່ຈ້າ ຜົນຮັບອອກມາກໍຄືພັຍພິບັດທີ່ບໍ່ສິ້ນສຸດ.

**ຄຳຖາມເພື່ອການສຳຣວດ:** ຂ້ອຍຂ້າຈະເປັນຜູ້ນຳ ແລະຜູ້ນຳຈະເປັນຂ້ອຍຂ້າໄດ້ວິທີໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບັລຍາຍເຖິງການຕັດສິນໃຈແບບໂງ່ຈ້າຂອງເຣໂຣໂບອາມ ແລະຜົນທີ່ຕິດຕາມມາສຳລັບມື້ນີ້.

### ແຜນສຳລັບການສອນ

**ນຳບົດຮຽນເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ແນະນຳບົດຮຽນໂດຍເວົ້າວ່າ: ມື້ນີ້ ພວກເຮົາຈະເບິ່ງວ່າເປັນຫຍັງບາງຢ່າງປ່ຽນຈາກດີເປັນຮ້າຍຢ່າງວ່ອງໄວໄດ້ວິທີໃດ. ສັງເກດເບິ່ງຊື່ບົດຮຽນ ບົດທີ 3 ແລະ 4.

2. ໃຫ້ຜູ້ນຶ່ງອ່ານ ຈຸດສຳຄັນຂອງບົດຮຽນນີ້ ແລະໃຫ້ເວລາພິຈາຣະນາ, "ເມື່ອຜູ້ນຳຕັດສິນໃຈແບບໂງ່ຈ້າຜົນຮັບອອກມາກໍຄືພັຍພິບັດທີ່ບໍ່ສິ້ນສຸດ." ຊັກຊວນໃຫ້ທຸກຄົນຄິດແລ້ວຖາມວ່າ, ແມ່ນຫຍັງຈະເກີດຂຶ້ນກັບລູກໆ ເວລາພໍ່ແມ່ໄດ້ຕັດສິນໃຈຜິດ? ເຕືອນນັກຮຽນວ່າ: ພວກເຮົາຢູ່ໃກຈາກການເປັນຄົນທີ່ບໍ່ມີພຣະເຈົ້າ ພຽງຄົນລຸ້ນດຽວ.

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

3. ຂຽນຫົວຂໍ້ໃຫຍ່ໃສ່ກະດານ:
   (1) ຄວາມໂງ່ຈ້າຂອງກະສັດໂຊໂລໂມນ (11:1-43)
   (2) ການຕັດສິນໃຈຢ່າງໂງ່ຈ້າຂອງເຣໂຣໂບອາມ (12:1-20)
   (3) ລູກກັບພໍ່ບໍ່ຕ່າງຫຍັງກັນ (14:21-31)

4. ພິຈາຣະນາ ຫົວຂໍ້ທີນຶ່ງ. ໃຫ້ທຸກຄົນເບິ່ງພຣະທັມ 43 ຂໍ້ແບບໄວໆ. ສລຸບເຣື່ອງຄວາມໂງ່ຂອງໂຊໂລໂມນໃຫ້ນັກຮຽນຟັງ. ຖາມ: ໂຊໂລໂມນ ມີຈຸດເສັຽຫຍັງແດ່ໃນຕອນນີ້? ຖາມ: ທ່ານມີຈຸດອ່ອນປະເພດນີ້ບໍ່?

5. ໃຫ້ຜູ້ນຶ່ງອ່ານ 1 ກະສັດ 12: 1-20 ແລະໃຫ້ທຸກຄົນຟັງເບິ່ງຄວາມໂງ່ຂອງເຣໂຣໂບອາມໃນການຕັດສິນໃຈ. ຂຽນຄວາມໂງ່ຂອງເຂົາໃສ່ກະດານ ແລ້ວອະທິບາຍ. ຄຳຕອບອາດຈະມີໃນທຳນອງນີ້:
   - ຕິດຕາມການປະພຶດຂອງພໍ່ທີ່ບໍ່ຖືກຕ້ອງຕໍ່ຂອງພຣະເຈົ້າ
   - ຕັດສິນໃຈແບບເຫັນແກ່ຕົວ
   - ຮັບເອົາການປຶກສາທີ່ໂງ່ຈ້າ
   - ລືມວ່າຜູ້ນຳທີ່ດີຄືຜູ້ຮັບໃຊ້

ຖາມ: ເຢໂຣໂບອາມໄດ້ມີສ່ວນຫຍັງບໍ່ໃນການຕັດສິນໃຈນີ້? ຫລັງຈາກນັ້ນ ລາວຕັດສິນໃຈເຮັດຫຍັງ?

6. ໃຫ້ຜູ້ນຶ່ງອ່ານ 1 ກະສັດ 14: 21-31. ຖາມ: ປະເທດຢູດາຢູ່ໃນສະພາບໃດ ພາຍໃຕ້ການປົກຄອງຂອງເຣໂຣໂບອາມ? ທຸກຄົນຈົດຈຳເຣື່ອງຫຍັງເວລາເອີ່ຍຊື່ ກະສັດເຣໂຣໂບອາມ?

## ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

7. ຖາມ: ມີຫຍັງແດ່ທີ່ພວກເຮົາໄດ້ຮຽນຈາກຊີວິດຂອງ ເຣໂຣໂບອາມ? ເບິ່ງພາກສຸດທ້າຍຂອງບົດຮຽນໃນຫົວຂໍ້ "ລູກກັບພໍ່ບໍ່ຕ່າງຫຍັງກັນ" ໃນບົດຮຽນ.
   - ການປະພຶດທຸກຢ່າງມີຜົນສະທ້ອນ
   - ການປະພຶດມີນ້ຳໜັກຫລາຍກວ່າຄຳເວົ້າ
   - ຈົ່ງຮຽນຈາກຄວາມຜິດພາດ ແລະຈົ່ງເປັນຜູ້ນຳແບບຜູ້ຮັບໃຊ້

   ຖາມ: ຜູ້ນຳແບບຜູ້ຮັບໃຊ້ ໝາຍເຖິງຫຍັງ?

8. ຕັ້ງຄຳຖາມ ໂດຍໃຊ້ຄຳຖາມທີ 1 ໃນທ້າຍຂອງບົດຮຽນ, ຜູ້ນຳໃນຄຣິສຕະຈັກຈະເປັນຕົວຢ່າງໃຫ້ຄົນອື່ນໆໄດ້ວິທີໃດແດ່? ຖາມ: ພໍ່ແມ່ຈະເປັນຕົວຢ່າງໃຫ້ລູກແນວໃດ? ຖາມ: ມີຫລັກຂອງຜູ້ນຳທີ່ດີແນວໃດແດ່ທີ່ທ່ານສັງເກດເຫັນ ຈາກວິທີຜິດທີ່ເຣໂຣໂບອາມໄດ້ເລືອກໃນພຣະທັມຕອນນີ້? ເຂົາໄດ້ເຮັດຫຍັງແດ່ທີ່ຖືກຕ້ອງ?

9. ພານັກຮຽນອ້ອນວອນອະທິຖານ ໂດຍໃຊ້ຄຳຖາມຕໍ່ໄປນີ້ເພື່ອນຳພາ:
   - ທ່ານໄດ້ເປັນຜູ້ນຳແບບຜູ້ຮັບໃຊ້ບໍ່?
   - ທ່ານໄດ້ເປັນຜູ້ນຳແບບຜູ້ຮັບໃຊ້ບໍ່ ໃນຄຣິສຕະຈັກ? ໃນສັງຄົມ? ໃນທີ່ທຳງານ?
   - ເປັນຫຍັງຈຶ່ງເປັນ ແລະເປັນຫຍັງຈຶ່ງບໍ່ເປັນ?
   - ທ່ານຕ້ອງເຮັດຫຍັງແດ່ເພື່ອຈະເປັນຜູ້ນຳແບບຜູ້ຮັບໃຊ້?
   - ທ່ານເປັນຕົວຢ່າງແນວໃດໃຫ້ຄົນອື່ນໆ ເຣື່ອງການເປັນຜູ້ນຳແບບຜູ້ຮັບໃຊ້?
   - ທ່ານຈະເປັນຕົວຢ່າງທີ່ດີໃຫ້ກັບລູກ / ຫລານໄດ້ວິທີໃດ?
   - ທ່ານຈະຊ່ວຍຄຣິສຕະຈັກຂອງທ່ານ ແລະຜູ້ນຳໃຫ້ເປັນແບບຢ່າງທີ່ຖືກຕ້ອງໄດ້ວິທີໃດແດ່?

ອະທິຖານປິດ.

*ດຣ. ສິດນີ ຄານ*

# ບົດແນະນຳຄຣູສອນ
# ບົດຮຽນທີ 4
# ເຮັດຊົ່ວເຫັນຜົນໄວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ກະສັດ 15:9-19; 16:29-33
**ພູມຫລັງຂອງພຣະຄັມພີ:** 1 ກະສັດ 15:1--16:34
**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ນຳບໍ່ດີ, ປະຊາຊົນຮັບເຄາະ
**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະປ້ອງກັນສິ່ງຊົ່ວທີ່ເກີດຂຶ້ນໃນປະຫວັດສາດບໍ່ໃຫ້ເກີດຂຶ້ນແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອໄຈ້ແຍກເບິ່ງຊີວິດຂອງອາຊາ ແລະອາຮາບ ກັບຜູ້ນຳວັນນີ້.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ສອນສະມາຊິກໃຫ້ກາຍເປັນຜູ້ຮັບໃຊ້.

## ບົດນຳ

ເນື່ອງຈາກວ່າບົດຮຽນທີ່ເຮົາກຳລັງຈະເວົ້າໃນຕອນນີ້ມີເຈົ້າຊີວິດຢູດາໜຶ່ງຄົນ ແລະເຈົ້າຊີວິດຂອງອິສຣາເອນອີກຫົກຄົນດັ່ງນັ້ນຈຶ່ງຂໍແນະນຳໃຫ້ຄຣູສອນຢ່າງຣະມັດຣະວັງ ໂດຍສເພາະແມ່ນຊື່ຂອງກະສັດເປັນລຳດັບກັນມາ.

## 1. ອ່ານ 15:9-24 ຄວາມດີຂອງເຈົ້າຊີວິດແຫ່ງຢູດາ

ກ. ເຈົ້າອາບີຢາພໍ່ຂອງກະສັດອາຊາເປັນກະສັດແຫ່ງຢູດາພຽງສາມປີແລະເຮັດບາບ (15:2)
ຂ. ເຈົ້າອາຊາເປັນເຈົ້າຊີວິດຢູດາ, ປົກຄອງດ້ວຍຄວາມຮົ່ມເຢັນ 41 ປີ ຈາກປີກ່ອນ ຄສ 913-673 (15:9).
ຄ. ຄວາມດີຂອງກະສັດອາຊາທີ່ເຮັດໃຫ້ພຣະເຈົ້າພໍພຣະທັຍຄື;

1. ການປົກຄອງເບື້ອງຕົ້ນ 10 ປີທຳອິດນັ້ນເພິ່ນໄດ້ແກ້ໄຂດັດແປງການປົກຄອງແລະເນັ້ນໜັກໄປທາງການນັບຖືພຣະເຈົ້າຫລືສິ່ງເສີມສາສນາກວ່າສິ່ງໃດໆ.
2. ເພິ່ນໄດ້ກວາດລ້າງບັນດາໂສເພນີແລະພວກຂາບໄຫວ້ພຣະທຽມອອກຈາກດິນແດນຢູດາ (ຂໍ້ 12).
3. ເພິ່ນໄດ້ປົດນາງມາອາກາ ອອກຈາກຕຳແໜ່ງແມ່ເມັຽຂອງກະສັດ (ຂໍ້ 13).

## 2. ອ່ານ 15:25--16:28 ຄວາມຊົ່ວຂອງເຈົ້າຊີວິດອິສຣາເອນ

ກ. ເຈົ້ານາດາບເປັນກະສັດຂອງອິສຣາເອນພຽງສອງປີແລ້ວເຮັດບາບ (ຂໍ້ 25-26)
ຂ. ເຈົ້າບາອາຊາກະສັດຂອງເຜົ່າອິດຊາຄາໄດ້ຂ້າກະສັດນາດາບແລ້ວຂຶ້ນເປັນກະສັດແທນ (ຂໍ້ 27-27).
ຄ. ເຈົ້າບາອາຊາເປັນກະສັດແລ້ວສັ່ງຂ້າທັງໂຄດຂອງກະສັດເຢໂລໂບອາມ ເພາະວ່າກະສັດເຢໂລໂບອາມເຮັດການຊົ່ວເປັນຕົ້ນເຫດໃຫ້ພຣະເຈົ້າໂກດຮ້າຍ (ຂໍ້ 28-31).

ງ. ເຈົ້າບາອາຊາປົກຄອງໄດ້ 24 ປີ ແລະເຮັດບາບ ແລ້ວພຣະເຈົ້າສົ່ງຜູ້ປະກາດພຣະທັມເຢຮູໄປບອກເຄາະຮ້າຍທີ່ເກີດຂຶ້ນກັບຄອບຄົວເຈົ້າບາອາຊາ ບົດ16 ດັ່ງນີ້;

1. ຄົນໃດໃນຄອບຄົວຂອງບາອາຊາທີ່ຕາຍໃນເມືອງຈະຖືກໝາກັດກິນ (16:4ກ).
2. ຄົນໃດໃນຄອບຄົວຂອງບາອາຊາທີ່ຕາຍນອກເມືອງຈະຖືກແຮ້ງເຈາະກິນ (16:4ຂ).
3. ເຫດຮ້າຍນີ້ເກີດຂຶ້ນເພາະເພິ່ນເຮັດຊົ່ວຮ້າຍຄືກະສັດເຢໂລໂບອາມ ແລະສັງຫານລ້າງໂຄດກະສັດເຢໂລໂບອາມອີກ (16:7)

ຈ. ເມື່ອເຈົ້າບາອາຊາຕາຍແລ້ວ ເຈົ້າເອລາລູກຊາຍຂຶ້ນເປັນກະສັດແທນ ພຽງສອງປີນາຍພົນສິມລີກໍລອບສັງຫານເຈົ້າເອລາ (16:8-10).

ສ. ນາຍພົນສິມລີເປັນກະສັດແລ້ວສັ່ງຂ້າທຸກຄົນໃນຄອບຄົວກະສັດບາອາຊາ (16:11). ເຫດການນີ້ໄດ້ເປັນໄປຕາມຜູ້ປະກາດພຣະທັມເຢຮູໄດ້ກ່າວໃນ 16:1-4.

ຊ. ສິມລີເປັນກະສັດພຽງເຈັດມື້ເທົ່ານັ້ນ ພວກທະຫານຂອງກະສັດເອລາລູກຂອງກະສັດບາອາຊາໄດ້ຍິນຂ່າວເຣື່ອງສິມລີລອບສັງຫານກະສັດເອລາຈຶ່ງຍົກທັບມາໂຈມຕີ ຈົນເປັນຕົ້ນເຫດໃຫ້ກະສັດສິມລີຈູດເຜົາພຣະຣາຊວັງແລະທັງເຜົາຕົນເອງໃນທີ່ນັ້ນ (16:15-19).

ຍ. ເມື່ອຊະນະແລ້ວນາຍພົນອົມລີກໍຂຶ້ນເປັນກະສັດແທນເຖິງ 12 ປີ ແລະຕໍ່ມາເພິ່ນກໍເຮັດບາບຕໍ່ພຣະຜູ້ເປັນເຈົ້າ ຢ່າງຮ້າຍແຮງໂດຍນໍາພາອິສຣາເອນຂາບໄຫວ້ຮູບໂຄຣົບ (16:21-28).

ດ. ເມື່ອກະສັດອົມລີຕາຍແລ້ວ ລູກຊາຍຂອງເພິ່ນຊື່ເຈົ້າອາຮາບກໍຂຶ້ນເປັນກະສັດແທນ ແລະປົກຄອງເປັນເວລາ 22 ປີ ແລ້ວເພິ່ນກໍເຮັດຜິດຮ້າຍແຮງຫລາຍກວ່າກະສັດອົງອື່ນໆເພີ້ມເຕີມດັ່ງນີ້;

1. ເອົານາງເຢເສເບັນລູກສາວຂອງຊີໂດນມາເປັນເມັຽ, ຊຶ່ງນາງໄດ້ນໍາເອົາພຣະບາອານເຂົ້າມາເພື່ອໃຫ້ອິສຣາເອນຂາບໄຫວ້(16:31).
2. ກະສັດອົມລີເອງກໍຂາບໄຫວ້ (16:31).
3. ສ້າງແທ່ນບູຊາພຣະທຽມໃນພຣະວິຫານຂອງພຣະເຈົ້າ (16:32)
4. ສ້າງຮູບເຈົ້າແມ່ອາເຊລາ

ປະຫວັດສາດຂອງຜູ້ນໍາອິສຣາເອນເປັນມາດັ່ງນັ້ນ, ພວກຜູ້ນໍາເຮັດຜິດຕໍ່ໆກັນມາ ການທີ່ຜູ້ນໍາເຮັດຜິດເປັນຜົນສະທ້ອນແກ່ໄພ່ຟ້າຣາຊດອນ ແລະເປັນຜົນສະທ້ອນແກ່ບ້ານເມືອງອີກ. ດັ່ງນັ້ນເມື່ອເຮົາທັງຫລາຍໄດ້ຮຽນຮູ້ເຖິງຄວາມຜິດພາບຂອງບັນພະບຸຣຸດແລ້ວເຮົາສົມຄວນຈະຕ້ອງດັດແປງໃຫ້ຖືກຕ້ອງ, ເຮົາຄວນເບິ່ງຕົວຢ່າງກະສັດອາຊາຜູ້ເປັນກະສັດແຫ່ງຢູດາ ເພິ່ນເຫັນວ່າພໍ່ຂອງເພິ່ນເຮັດຜິດໄປແລ້ວ ເຖິງຄາວເພິ່ນປົກຄອງເພິ່ນກໍບໍ່ໄດ້ເຮັດຜິດຕາມພໍ່ຂອງເພິ່ນ. ທໍານອງດຽວກັນເມື່ອເຮົາເຫັນວ່າຄົນຂີ້ເຫລົ້າຂັບຣົຖມັກຈະຕໍາຜູ້ອື່ນຕາຍ ເຮົາກໍບໍ່ຄວນຈະດື່ມເຫລົ້າແລ້ວໄປຕໍາຜູ້ອື່ນຕາຍ.

*ດຣ. ທູນພັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 5
# ຊົງເອີ້ນໃຫ້ຈົງຮັກພັກດີ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ກະສັດ 18: 1-2; 17-39

**ພູມຫລັງຂອງພຣະຄັມພີ:** 1 ກະສັດ 17-18

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງເອີ້ນໃຫ້ພວກເຮົາມີຄວາມຈົງຮັກພັກດີຕໍ່ພຣະອົງ ແທນທີ່ຈະພັກດີກັບພຣະອື່ນຊຶ່ງຮ່ວມກັບພຣະຂອງຄວາມສຳເຣັດວິທີງ່າຍໆ.

**ຄຳຖາມເພື່ອການຄົ້ນຄວ້າ:** ມີຫຍັງແດ່ທີ່ແມ່ນພຣະຂອງຄວາມສຳເຣັດວິທີງ່າຍໆ (ຄືກັບພຣະບາອານ) ໃນສມັຍນີ້?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະມອບຕົວເອງໃຫ້ພຣະເຈົ້າອົງທ່ຽງແທ້.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນມື້ສອນບົດຮຽນນີ້ ໃຫ້ຈັດຕຽມເຣື່ອງເພື່ອຈະມາເລົ່າໃຫ້ນັກຮຽນຟັງ, ໃຫ້ເອົາເຣື່ອງຄຣິສຕຽນຜູ້ໃດຜູ້ນຶ່ງທີ່ໄດ້ຕິດຕາມພຣະເຈົ້າເຖິງແມ່ນວ່າຊີວິດຈະພົບກັບຄວາມຍາກລຳບາກ. ທ່ານອາດຈະໃຊ້ເຣື່ອງຂອງ ວິນລ້ຽມ ແຂລີ້ ຂ້າງລຸ່ມນີ້:

    ທ່ານວິນລ້ຽມ ແຂລີ້ ເກີດທີ່ປະເທດອັງກິດໃນປີ 1761, ທ່ານມີສາຍານາມວ່າ <u>ບິດາຂອງການປະກາດສມັຍໃໝ່.</u> ທ່ານເປັນຄົນບັບຕິດ ທີ່ເຊື່ອວ່າຄຣິສຕຽນໄດ້ຮັບການຊົງເອີ້ນຈາກພຣະເຈົ້າໃຫ້ໄປປະກາດກັບຄົນທົ່ວໂລກທີ່ຍັງບໍ່ເຊື່ອ. ທ່ານໄດ້ຕໍ່ສູ້ກັບອຸປສັກນາໆປະການ ຊຶ່ງຮວມກັບການຕໍ່ຕ້ານຈາກກຸ່ມບັບຕິດດ້ວຍກັນ. ຫລາຍຄົນຈົດຈຳທ່ານວິນລ້ຽມແຂລີ້ ເຣື່ອງຄວາມພຍາຍາມຂອງທ່ານ ແລະຄວາມເຊື່ອຂອງທ່ານທີ່ບອກວ່າ "ຈົ່ງຫວັງສິ່ງຍິ່ງໃຫຍ່ຈາກພຣະເຈົ້າ; ຈົ່ງລອງເຮັດສິ່ງຍິ່ງໃຫຍ່ເພື່ອພຣະເຈົ້າ."

2. ອ່ານ <u>ຈຸດສຳຄັນຂອງບົດຮຽນນີ້</u> ໃຫ້ທຸກຄົນຟັງ. ບອກນັກຮຽນວ່າ "ບາງຄັ້ງບາງຄາວພວກເຮົາທັງຫລາຍກໍຄວນຈະພິສູດຕົວເອງວ່າ ພວກເຮົາໄດ້ຫັນໜີຈາກພຣະເຈົ້າ ຫລືບໍ່?" ອ້ອນວອນຂໍການນຳພາເພື່ອຈະສຶກສາພຣະທັມຕໍ່ໄປ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ຕຽມໃບໂປສເຕີ້ໄວ້ສາມແຜ່ນ; ແຜ່ນທີນຶ່ງຂຽນຫົວຂໍ້ໃສ່ "ບໍ່ມອບຕົວໃຫ້ພຣະເຈົ້າ," ແຜ່ນທີສອງຂຽນ "ມອບບາງຢ່າງໃຫ້ພຣະເຈົ້າ," ແລະແຜ່ນທີສາມຂຽນ "ມອບທຸກສິ່ງທຸກຢ່າງໃຫ້ພຣະເຈົ້າ." ແນະນຳບຸກຄົນສາມຄົນໃນບົດຮຽນ ນີ້: ກະສັດອາຮາບ (ແລະຄົນອື່ນໆທີ່ເຊື່ອພຣະບາອານ), ປະຊາຊົນຊາວອິສຣາເອນ, ແລະຜູ້ປະກາດພຣະທັມເອລີຢາ (ແລະຄົນອື່ນໆ ເຊັ່ນໂອບາດີຢາ). ໃຫ້ໂອກາດພວກນັກຮຽນເພື່ອແນະນຳວ່າ ຄົນແຕ່ລະຈຳພວກທີ່ກ່າວມານີ້ ຄວນຈະມີຊື່ບັນທຶກໄວ້ໂປສເຕີ້ແຜ່ນໃດ?

4. ອ່ານ 18: 16-21. ຖາມ: ເປັນຫຍັງກະສັດອາຮາບຈຶ່ງກ່າວຫາວ່າ ເອລີຢາເປັນຜູ້ສ້າງຄວາມເດືອດຮ້ອນ? ແລ້ວຖາມວ່າ, ເອລີຢາໄດ້ຕອບວ່າຢ່າງໃດ? ເປັນຫຍັງອາຮາບຈຶ່ງເປັນຜູ້ສ້າງຄວາມເດືອດຮ້ອນໃຫ້ກັບອິສຣາເອນ? ຖາມ: ກະສັດອາຮາບຄວນມີຊື່ຢູ່ໂປສເຕີ້ແຜ່ນໃດ?

5. ອະທິບາຍຄວາມແຕກຕ່າງຣະຫວ່າງຜູ້ທຳນວາຍຂອງພຣະບາອານ ແລະຜູ້ປະກາດພຣະທັມຂອງພຣະເຈົ້າ. ຖາມ: ມີຫຍັງແດ່ໃນສັງຄົມປັດຈຸບັນ ທີ່ເຮັດວຽກຂອງຜູ້ທຳນວາຍຂອງພຣະບາອານ? (ຄຳຕອບ: ບຸກຄົນ ຫລືສິ່ງຂອງທີ່ນຳພາພວກເຮົາໃຫ້ຫັນໜີຈາກພຣະເຈົ້າ)

6. ໃຫ້ຜູ້ນຶ່ງອ່ານ 18:22-26. ອະທິບາຍບົດຮຽນພາກນີ້ ໂດຍໃຊ້ບົດຮຽນຊ່ອຍ.

7. ໃຫ້ຜູ້ນຶ່ງອ່ານ 18:27-35. ຖາມ: ທ່ານຄິດວ່າເປັນຫຍັງພຣະເຈົ້າຈຶ່ງນຳພາເອລີຢາໃຫ້ມີການປະທະກັນຢ່າງເປີດແປນເຊັ່ນນີ້? (ຄົນໃນຕອນນັ້ນ ເຊື່ອວ່າພຣະບາອານມັກສະແດງຣິດອຳນາດຂອງມັນຜ່ານລົມພະຍຸ). ອີງເຖິງສະພາບຄວາມແຫ້ງແລ້ງທີ່ກຳລັງເກີດຂຶ້ນໃນອິສຣາເອນ, ເປັນຫຍັງເອລີຢາຈຶ່ງຟູມເຟືອຍເຣື່ອງນ້ຳແທ້? ຖາມຕໍ່, ພຣະເຈົ້າ ໄດ້ສແດງວ່າພຣະອົງຊົງມີຣິດອຳນາດເໜືອພຣະບາອານດ້ວຍວິທີໃດ ໃນການປະທະກັນເທື່ອນີ້?

8. ໃຫ້ໂອກາດນັກຮຽນເພື່ອອອກຄວາມເຫັນວ່າເປັນຫຍັງຄົນສ່ວນຫລາຍມັກຈະຫາທາງອອກແບບງ່າຍໆ ຫລືມັກຈະຫາຄວາມສຳເຣັດທີ່ຈະໃຊ້ວິທີງ່າຍໆ ແທນທີ່ຈະສແວງຫາພຣະເຈົ້າ? ແລ້ວຖາມວ່າ:
   - ມີຜົນຫຍັງແດ່ໃນການຊອກຫາຄວາມສຳເຣັດດ້ວຍວິທີງ່າຍ?
   - ມີຜົນຫຍັງແດ່ໃນການຕິດຕາມພຣະເຈົ້າຢ່າງແທ້ຈິງ?
   - ວິທີໃດ ທີ່ທ່ານຄິດວ່າເປັນວິທີທີ່ເໝາະສົມສຳລັບຕົວເອງ?

9. ອ່ານ 18: 36-46 ແລ້ວຖາມ:
   - ແມ່ນຫຍັງຄືຈຸດສຳຄັນໃນຄຳອ້ອນວອນຂອງເອລີຢາໃນ 18:36-37 ?
   - ແມ່ນຫຍັງຄືຈຸດປະສົງໃນການທຳລາຍຜູ້ທຳນວາຍຂອງພຣະບາອານໃນ 18:40?
   - ທ່ານຄິດວ່າເປັນຫຍັງຄົນໃຊ້ຈຳເປັນຕ້ອງໄດ້ຫຽວໄປເບິ່ງເຖິງເຈັດເທື່ອ ຈຶ່ງໄດ້ເຫັນບາງຢ່າງເກີດຂຶ້ນ? (ເຈັດເປັນຈຳນວນທີ່ບອກເຖິງຄວາມຄົບບໍຣິບູນ ຫລືຄວາມສຳເຣັດໃນສິ່ງທີ່ພຣະເຈົ້າຊົງກະທຳ; ໃນທີ່ນີ້ ໝາຍເຖິງຄວາມສຳເຣັດຂອງການອ້ອນວອນເພື່ອຝົນຂອງເອລີຢາ).

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. ຖາມ, ເປັນຫຍັງໄພ່ພົນຂອງພຣະເຈົ້າຈຶ່ງເຊື່ອວາງໃຈໃນພຣະອົງ ແທ່ນທີ່ຈະໄວ້ວາງໃຈໃນສິ່ງຂອງ? ຊັກຊວນທຸກຄົນໃຫ້ພິສູດເບິ່ງຕົວເອງໃນລະຍະທີ່ຜ່ານມາ ແລະປຽບທຽບໃສ່ໂປສເຕີ້ສາມແຜ່ນທີ່ຕຽມໄວ້ນັ້ນ (ເບິ່ງຂໍ້ 3).

11. ນຳພາການອ້ອນວອນເພື່ອປິດການຮຽນ, ອ້ອນວອນພຣະເຈົ້າໃຫ້ຊ່ວຍແຕ່ລະຄົນໃຫ້ເລືອກສິ່ງທີ່ຖືກຕ້ອງກ່ອນຈະມອບຊີວິດຈິດໃຈໝົດທຸກຢ່າງໃຫ້ສິ່ງໃດສິ່ງນຶ່ງ ຫລືຜູ້ໃດຜູ້ນຶ່ງ.

*ດຣ. ສິດນີ ຄານ*

# ບົດແນະນຳຄູສອນ
# ບົດຮຽນທີ 6
# ຄວນຟັງຫລາຍກວ່າຈົ່ມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປະຫວັດກະສັດທີນຶ່ງ 19:1-18
**ພູມຫລັງຂອງພຣະຄັມພີ:** ປະຫວັດກະສັດທີນຶ່ງ 19
**ຈຸດສຳຄັນຂອງບົດຮຽນນີ້:** ການຮັບໃຊ້ອາຈມີອຸປສັກເປັນບາງຄັ້ງ ແຕ່ເຮົາຄວນຟັງພຣະເຈົ້າດີກວ່າ.
**ຄຳຖາມເພື່ອການຄົ້ນຄວ້າ:** ໃນເວລານີ້ທ່ານໄດ້ຕັ້ງໃຈຟັງສຽງຂອງພຣະເຈົ້າແທ້ບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອພິຈາຣະນາໃນການທີ່ພຣະເຈົ້າຊົງເອີ້ນໃນຖ້າມກາງເຄາະຮ້າຍ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ສອນສະມາຊິກໃຫ້ກາຍເປັນຜູ້ຮັບໃຊ້.

## ບົດນຳ

ໃຫ້ເຮົາເຂົ້າໃຈວ່າເຮົາເປັນຜູ້ຮັບໃຊ້ພຣະເຈົ້າ ທີ່ຢູ່ຮ່ວມໂລກດຽວກັນກັບຄົນທົ່ວໄປ ສິ່ງທີ່ເຮົາຄວນຣະວັງນັ້ນຄືບໍ່ໃຫ້ຈິດວິນຍານຂອງເຮົາຕົກຕໍ່າໃນຂະນະທີ່ເຮົາພົບປະສັງສັນກັບຄົນທົ່ວໄປ ລາງເທື່ອເຮົາກໍຈະຖືກເຍາະເຍີ້ຍ, ຖືກໝິ່ນປະມາດ, ຖືກການຂູ່ເຂັນແລະອື່ນໆ ສິ່ງເຫລົ່ານີ້ຈະເຮັດໃຫ້ຈິດວິນຍານເຮົາປັ່ນປ່ວນຈົນຫລົງລືມພຣະເຈົ້າ.

1. ຂຽນຄຳວ່າ "**ເຈົ້າໄດ້ຍິນຂ້ອຍບໍ່**" ເປັນເຣື່ອງທີ່ບໍຣິສັດໂທຣະສັບໂຄສະນາໃນທີວີ, ຖາມນັກຮຽນມີບັນຫານີ້ບໍ່? ມີຫຍັງແດ່? ຈາກນັ້ນເວົ້າເຣື່ອງການຕິດຕໍ່ກັບພຣະເຈົ້າວ່າເພິ່ນໄດ້ຍິນເຮົາບໍ່? ເຮົາໄດ້ຍິນເພິ່ນບໍ່? ເປັນຫຍັງ?

2. ເອົາຄຳຕອບຂອງນັກຮຽນມາວິຈັຍ ເຊື່ອມໂຍງກັນກັບການຟັງພຣະເຈົ້າວ່າ ເປັນຫຍັງເຮົາຈຶ່ງບໍ່ໄດ້ຍິນສຽງພຣະອົງ.

3. ນຳພານັກຮຽນອ້ອນວອນ ເພື່ອຈະໄດ້ຍິນສຽງພຣະອົງ.

4. **ອ່ານ 19:1-9 ເອລີຢາຫລົບໜີການຂູ່ຂວັນ**
   ກ. ເປັນຫຍັງພຣະມະເຫສີ (ເມັຍເຈົ້າຊີວິດ) ເຢຊາເບັນຈຶ່ງໂກດເຄືອງເອລີຢາ (ຂໍ້ 1-2)
   ຂ. ໃນບົດ 16:31 ບອກວ່ານາງເປັນຜູ້ຂາບໄຫວ້ພຣະບາອານແລະຊັກຊວນຜົວແລະປະຊາຊົນຂາບໄຫວ້ຄືກັນ.
   ຄ. ໃນບົດ 18:4 ນາງໄດ້ຂ້າຜູ້ປະກາດພຣະທັມແລະກັກຂັງຜູ້ປະກາດພຣະທັມ 100 ຄົນໄວ້ໃນຖໍ້າ.
   ງ. ໃນບົດ 18:40 ເອລີຢາຂ້າພວກຜູ້ປະກາດພຣະບາອານ ເປັນຕົ້ນເຫດໃຫ້ນາງເຢຊາເບັນຂູ່ເພິ່ນຈຶ່ງຫລົບໜີເຂົ້າປ່າ.

ຈ. ໃນບົດ 19:3-5 ການກະທຳຂອງເອລີຢາເປັນແນວໃດ? ພຣະເຈົ້າເລົ້າໂລມໂດຍວິທີໃດ?

ສ. ຂໍ້ 3-5 ການຫລົບໜີຈາກພຣະເຈົ້າມີຜົນສະທ້ອນຕໍ່ຮ່າງກາຍ ແລະຈິດວິນຍານແນວໃດ?

ສ. ຂໍ້ 4 ເອລີຢາຂໍຕາຍ ເປັນຫຍັງພຣະເຈົ້າບໍ່ໃຫ້ເພິ່ນຕາຍ?

5. <u>ອ່ານ19:9ຂ--13 ຊົງເປີດໂອກາດໃຫ້ຮູ້ສຶກ</u>

ກ. ປ່ອຍໃຫ້ເອລີຢາຮັບຄວາມທຸກໃຈ ເພື່ອສອນໃຫ້ເຂົ້າໃຈໃນຄວາມເປັນມະນຸດ.

ຂ. ຊົງປາກົດກັບເອລີຢາ ແລະຖາມວ່າ "ເຈົ້າເຮັດຫຍັງຢູ່ທີ່ນີ້" ມີຄວາມໝາຍແນວໃດ? (ຂໍ້ 9)

ຄ. ເອລີຢາຈົ່ມແນວໃດ? (ຂໍ້ 10).

ງ. ພຣະເຈົ້າບອກໃຫ້ເພິ່ນເຮັດຫຍັງ? ແລະມີຫຍັງເກີດຂຶ້ນ? (ຂໍ້11-12).

ຈ. ເປັນຫຍັງພຣະເຈົ້າຈຶ່ງຖາມເອລີຢາຄັ້ງທີສອງວ່າ "ເຈົ້າເຮັດຫຍັງຢູ່ທີ່ນີ້" (ຂໍ້ 13).

6. <u>ອ່ານ19:14-18 ເອລີຢາຮັບຄຳສັ່ງໃໝ່</u>

ກ. 1. ໄປຫົດສົງ **ຮາຊາເອນ** ໃຫ້ເປັນກະສັດປະ ເທດຊີເຣັຽ.

2. ໄປຫົດສົງ **ເຢຮູ** ລູກຊາຍຂອງນິມຊີໃຫ້ ເປັນເຈົ້າຊີວິດຂອງອິສຣາເອນ.

3. ໄປຫົດສົງ **ເອລີຊາ** ລູກຊາຍຂອງຢາຟັດໃຫ້ເປັນຜູ້ປະກາດພຣະທັມແທນເພິ່ນ.

ຂ. ຊົງຕອບຄຳອ້ອນວອນຂອງເອລີຢາ

1. ຜູ້ຂາບໄຫວ້ພຣະບາອານທີ່ໜີຈາກເຈົ້າຊີວິດຮາຊາເອນ ຈະຖືກເຈົ້າຊີວິດເຢຮູຂ້າ.
2. ຜູ້ຂາບໄຫວ້ພຣະບາອານທີ່ໜີຈາກເຈົ້າຊີວິດເຢຮູ ຈະຖືກຜູ້ປະກາດພຣະທັມຄົນໃຫມ່ຂ້າ.
3. ພຣະເຈົ້າຈະບັນດານໃຫ້ຄົນອິສຣາເອນ 7000 ຄົນທີ່ບໍ່ຂາບໄຫວ້ພຣະບາອານມີຊີວິດຕໍ່ໄປຄູ່ກັບເອລີຢາ ເພື່ອເພິ່ນຈະບໍ່ໄດ້ຈົ່ມອີກຕໍ່ໄປວ່າ ເຫລືອແຕ່ເພິ່ນຄົນດຽວ.

<u>ຄຳຖາມ:</u>

1. ທ່ານໄດ້ຮຽນຈາກຊີວິດຂອງເອລີຢາແນວໃດ?

2. ຈະນຳເອົາຊີວິດຂອງເພິ່ນມາເປັນບົດຮຽນແນວໃດ?

3. ຕໍ່ໄປນີ້ທ່ານຄວນຮຽນຟັງພຣະເຈົ້າແນວໃດ?

*ດຣ. ທູນພັນ ວົງສຸຣິດທ໌*

# ຄໍາແນະນໍາສໍາລັບຄຣູສອນ

## ບົດຮຽນທີ 7

## ເວົ້າຄວາມຈິງກັບຜູ້ມີອໍານາດ-ຢ່າງໂດດດ່ຽວ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 1 ກະສັດ 22: 6-28

**ພູມຫລັງຂອງພຣະຄັມພີ:** 1 ກະສັດ 22

**ຈຸດສໍາຄັນຂອງບົດຮຽນນີ້:** ຊື່ສັດຕໍ່ພຣະເຈົ້າອາດຈະໝາຍເຖິງການເວົ້າຄວາມຈິງຂອງພຣະເຈົ້າກັບຜູ້ມີອໍານາດ ເຖິງວ່າການເຮັດຢ່າງນັ້ນອາດຈະເປັນການເຮັດແບບໂດດດ່ຽວ ແລະອັນຕະລາຍ.

**ຄໍາຖາມເພື່ອການຄົ້ນຄວ້າ:** ເຮັດຢ່າງໃດຈະສາມາດເວົ້າຄວາມຈິງກັບຜູ້ມີອໍານາດ, ໂດຍສະເພາະເວລາທ່ານເປັນພຽງສຽງດຽວ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮຽນຮູ້ຄຸນລັກສະນະຂອງມີກາອີຢາທີ່ເຮັດໃຫ້ລາວສາມາດເວົ້າຄວາມຈິງກັບຜູ້ມີອໍານາດ ແລະເພື່ອຈະມອບຊີວິດຕົວເອງເພື່ອເວົ້າຄວາມຈິງຂອງພຣະເຈົ້າກັບຄົນໃນສມັຍນີ້.

### ແຜນສໍາລັບການສອນ

**ນໍາເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ໃນເວລາທີ່ນັກຮຽນກໍາລັງມາເຖິງຫ້ອງຮຽນ, ເອົາເຈັ້ຽໃຫ້ເຂົາເຈົ້າຄົນລະໃບ ແລະໃຫ້ແຕ່ລະຄົນຂຽນລົງຫ້າຢ່າງທີ່ພວກເຂົາເຈົ້າຢາກຈະບອກປະທານາທິບໍດີ ຫລືເຈົ້າແຂວງ ຖ້າມີໂອກາດໄດ້ພົບພວກຜູ້ນໍາເຫລົ່ານີ້.

2. ເວລາທຸກຄົນຕຽມພ້ອມໃຫ້ທ່ານອ່ານ <u>ຈຸດສໍາຄັນຂອງບົດຮຽນນີ້</u> ແລະເນັ້ນວ່າພວກເຮົາຈະຮຽນເປັນຜູ້ຊື່ສັດ ເຖິງວ່າເຮົາຈະຍືນຢູ່ຜູ້ດຽວ.

3. ໃຫ້ຄົນນຶ່ງອ້ອນວອນຂໍການນໍາພາ ແລະຂໍພຣະເຈົ້າປະທານຄວາມກ້າຫານໃນການຮັບໃຊ້ພຣະອົງ.

**ນໍາພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

4. ເລີ້ມບົດຮຽນໂດຍໃຫ້ນັກຮຽນເບິ່ງ <u>ເບື້ອງຫລັງ</u> ໃນບົດຮຽນເພື່ອທຸກຄົນຈະໄດ້ເຂົ້າໃຈນໍາກັນ. ສລຸບ 1 ກະສັດ 22: 1-5. ຫລັງຈາກນັ້ນໃຫ້ຜູ້ນຶ່ງອ່ານ 22: 6-12. ໃຫ້ແຕ່ລະຄົນຂຽນຄວາມເວົ້າທີ່ຈະອະທິບາຍເຖິງສະພາບຂອງຜູ້ປະກາດ 400 ຄົນ (ບໍ່ກ້າແຂງ, ຢ້ານກົວ, ບໍ່ສົນໃຈ...). ແລ້ວຊອກຫາຄໍາເວົ້າທີ່ອະທິບາຍເຖິງສະພາບຂອງກະສັດທັງສອງອົງ (ມີອໍານາດ, ເຮັດຕາມໃຈຕົວເອງ...). ຖາມ: ແມ່ນຫຍັງຄືວຽກຂອງຜູ້ປະກາດ? ໃຊ້ເວລາສົນທະນາ (ຟັງພຣະເຈົ້າ ແລ້ວເວົ້າສິ່ງທີ່ພຣະເຈົ້າໃຫ້ເວົ້າ). ຖາມ: ຜູ້ປະກາດພຣະທັມ 400 ຄົນໄດ້ເຮັດຕາມວຽກຂອງພວກເຂົາບໍ່?

5. ອ່ານ 22:8. ຖາມ: ແມ່ນຫຍັງຄືຄວາມແຕກຕ່າງຣະຫວ່າງຄໍາປຶກສາຂອງ ມີກາອີຢາ ແລະຜູ້ປະກາດ 400 ຄົນນັ້ນ? (ມີກາອີຢາຕ້ອງການເວົ້າສິ່ງທີ່ພຣະຜູ້ເປັນເຈົ້າໃຫ້ລາວເວົ້າ).

6. ໃຫ້ຜູ້ນຶ່ງອ່ານ 22:11-12 ອີກເທື່ອນຶ່ງ. ຖາມ: ແມ່ນຫຍັງຄືພັຍອັນຕະລາຍເວລາເວົ້າໃນປະເພດນີ້? (ເວົ້າໃນສິ່ງທີ່

ພຣະເຈົ້າຊົງໃຫ້ເວົ້າບໍ່ວ່າສິ່ງນັ້ນຈະຖືກ ຫລືຜິດ).

7. ໃຫ້ນັກຮຽນສອງຄົນອ່ານຄວາມລົມຂອງຜູ້ຮັບໃຊ້ກະສັດ ແລະມີກາອີຢາໃນ 22: 13-14 (ໃຫ້ຜູ້ນຶ່ງເປັນຜູ້ຮັບໃຊ້ກະສັດ ແລະອີກຜູ້ນຶ່ງເປັນຜູ້ປະກາດມີກາອີຢາ). ຖາມ: ເປັນຫຍັງຄົນໃຊ້ຈຶ່ງເວົ້າແບບນັ້ນ? ມີກາອີຢາມີທ່າທີແນວໃດ? ພວກເຮົາສາມາດຮຽນຮູ້ຫຍັງແດ່ຈາກຕອນນີ້ (ເຕືອນນັກຮຽນວ່າ "ຈຸດສຳຄັນຂອງບົດຮຽນນີ້" ຄືຫຍັງ).

8. ໃຫ້ຜູ້ນຶ່ງອ່ານ 33:13-18. ຖາມ: ມີກາອີຢາໄດ້ປ່ຽນທ່າທີຂອງທ່ານບໍ່? (ບອກວ່າ ສຽງເວົ້າຂອງມີກາອີຢາ ອາດຈະແມ່ນການແກ້ງເວົ້າສຽດສີ).

9. ກ່ອນເວລາຈະຮຽນບົດຮຽນນີ້ ທ່ານອາດຈະຕຽມຄົນໄວ້ສຳລັບຄົ້ນຄວ້າ ແລະອ່ານພຣະທັມຕໍ່ໄປນີ້: ເຢຣະມີຢາ 23: 9-40; 28:2-17; ຕອນນີ້ໃຫ້ບຸກຄົນທີ່ທ່ານໄດ້ຕຽມໄວ້ ແບ່ງປັນເຣື່ອງຄວາມສັມພັນຣະຫວ່າງຜູ້ປະກາດພຣະທັມ ແລະປະຊາຊົນ. ໃຫ້ລາວສະແດງທ່າທີວ່າ ຜູ້ປະກາດພຣະທັມຄວນຈະເຮັດຫຍັງ ຫລືເວົ້າຫຍັງ (ເບິ່ງຄຳເວົ້າຂອງ ມີ ກາອີຢາ ໃນ 1 ກະສັດ 22:23). ອີງຖາມຂໍ້ມູນທີ່ໄດ້ຍິນ, ໃຫ້ຖາມວ່າ: ໃຜເປັນຜູ້ປະກາດທີ່ແທ້ຈິງ? ອີງຕາມພຣະຄຳໃນ ເຢຣະມີຢາ, ແມ່ນຫຍັງແດ່ຈະເກີດຂຶ້ນກັບບຸກຄົນທີ່ບໍ່ເວົ້າຄວາມຈິງກ່ຽວກັບພຣະປະສົງຂອງພຣະເຈົ້າ?

10. ໃຫ້ຜູ້ນຶ່ງອ່ານ 22: 19-23. ແບ່ງນັກຮຽນທັງໝົດອອກເປັນສາມກຸ່ມໃຫຍ່ ເພື່ອສົນທະນາຄຳຖາມຕໍ່ໄປນີ້:

- ມີໃຜແດ່ໃນຕອນນີ້ ທີ່ກຳລັງຮ່ວມໃນການປະຊຸມທີ່ເທິງສວັນ?
- ພຣະເຈົ້າຊົງເປັນຜູ້ຮັບຜິດຊອບເຣື່ອງ "ວິນຍານຫລອກລວງ" ຫລືບໍ່? ຖ້າຮັບຜິດຊອບ, ທ່ານມີຄວາມຄິດແນວໃດໃນເຣື່ອງນີ້?
- ແຜນການຂອງກະສັດທັງສອງມີໂອກາດທີ່ຈະສຳເຣັດບໍ່? ເປັນຫຍັງຈຶ່ງສຳເຣັດ ຫລື ເປັນຫຍັງຈຶ່ງບໍ່ສຳເຣັດ?

11. ອ່ານ 22:24-28. ຖາມ: ເສເດກີຢາ ກ່າວໂທດມີກາອີຢາເຣື່ອງຫຍັງ ເວລາເຂົາຕົບໜ້າລາວ? ມີກາອີຢາໂຕ້ຕອບແນວໃດກັບຄວາມຮຸນແຮງຂອງເສເດກີຢານັ້ນ?

12. ເຕືອນນັກຮຽນເຣື່ອງຄວາມບໍ່ແນ່ນອນຂອງການພະຍາຍາມເຮັດທຸກຢ່າງດ້ວຍຕົວເອງ(ນອກຈາກແຜນຂອງພຣະເຈົ້າ), ການຕາຍຂອງກະສັດອາຮາບເປັນຕົວຢ່າງອັນນຶ່ງ. ສິ່ງນີ້ໄດ້ບອກຫຍັງແດ່ ກ່ຽວກັບແຜນການຂອງພຣະເຈົ້າສຳລັບມະນຸດແຕ່ລະຄົນ ແຕ່ລະເວລານາທີ?

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

13. ໃຫ້ແຕ່ລະຄົນພິຈາຣະນາເຣື່ອງການສແວງຫານ້ຳພຣະທັຍພຣະເຈົ້າໃນຊີວິດຕົວເອງ. (ແນະນຳນັກຮຽນເຣື່ອງວິທີ). ຖາມ: ແມ່ນຫຍັງເປັນອຸປສັກບໍ່ໃຫ້ຄຣິສຕຽນໄດ້ຮູ້ ແລະເຮັດຕາມນ້ຳພຣະທັຍພຣະເຈົ້າ? (ຄຳຕອບອາດຈະມີຫລາຍຢ່າງ; ແລະຢ່າງນຶ່ງອາດຈະແມ່ນ "ຢ້ານເຂົ້າໃຈນ້ຳພຣະທັຍຜິດ")

14. ໃຫ້ເວລານັກຮຽນຕອບຄຳຖາມນີ້: ມີເຣື່ອງຫຍັງແດ່ທີ່ເກີດຂຶ້ນ ຊຶ່ງພວກເຮົາຮູ້ວ່າ ຄວນຖືພຣະທັມເປັນກົດເກນ? ແລ້ວໃຊ້ຄຳຖາມນີ້ເພື່ອນຳການສົນທະນາ: ທ່ານຄິດວ່າຜູ້ປະກາດພຣະທັມມີກາອີຢາຈະຕອບແນວໃດ? ແມ່ນຫຍັງຊ່ວຍມີກາເອຢາໃຫ້ເຮັດຢ່າງນັ້ນໄດ້? ພຣະທັມໃນຕອນນີ້ໄດ້ສອນພວກເຮົາແນວໃດແດ່? ທ່ານພ້ອມແລ້ວບໍ່ທີ່ຈະອຸທິດຕົວເອງໃນການເວົ້າຄວາມຈິງຂອງພຣະເຈົ້າຢ່າງຊື່ສັດໃນສມັຍນີ້?

15. ອ້ອນວອນປິດການສຶກສາພຣະທັມ ໂດຍອະທິຖານຂໍພຣະເຈົ້າຊົງປະທານຄວາມກ້າຫານ ໃຫ້ກັບທຸກຄົນໃນກຸ່ມນີ້ ເພື່ອຈະໄດ້ຢືນຢູ່ໃນສັງຄົມເພື່ອພຣະອົງ.

*ດຣ. ສິດນີ ຄານ*

# ບົດແນະນຳຄູສອນ
# ບົດຮຽນທີ 8
# ຊົງຊ່ອຍຄົນຕ່າງຊາດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປະຫວັດກະສັດທີສອງ 5:1-19ກ
**ພູມຫລັງຂອງພຣະຄັມພີ:** ປະຫວັດກະສັດທີສອງ 2:--5:
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງເອີ້ນທຸກຄົນຜ່ານທາງຜູ້ຮັບໃຊ້ພຣະອົງ.
**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານຕ້ອງການອັນໃດເພື່ອເປັນເຄື່ອງມືນຳຄົນມາຫາພຣະເຈົ້າ)
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຄົ້ນຫາສິ່ງຕ້ອງການເພື່ອນຳຄົນມາຫາພຣະອົງ.

## ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ແບ່ງປັນຂ່າວປະເສີດແກ່ທຸກຄົນ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ໃຫ້ເຂົ້າໃຈວ່າທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ຮຽນຕາມແບບຢ່າງພຣະເຢຊູ ໂດຍຊ່ອຍຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຄວາມຄິດ.
- ສອນສະມາຊິກໃຫ້ກາຍເປັນຜູ້ຮັບໃຊ້.

## ບົດນຳ

ພຣະເຈົ້າຊົງມີແຜນການສຳລັບເຮົາທຸກຄົນ ດັ່ງທີ່ເຮົາຈະເຫັນຊີວິດຂອງນາຍທະຫານຊາວຕ່າງຊາດຜູ້ນຶ່ງຊຶ່ງເປັນຜູ້ເກັ່ງກ້າສາມາດຈົນຊື່ສຽງກ້ອງດັງໄປທົ່ວປະເທດ, ເປັນຜູ້ມີອຳນາດສູງສຸດຮອງຈາກເຈົ້າຊີວິດ ແຕ່ເພິ່ນບໍ່ສາມາດປາບພະຍາດຂີ້ທູດຂອງເພິ່ນ, ບໍ່ມີສິ່ງໃດຊ່ອຍເພິ່ນໄດ້ນອກຈາກຖ່ອມຕົວເຂົ້າຫາພຣະເຈົ້າດ້ວຍຄວາມຈິງໃຈ ເພິ່ນຈຶ່ງດີພະຍາດໂຣກຜີວໜັງນັ້ນ.

## ວິທີສອນ

1. ເອົາກະດາດສີໃຫ້ນັກຮຽນລາງຄົນແລ້ວໃຫ້ນັກຮຽນທີ່ມີກະດາດສີນັ່ງຫ່າງໄກໝູ່ ສ່ວນນັກຮຽນຜູ້ອື່ນເອົາກະດາດຂາວໃຫ້ ແລ້ວຖາມນັກຮຽນວ່າ ທ່ານຮູ້ສຶກແນວໃດເມື່ອຖືກແຍກອອກຈາກຜູ້ອື່ນ, ໃຫ້ເວລານັກຮຽນສົນທະນາ ແລ້ວບອກນັກຮຽນວ່າພຣະເຈົ້າບໍ່ໄດ້ຈຳແນກເຊື້ອຊາດ ແລະຜິວພັນ ພຣະອົງຊົງຮັກທຸກຄົນ.

2. ບອກນັກຮຽນວ່າໃນບົດຮຽນວັນນີ້ເຮົາຈະຮຽນເຖິງເຣື່ອງພຣະເຈົ້າບໍ່ຈຳແນກເຊື້ອຊາດ ເພາະພຣະອົງຊົງຊ່ອຍຄົນຊາດຊີເຣັຽໃຫ້ໄດ້ເຊື່ອໃນພຣະອົງ.

3. ນຳພານັກຮຽນອ້ອນວອນຂໍການຊົງນຳໃນການຮຽນວັນນີ້.

4. ອ່ານ5:1-6 ເປັນພະຍານກັບຜູ້ປ່ວຍ

ກ. ເລົ່າປະຫວັດຄວາມເປັນມາຂອງທ່ານນາອາມານຮວມທັງເປັນພະຍາດຂີ້ທູດ.

ຂ. ເລົ່າເຣື່ອງຄວາມເຊື່ອສາວໃຊ້ທີ່ເຮືອນຂອງທ່ານນາອາມານ, ນາງສ່ຽງພັຍທີ່ເລົ່າເຣື່ອງນີ້ຕໍ່ເຈົ້ານາຍ.

ຄ. ເລົ່າເຣື່ອງນາອາມານເປັນເຈົ້ານາຍຂອງຊາດຊີເຣັຽ ຈະໄປຫາເອລີຊາຜູ້ປະກາດພຣະທັມຂອງຊາດ ອິສຣາເອນນັ້ນ ຄົນຊາດຊີເຣັຽຈະວ່າແນວໃດ? ເປັນຫຍັງເພິ່ນຕັດສິນໃຈໄປຫາເອລີຊາ.

5. <u>ອ່ານ 5:7-13 ຜູ້ຮັບເສັຍໃຈ, ຜູ້ມາໃຈຮ້າຍ</u>

ກ. ນາອາມານໄປຂໍອານຸຍາດຈາກເຈົ້າຊີວິດຊີເຣັຽແລ້ວເຈົ້າຊີວິດຊີເຣັຽຂຽນຈົດໝາຍໄປຫາເຈົ້າຊີວິດອິສ ຣາເອນ ໂດຍຫວັງໃຈວ່າຈະໃຫ້ເຈົ້າຊີວິດອິສຣາເອນສັ່ງເອລີຊາໃຫ້ປົວທ່ານນາອາມານ.

ຂ. ເມື່ອເຈົ້າຊີວິດອ່ານຈົດໝາຍແລ້ວກໍເສັຽໃຈ ພ້ອມທັງໃຈຮ້າຍ.

ຄ. ເອລີຊາເລົ້າໂລມໃຈເຈົ້າຊີວິດອິສຣາເອນ ເພາະເພິ່ນຄຶດຖືກແລ້ວ ວ່າມີແຕ່ພຣະເຈົ້າເທົ່ານັ້ນທີ່ປິ່ນປົວໄດ້.

ງ. ນາອາມານໄປຫາເອລີຊາດ້ວຍຄວາມຍິ່ງຜຍອງວ່າເປັນເຈົ້ານາຍ ແລ້ວເສັຽໃຈເພາະບໍ່ເປັນດັ່ງຄຶດໄວ້

ຈ. ເອລີຊາໄດ້ໃຊ້ຄົນໄປບອກໃຫ້ອານາມານປະຕິບັດ ແຕ່ເພິ່ນປະຕິເສດ ຈົນຄົນຂອງເພິ່ນເລົ້າໂລມເພິ່ນໃຫ້ ເຮັດຕາມ.

6. <u>ອ່ານ 5:14-19 ຫາຍດີ ແລ້ວກັບໃຈເຊື່ອ</u>

ກ. ນາອາມານເຮັດຕາມຄໍາແນະນໍາຂອງຄົນຂອງເພິ່ນ ຄືໃຫ້ເຮັດຕາມຄົນຂອງເອລີຊາບອກໃຫ້ເຮັດ.

ຂ. ນາອາມານລົງອາບນໍ້າຈໍແດນເຈັດຄັ້ງແລ້ວພະຍາດຂີ້ທູດນັ້ນກໍຫາຍດີ ແຖມຍັງເປັນເນື້ອໜັງໜຸ່ມອີກ.

ຄ. ເມື່ອນາອາມານເຫັນຣິດເດດຂອງພຣະເຈົ້າຈຶ່ງມີການປ່ຽນແປງເກີດຂຶ້ນ ໂດຍກັບໄປຫາເອລີຊາ.

ງ. ນາອາມານມອບຂອງຂວັນໃຫ້ເອລີຊາ ແຕ່ເອລີຊາບໍ່ຍອມຮັບເອົາ ເພາະວ່າການທີ່ນາອາມານດີ ພະຍາດນັ້ນບໍ່ແມ່ນເພິ່ນເຮັດ ແຕ່ແມ່ນຣິດອໍານາດຂອງອົງພຣະຜູ້ເປັນເຈົ້າຕ່າງຫາກ.

ຈ. ນາອາມານຮັບເຊື່ອແລະສັຣເສີນພຣະເຈົ້າ ໂດຍຂໍເອົາດິນຕ່າງໃສ່ຫລັງລໍສອງໂຕໄປ ເພື່ອໄປສ້າງ ແທ່ນບູຊາສໍາລັບພຣະເຈົ້າ

ສ. ເອລີຊາອວຍພອນນາອາມານນາຍທະຫານຕ່າງຊາດຜູ້ນີ້.

*ດຣ. ທູນພັນ ວົງສຸຣິດທ໌*

# ແນະນຳຄູສອນ
# ບົດຮຽນທີ 9
# ນ້ອມເຂົ້າໄປໃນທາງຈິບຫາຍ

---

| | |
|---|---|
| **ຂໍ້ພຣະຄັມພີສຳລັບບົດຮຽນນີ້:** | 2 ກະສັດ 14:23-29; 15:8-10, 13-14, 17-30 |
| **ພູມຫລັງຂອງພຣະຄັມພີ:** | 2 ກະສັດ 14:23-29; 15:8-31 |
| **ຈຸດສຳຄັນຂອງບົດຮຽນນີ້:** | ຜູ້ນຳທີ່ບໍ່ມາດຕະຖານ ຫລືບໍ່ສົມຄວນນຳພາຜູ້ຕິດຕາມໄປເຖິງຄວາມຈິບຫາຍ. |
| **ຄຳຖາມເພື່ອການຄົ້ນຄວ້າ:** | ເປັນຫຍັງຈຶ່ງເປັນອັນຕະລາຍໃນເມື່ອມີຜູ້ນຳບໍ່ມາດຕະຖານຫລືສົມຄວນ? |
| **ຈຸດປະສົງຂອງບົດຮຽນນີ້:** | ເພື່ອບອກເຖິງບັນຫາທີ່ເປັນເຄື່ອງສັນຍານວ່າ ພວກອິສຣາເອນໄດ້ນ້ອມເຂົ້າໄປໃນທາງຈິບຫາຍ ແລະເພື່ອຈະເຕືອນພວກເຮົາໃຫ້ເອົາບົດຮຽນມາໃຊ້ປະກອບຊີວິດ. |

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ບອກເຖິງອຳນາດຂອງພຣະຄັມພີທີ່ໃຊ້ແນະນຳໃນຊີວິດ ແລະການຮັບໃຊ້
- ເພື່ອເສີມສ້າງໃຫ້ຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ
- ຝຶກສອນໃຫ້ສະມາຊິກກາຍເປັນຜູ້ນຳຮັບໃຊ້

## ອະທິບາຍພຣະຄັມພີ

### ເຂົ້າໃຈໃນເນື້ອເຣື່ອງ

ໃນບົດຮຽນນີ້ໄດ້ເຕືອນພວກເຮົາວ່າຜູ້ນຳທີ່ບໍ່ມີຄຸນສົມບັດໄດ້ນຳພາບ້ານເມືອງຈິບຫາຍ. ຜູ້ນຳທີ່ບໍ່ດີເຮັດໃຫ້ດ້ານວິນຍານຈິດຂອງຄົນລົດນ້ອຍຖອຍລົງ ແລະນຳຊາດໄປເຖິງຜົນເສັຽຫາຍໄດ້. ນີ້ເປັນຄວາມຈິງຂອງພວກອິສຣາເອນແຕ່ເລີ້ມກາຍເປັນຊາດມາ. ໃນປື້ມ 2 ກະສັດ ໄດ້ອະທິບາຍໃຫ້ເຂົ້າໃຈວ່າສັດຕະວັດຕໍ່ມາພວກທີ່ຖືກຈັບໄປເປັນທາດທີ່ກຸງບາບີໂລນກໍເພາະພວກເຂົາພາກັນບໍ່ສັດຊື່ຕໍ່ພຣະເຈົ້າຍ້ອນການນຳພາຂອງກະສັດຂອງພວກເຂົາ. ດັ່ງນັ້ນ, ພຣະເຈົ້າຈຳເປັນຕັດສິນພວກເຂົາໂດຍບໍ່ມີທາງເລືອກເພາະຜູ້ນຳຊົ່ວເຫລົ່ານັ້ນ ເຖິງແມ່ນພຣະເຈົ້າແສນດີ ສັດຊື່ຕໍ່ພວກເຂົາມາຕລອດ. ພຣະຄັມພີຕອນນີ້ໄດ້ເວົ້າເຖິງຕອນຄາວສຸດທ້າຍຂອງພວກອິສຣາເອນ. ປະວັດສາດໃນ 2 ກະສັດນີ້ເປັນເຣື່ອງຕ່າງໆທີ່ເປັນປໂຍດເພື່ອຄວາມເຂົ້າໃຈໃນຊີວິດ.

ປະມານ 860 ກ່ອນ ຄສ. ທັມມະຈະຣິຍາ ແລະສາສນາໄດ້ເຮັດໃຫ້ພວກອິສຣາເອນສະເທືອນຢ່າງໜັກ. ກະສັດເອແຮບແລະມະເຫສີ ນາງເຈຊາແບວຜູ້ເປັນຊາດໂຟນີຊຽນ ໄດ້ເລີ້ມເອົາພຣະບາອານ ແລະພຣະຂອງພວກການາອານມາໃຫ້ຄົນນະມັສການ. ກະສັດເອແຮບເປັນນາຍທະຫານຜູ້ເກັ່ງກ້າ ມີພະລັງແລະອຳນາດຫລາຍ. ແຕ່ຜູ້ປະກາດພຣະທັມເອລີຢາໄດ້ເຫັນວ່າກະສັດເອແຮບໄດ້ເປັນຄົນນຳພາພວກອິສຣາເອນໃຫ້ຫລົງທາງ (1 ກະສັດ 16:31-33). ດັ່ງນັ້ນ, ຜູ້ປະກາດພຣະທັມຜູ້ຍິ່ງໃຫຍ່ນີ້ໄດ້ທ້າທາຍກັບພວກພຣະບາອານທີ່ພູເຂົາຄາແມນ ເພື່ອຈະຮູ້ວ່າໃຜເປັນພຣະເຈົ້າ

ອິງທ່ຽງແທ້ ( 1 ກະສັດ 18:17-46). ຜູ້ປະກາດພຣະທັມຍັງໄດ້ປະນາມກະສັດເອແຮບ ແລະນາງເຈຊາແບວທີ່ໄດ້ເປັນຄົນສໍ້ຣາດແລະຂ້າຄົນ ໃນເມື່ອໄດ້ຍຶດເອົາສວນຂອງນາໂບ ( 1 ກະສັດ 21). ໃນທີ່ສຸດຜູ້ປະກາດພຣະທັມກໍຍັງໄດ້ທຳນວາຍວ່າ ບັນລັງແລະເຊື້ອສາຍຂອງກະສັດເອແຮບຈະສິ້ນສຸດລົງ

ໃນທີ່ສຸດການທຳນວາຍຂອງຜູ້ປະກາດພຣະທັມເອລີຢາກໍກາຍເປັນຄວາມຈິງ. ເຢຮູ (843-815 ກ່ອນ ຄສ.) ມີການກະບົດຢ່າງນອງເລືອດໃນຄອບຄົວຂອງກະສັດເອແຮບ ພ້ອມດ້ວຍນາ ເຈຊາແບວອີກດ້ວຍ (2 ກະສັດ 8:25-10:31). ເຖິງແມ່ນເຢຮູໄດ້ທຳລາຍບ່ອນນະມັສການຂອງພະບາອານ ແຕ່ເພິ່ນຍັງບໍ່ໄດ້ທຳລາຍຮູບງົວຄຳປັ້ນ ຈາກເມືອງແດນ ແລະເມືອງເບັດໂຕ (10:28-30). ຈຶ່ງເປັນການລົງໂທດ ເຢຮູໄດ້ເສັຽເຂດແດນໃນພາກສ່ວນຕ ເວັ້ນອອກຈາກແມ່ນ້ຳຈໍແດນໃຫ້ແກ່ກະສັດຮາຊາແອວ ຜູ້ເປັນເຈົ້າຊີວິດເມືອງດາມາເຊ ( 10: 32-33). ໃນເມື່ອພວກອິສຣາເອນເສັຽຊັຍ ເສດຖະກິດຂອງພວກເຂົາກໍຊຸດໂຊມລົງ ຈຶ່ງເປັນເຫດໃຫ້ໄດ້ຮັບຄວາມລຳບາກ.

ກະສັດເຢໂຮອາແຮດຜູ້ເປັນກະສັດຄົນຕໍ່ໄປ (815-801 ກ່ອນ ຄສ). ພວກອິສຣາເອນໄດ້ຮັບຄວາມລຳບາກທີ່ສຸດຈົນຈຳດົນ. ພຣະເຈົ້າໄດ້ໃຊ້ກະສັດຮາຊາແອວ ແລະເບັດຮາແດດ 3 ກະສັດຂອງພວກດາມາເຊຂົ່ມເຫງພວກອິສຣາເອນເພາະພວກເຂົາບໍ່ໄດ້ສັດຊື່ຕໍ່ພຣະເຈົ້າ. ການໂຈມຕີຕ່າງເຮັດໃຫ້ພວກອິສຣາເອນຂາດກຳລັງທີ່ຈະຕໍ່ຕ້ານໄດ້ ພວກເຂົາຈຶ່ງອາສັຍປະເທດເພື່ອນບ້ານທີ່ເປັນຜູ້ເອົາປຽບຕລອດມາ.

ໃນເບື້ອງຕົ້ນຂອງສັດຕະວັດທີ່ແປດ ໄດ້ມີເຫດການປ່ຽນແປງເກີດຂື້ນ. ເຖິງແມ່ນຜູ້ນຳອິສຣາເອນບໍ່ໄດ້ເຮັດອັນໃດກໍຕາມ ພຣະເຈົ້າຍັງມີຄວາມເມດຕາດ້ວຍພຣະຄຸນ. ໃນສມັຍຂອງກະສັດເຢໂຮອາສ (ທີ່ຮູ້ກັນວ່າ ໂຈອາສ; 801-786 ກ່ອນ ຄສ). ພວກອິສຣາເອນໄດ້ໄດ້ຊັຍຊະນະພວກດາມາເຊສາມຄັ້ງ (2 ກະສັດ 13:22-25). ພວກເຂົາກໍກູ້ເອົາຊັບສິນບັດແລະກຳລັງທີ່ໄດ້ສູນເສັຽໄປນັ້ນຈາກອາຊີເຣັຽທີ່ເຄີຍໄດ້ປົກຄອງມາກ່ອນ. ປະເທດຊາດກໍໄດ້ມີການຟື້ນຟູຂື້ນມາໃໝ່ໃນສມັຍການປົກຄອງຂອງກະສັດເຢຣາໂບອາມ 2. ແຕ່ຢ່າງໃດກໍຕາມ ການຟື້ນຟູນີ້ໄດ້ມີຊີວິດຢູ່ບໍ່ນານເທົ່າໃດ.

## <u>ການແປພຣະຄັມພີ</u>

### 1. <u>ເຢໂຣໂບອາມ 2: ພຣະຄຸນຂອງພຣະເຈົ້າ ແລະການກູ້ເອົາຊາດຄືນຂອງອິສຣາເອນ</u>

( 2 ກະສັດ 14:23-29 )

<u>14:23.</u> ເຢໂຣໂບອາມ 2 (786-746 ກ່ອນ ຄສ.) ບຸດຊາຍຂອງໂຈອາສ, ຜູ້ເປັນກະສັດຜູ້ທີສີ່ ຂອງເຊື້ອສາຍກະສັດເຢຮູ. ການປົກຄອງ 21 ປີນັ້ນເປັນການປົກຄອງຢ່າງປະວັດສາດອັນຍາວນານຂອງອານາຈັກທາງເໜືອ. ເພິ່ນໄດ້ປົກຄອງຈາກຊາມາເຣັຽ ທີ່ເປັນເມືອງເອກໃນອານາຈັກທາງເໜືອ ຊຶ່ງຖືກສ້າງຂື້ນໂດຍກະສັດໂອມຣີ ແລະອາຮາບຜູ້ເປັນລູກ ປະມານ 860 ກ່ອນ ຄສ.).

<u>14:24.</u> ຜູ້ຂຽນປື້ມຂອງກະສັດໄດ້ໃຊ້ຫລັກສູດດຽວເພື່ອຈະປະນາມກະສັດຕ່າງໆຂອງພວກອິສຣາເອນເຖິງການປົກຄອງອັນບໍ່ສັດຊື່ຂອງພວກເຂົາ. ເຣື່ອງນີ້ໄດ້ອ້າງເຖິງການກະທຳຂອງກະສັດເຢໂຣໂບອາມ 1, ຜູ້ໄດ້ເອົາຮູບງົວຄຳໃນບ່ອນນະມັສການທີ່ເມືອງດານ ແລະເມືອງເບັດໂຕ. ຢ່າງໃດກໍຕາມ ຜູ້ມີຊື່ດຽວກັນ ຄືເຢໂຣໂບອາມນັ້ນກໍບໍ່ໄດ້ເປັນສາຍເລືອດດຽວກັນເລີຍ. ກະສັດເຫລົ່ານີ້ໄດ້ເປັນຜູ້ນຳພາອິສຣາເອນຫລົງຜິດໄປຈາກທາງຂອງພຣະເຈົ້າ.

<u>14:25.</u> ຂໍ້ຄຳສອນໃນບ່ອນນີ້ໄດ້ບອກເຖິງຄວາມສຳເຣັດຢ່າງບໍ່ໄດ້ຄາດຫວັງມາກ່ອນ ໃນສມັຍການປົກຄອງຂອງກະສັດ ເຢໂຣໂບອາມ 2. ກະສັດອົງໃໝ່ໄດ້ຂື້ນຄອງຣາດໃນເວລາອັນເໝາະສົມ, ໃນເມື່ອເຂດແດນໄດ້ມີໂອກາດຈະເຣີນທາງດ້ານເສດຖະກິດ. ເໝືອນດັ່ງໄດ້ກ່າວໄປແລ້ວ ການໂຈມຕີຂອງພວກອາຊີເຣັຽໄດ້ເຮັດໃຫ້ພວກດາມາເຊເສັຽກຳລັງລົງໄປຫລາຍ ໃນເມື່ອກະສັດຂອງອາຊີເຣັຽກຳລັງຫຍຸ້ງກ່ຽວກັບເຣື່ອງພາຍໃນທີ່ເປັນບັນຫາ ແລະໂຈມຕີຈາກທາງເໜືອ.

ຜູ້ປະກາດພຣະທັມໂຢນາ ບຸດຊາຍຂອງອາມິທັຍ ໄດ້ທຳນວາຍວ່າພວກອິສຣາເອນຈະໄດ້ຮັບຄວາມປົດປ່ອຍໃຫ້ພົ້ນໃຫ້ສຳເຣັດໃນການນຳພາຂອງເຢໂຣໂບອາມນີ້. ພວກເຮົາຮູ້ນ້ອຍຄຣວເຖິງການທຳນວາຍໃນປຶ້ມທີ່ມີຊື່ຂອງຄົນນີ້. ໃນພຣະຄັມພີຕອນນີ້ບໍ່ໄດ້ມີຄຳທຳນວາຍຂອງໂຢນາ ແຕ່ອາດເປັນຜົນຈາກການປະກາດຂອງເຢລີຊາ (2 ກະສັດ 13:14-19). ທັງສອງຜູ້ປະກາດພຣະທັມໄດ້ເວົ້າຢ່າງໜັກແໜ້ນວ່າ ພຣະເຈົ້າຍັງປົກຄອງປະວັດສາດຂອງອິສຣາເອນ ແລະຈະເຮັດດັ່ງນັ້ນຕລອດໄປ.

14:26-27. ຂໍ້ເຫລົ່ານີ້ໄດ້ບອກເຖິງເຫດຜົນທີ່ພຣະເຈົ້າຊ່ອຍໃນນາມພວກອິສຣາເອນ. ຂໍ້ເຫລົ່ານີ້ໄດ້ບອກເຖິງຄວາມເມດຕາ ແລະພຣະຄຸນຂອງພຣະເຈົ້າ ທັ່ງໆທີ່ພວກເຂົາມີຜູ້ນຳທີ່ບໍ່ເຊື່ອຟັງພຣະເຈົ້າ. ພຣະເຈົ້າໄດ້ "ມອງເຫັນຄວາມທຸກລຳບາກອັນໜັກໜ່ວງ." ຂອງພວກເຂົາ.

14:28-29. ນັກຂຽນໄດ້ສລູບເຖິງການຊັຍຊະນະທາງດ້ານທະຫານຂອງກະສັດ ເຢໂຣໂບອາມກ່ອນເພິ່ນຕາຍໄປ. ໃນຂໍ້ 28 ໃນພາສາເຮັບເຣີ ແປວ່າ <u>ມອບ ຣາແມດ ແລະ ດາມາເຊຄືນໃຫ້ອິສຣາເອນໃນເມືອງຢູດາ.</u> ມີນັກແປຫລາຍຄົນໄດ້ໝາຍເຖິງ ເຢໂຣໂບອາມ ໄດ້ຍຶດເອົາແຜ່ນດິນຄືນ.

ໃນທີ່ສຸດ ເຢໂຣໂບອາມ ໄດ້ຮັບຄວາມສຳເຣັດກໍຍ້ອນຄວາມເມດຕາ ກະຣຸນາແລະພຣະຄຸນຂອງພຣະເຈົ້າຊຶ່ງບໍ່ແມ່ນກຳລັງທາງດ້ານທະຫານ. ເຣື່ອງການປົກຄອງຂອງເພິ່ນໄດ້ເຕືອນພວກເຮົາວ່າ ພຣະເຈົ້າໄດ້ເປັນຜູ້ບັນຊາດ້ວຍສິພຣະທັດຂອງພຣະອົງ. ພຣະເຈົ້າບໍ່ລົດລະໃນກິດຈະກັມຂອງພຣະເຈົ້າເພື່ອຈະໃຫ້ແຜນການຂອງພຣະອົງສຳເຣັດ. ຢ່າງໃດກໍ ຕາມໃນເມື່ອເຮັດຜິດແລ້ວ ພຣະເຈົ້າບໍ່ອາດເຍື້ອນການລົງໂທດໄປຕລອດ; ພຣະເຈົ້າໃຫ້ໂອກາດແລ້ວ ໃນເມື່ອບໍ່ຟັງພຣະອົງຈຳເປັນຕ້ອງລົງໂທດຢ່າງຍຸຕິທັມ.

## 2. <u>ການສົມຮູ້ຮ່ວມຄິດ ແລະ ຜົນເສັຽຫາຍ: ພວກອິສຣາເອນນ້ອມໄປສູ່ຄວາມຈິບຫາຍ</u>

( 2 ກະສັດ 15:8-10, 13-14, 17-30 )

ເປັນໜ້າເສັຽດາຍ ພວກອິສຣາເອນບໍ່ປ່ຽນແປງວິທີທາງຂອງຕົນເອງໃຫ້ເມື່ອພຣະເຈົ້າໄດ້ຈັດຫາໂອກາດ ໃນກະສັດເຢໂຣໂບອາມ 2 ປົກຄອງ. ບົດ 15 ໄດ້ບອກເຖິງສມັຍທີ່ສັບສົນໃນການເປັນຢູ່ ກ່ອນຊາດໄດ້ຖືກທຳລາຍໃນກຳມືຂອງອັດຊາເຣັຽ. ມີຫ້າກະສັດໄດ້ຂຶ້ນຄອງບັນລັງທີ່ໃຊ້ເວລາຄາວດຽວ, 4 ໃນ 5 ກະສັດທີ່ຂຶ້ນຄອງບັນລັງນັ້ນມີການນອງເລືອດໂດຍຣັດທະປະການ ແລະມີສົງຄາມກາງເມືອງ. ການໂຫດຮ້າຍແລະເວລາຊົ່ວຊ້ານີ້ໄດ້ເປັນເຄື່ອງໝາຍຂອງການສິ້ນສຸດຂອງການເປັນຊາດ.

<u>15:8-10.</u> ຊັກຂາຣີຢາ ຜູ້ເປັນລູກຊາຍຂອງ ເຢໂຣໂບອາມ ແລະເປັນຫລານຊາຍຂອງກະສັດ ເຢຮູ, ຄົນນີ້ໄດ້ຄອງບັນລັງ ພຽງ 6 ເດືອນເທົ່ານັ້ນ ກ່ອນເພິ່ນໄດ້ຖືກສັງຫານດ້ວຍ ຊາລາມ. ການຕາຍຂອງຊັກຂາຣີຢາ ໄດ້ຕົງກັບຄຳທຳນວາຍໄວ້ແລ້ວໂດຍຜູ້ປະກາດພຣະທັມວ່າ ເຊື້ອຊາດຂອງເຢຮູຈະສິ້ນສຸດລົງພຽງສີ່ຊົ່ວຄົນ. (10:30; ເບິ່ງ 15:12).

<u>15:13-14.</u> ຊາລາມ ລູກຂອງຈາແບສ ໄດ້ສົມຮູ້ຮ່ວມຄິດ ເພາະພວກເຂົາເປັນຄູ່ແຂ່ງກັນ ເພື່ອຈະໄດ້ປົກຄອງອິສຣາເອນ. ແຕ່ຊາລາມໄດ້ຄອງບັນລັງພຽງເດືອນດຽວ ກ່ອນເພິ່ນໄດ້ຖືກສັງຫານໂດຍ ເມນາແຮມ. ເພິ່ນໄດ້ນັ່ງບັນລັງສັ້ນໆເພິ່ນຈຶ່ງຖືກປະມານວ່າ ເປັນຄົນບໍ່ມີຫຍັງທີ່ສແດງຫາອຳນາດ!

15:17-30. ເມນາແຮມໄດ້ປົກຄອງປະເທດສິບປີ ແລະເປັນກະສັດຄົນທຳອິດທີ່ໄດ້ປະສົບກັບພວກ ອາຊາ ເຣັຽ. ເພິ່ນໃຊ້ອຳນາດຕໍ່ສູ້ຜູ້ຂັດຂວາງທາງ (2 ກະສັດ 15:16). ໃນເມື່ອບໍ່ມີກຳລັງພໍທີ່ຈະຕໍ່ສູ້ກັບ ອາຊີເຣັຽ ເພິ່ນກໍໄດ້ຈ່າຍຄ່າພາສີສູງເພື່ອຈະໄດ້ຮັບຄວາມປ້ອງກັນຈາກກະສັດຂອງພວກອາຊີເຣັຽ. ໂປນ ແມ່ນຊື່ອີກຊື່ນຶ່ງຂອງ ທີລາດ-ປີລີເຊີ 3 (745-727 ກ່ອນ ຄສ.) ເມນາແຮມໄດ້ຈ່າຍ 1000 ລຽນເງິນ ເພື່ອຈະໄດ້ຮັບການປົກປ້ອງ ແລະສນັບສນູນຈາກອາຊີເຣັຽ. ເງິນເຫລົ່ານີ້ໄດ້ມາຈາກປະຊາຊົນ ບາງເທື່ອອາດເປັນຄົນດຽວກັນກັບສມັຍຂອງຜູ້ປະກາດເອໂມດໄດ້ປະນາມວ່າຜູ້ຮັ່ງມີຍ້ອນໃຊ້ຄົນທຸກ ຍາກເຮັດວຽກໃຫ້ຕົນເອງ.

ເມນາແຮມ ໄດ້ຕາຍໂດຍທັມມະຊາດ ແລະລູກຊາຍຂອງເພິ່ນຜູ້ມີຊື່ວ່າເປກາຮີອາ ໄດ້ຂຶ້ນຄອງແທນ. ເພິ່ນໄດ້ຄອງຕຳແໜ່ງສອງປີ ກ່ອນເປກາຜູ້ຮ່ວມງານໄດ້ໂຄ່ນລົ້ມດ້ວຍການຊ່ວຍເຫລືອຂອງຄົນ 50 ຄົນຈາກ ເມືອງ ກຽວລົນ. ເມນາແຮມໄດ້ສນັບສນູນພວກອາຊີເຣັຽ ທີ່ເປັນເຫດໃຫ້ພວກອິສຣາເອນໂກດຮ້າຍ ແລະກໍໄດ້ຊ່ອຍໃຫ້ ເປກາ ໂຄ່ນລົ້ມ.

ພວກ ອາຊີເຣັຽໄດ້ຍົກຍ້າຍຄົນອິສຣາເອນໄປຢູ່ທີ່ປະເທດຂອງເຂົາຊຶ່ງເປັນແຜນການປົກຄອງຂອງກະສັດ ໃນເມື່ອໄດ້ຮັບຊັຍຊະນະສົງຄາມ (2 ກະສັດ 15:29). ໃນທີ່ສຸດເປກາ ກໍໄດ້ຖືກສັງຫານດ້ວຍ ໂຮເຊອາ ຈຶ່ງເປັນການສິ້ນສຸດການຄອງຣາດເປັນເວລາຊາວປີ. ໂຮເຊອາ ມີຄວາມຈົງຮັກພັກດີຕໍ່ພວກອັດຊີເຣັຽ (17:3).

<u>ໃຫ້ເບິ່ງຄວາມໝາຍ</u>
ມີບົດຮຽນຫລາຍຢ່າງທີ່ພວກເຮົາຕ້ອງການຮຽນຈາກຄວາມບົກພ່ອງຂອງຊາດ ທີ່ນ້ອມຕົວເຂົ້າໄປຫາຄວາມຈິບຫາຍເພື່ອຈະບໍ່ເຮັດຄວາມຜິດຊ້ຳຮອຍ. ຕາມປົກກະຕິແລ້ວຜູ້ນຳທີ່ດີເປັນຜົນສະທ້ອນຂອງຊາດ ໃນປະຈຸບັນແລະອະນາຄົດ. ພວກເຮົາໄດ້ຮຽນຈາກວິທີ ຢໂຣໂບອາມ 1 ຜູ້ໄດ້ເຮັດໃຫ້ພວກອິສຣາເອນຫລົງຜິດ ແລະຫ່າງໄກໄປຈາກພຣະເຈົ້າ. ພຣະເຈົ້າໄດ້ສົ່ງຜູ້ປະກາດພຣະທັມມາບອກ ແຕ່ພວກເຂົາໄດ້ໃຊ້ ການເມືອງເປັນວິທີທາງຫາອຳນາດ-ແຕ່ບໍ່ໄດ້ຫຍັງເລີຍ. ຜົນທີ່ໄດ້ຮັບກໍຄືສັບສົນວຸ້ນວາຍ ມີການຂ້າຟັນ ຕລອດ-ດ້ວຍການຂ້າ ຜົນທີ່ໄດ້ຮັບກໍແມ່ນຄົນອື່ນຂ້າຄືນ.

ການທີ່ພວກອິສຣາເອນບໍ່ສັດຊື່ຕໍ່ພຣະເຈົ້າກໍເປັນເຫດໃຫ້ພວກເຂົາເສັຽຫາຍທາງດ້ານສັງຄົມ ແລະການເມືອງ. ເອລີຢາປະຕິເສດກະສັດເອເຮັບ ແລະອາໂມ ໄດ້ເອົາເຣື່ອງກະສັດເຢໂຣໂບອາມ 2 ໄດ້ບອກວ່າກະສັດໄດ້ໃຊ້ອຳນາດຜິດມີການສໍ້ຣາດແລະສານກໍບໍ່ມີສິນທັມ. ດັ່ງນັ້ນ, ເຫດການເຫລົ່ານີ້ຈຶ່ງເປັນເຫດ ໃຫ້ຊາດຖືກເຄາະກັມຕົກເປັນເມືອງຂຶ້ນຂອງປະເທດອື່ນ.

ບົດຮຽນອັນນີ້ໄດ້ບອກເຖິງທຸກສິ່ງຢ່າງຈະຢູ່ເໝືອນເດີມບໍ່ໄດ້ ມັນຕ້ອງມີການປ່ຽນແປງໄປ. ເຫັນວ່າໃນການປົກຄອງຂອງກະສັດເຢໂຣໂບອາມ 2 ພຣະເຈົ້າໄດ້ອວຍພຣະພອນ-ມີສັນຕິສຸກຈາກພາຍນອກ ແລະພຣະເຈົ້າກໍຊອບພຣະທັຍ. ແຕ່ຢ່າເຂົ້າໃຈຜິດວ່າ ຖ້າຊາດໃດຫລືຜູ້ໃດໄດ້ຮັບຄວາມຮັ່ງມີເປັນດີແລະມີສັນຕິສຸກ ຈາກພາຍນອກແລ້ວຄິດວ່ານັ້ນເປັນສັນຍາລັກພຣະເຈົ້າຊອບພຣະທັຍນຳ. ມີການຄ້າດີ ຫລືມີອຳນາດກາຍ ເປັນເຈົ້າໂລກນັ້ນບໍ່ແມ່ນການບົ່ງບອກວ່ານັ້ນເປັນພຣະພອນອັນສັກສິດຈາກພຣະເຈົ້າ. ໃຕ້ການປົກຄອງຂອງກະສັດ ເຢໂຣໂບອາມ ພວກອິສຣາເອນໄດ້ມີຈະຣິຍະທັມ ແລະວິນຍານຈິດຕ່ຳຕ້ອຍ ເມື່ອເປັນດັ່ງນັ້ນ ຜູ້ປະກາດພຣະທັມໂຮເຊອາ ແລະອາໂມດໄດ້ສັງເກດເຫັນສະພາບຕົວຈິງຂອງພວກອິສຣາເອນ.

ໃນການໝູນວຽນທີ່ບໍ່ສັດຊື່, ມີການສັບສົນວຸ້ນວາຍ ແລະໃຊ້ອຳນາດຜິດ ແຕ່ພຣະເຈົ້າຍັງເປັນຄວາມຫວັງ ຢູ່. ພຣະປະສົງຂອງພຣະເຈົ້າບໍ່ເຮັດໃຫ້ພຣະເຈົ້າປ່ຽນພຣະທັຍເພາະຄວາມຊົ່ວຊ້າຂອງມະນຸດເຮົາ. ພຣະອົງໄດ້ຮັກສາຄຳໝັ້ນ

ສັນຍາ ແລະສັດຊື່ເໝືອນດັ່ງພຣະລັກສະນະຂອງພຣະເຈົ້າ. ພຣະເຈົ້າໄດ້ໃຊ້ປະວັດ ສາດຂອງມະນຸສໂລກເພື່ອຈະເຮັດໃຫ້ແຜນການຂອງພຣະອົງສຳເຣັດເຊັ່ນ: ພຣະອົງໄດ້ໃຊ້ຄົນເໝືອນກະສັດເຢໂຣໂບອາມ 2. ເຖິງແມ່ນມີການຜິດບາບ ພຣະອົງຍັງມີຄວາມເມດຕາ, ພ ຣະເຈົ້າຍັງຈັດຫາໃຫ້ ເຮົາມີໂອກາດເພື່ອເຮັດໃຫ້ຊີວິດຂອງພວກເຮົາຖືກຕ້ອງໄປຕາມແຜນການທີ່ພຣະເຈົ້າມີໄວ້ ໃນເມື່ອພວກເຮົາຍອມໃຫ້ພຣະເຈົ້າຊ່ອຍໃນຊີວິດ. ຜູ້ນຳຄົນອິສຣາເອນບໍ່ຍອມໃຫ້ພຣະເຈົ້າຊ່ວຍ, ດັ່ງນັ້ນ, ຊາດຂອງພວກເຂົາຈຶ່ງໄດ້ຮັບຄວາມທຸກທໍຣະມານແສນສາຫັດ.

## ແຜນການສອນ-ກິຈກັມໃນການຮຽນ

### ສິ່ງທີ່ເອົາມາປະກອບໃຊ້ໃຫ້ປະຕິບັດ

1. ໃຫ້ຂຽນ "ຈົ່ງຕາມຜູ້ນຳ" ໃສ່ກະດານ. ຖາມຄຳຖາມ: ທ່ານຈື່ຫຍັງໄດ້ແດ່ໃນການຫລິ້ນເກມເໝືອນເດັກນ້ອຍນີ້? (ປະໃຫ້ຄົນໃນຫ້ອງຕອບ). ຖາມຕໍ່ໄປໂດຍກ່າວວ່າ: ທ່ານມັກເຮັດຫຍັງໃນເມື່ອທ່ານໄດ້ເປັນຜູ້ນຳ? ທ່ານຄິດວ່າ ມັນມີຈຸດປະສົງບໍ່ເວລາຫລິ້ນເກມນັ້ນ? ເປັນຫຍັງ ຫລືເປັນຫຍັງຈຶ່ງບໍ່ມີຄວາມໝາຍ? ໃຫ້ກ່າວວ່າໃນຊີວິດຂອງຄົນເຮົາເໝືອນດັ່ງເກມ, ຜູ້ນຳບາງຄົນອາດເປັນຄົນດີກ່ວາຜູ້ນຳອື່ນໆ. ຖາມອີກວ່າ, ຜູ້ນຳມີລັກສະນະຢ່າງໃດທ່ານຢາກໄດ້ເປັນຜູ້ນຳທ່ານ? ໃຫ້ຂຽນລັກສະນະຕ່າງໆໃສ່ກະດານ. "ຜູ້ນຳທີ່ມີຄຸນຄ່າ" (ຕົວຢ່າງສັດຊື່, ມີຊື່ສຽງດີ, ມີຄວາມສາມາດໃນການນຳພາ, ມີຄວາມຊຳນານ ແລະອື່ນໆ. ຖາມວ່າ: ທ່ານໄດ້ເຫັນບາງຜູ້ນຳທີ່ເຮັດໃຫ້ທ່ານມີຄຳຖາມ ຫລືປະຕິເສດບໍ່?

2. ກ່າວວ່າ: ໃນເມື່ອຜູ້ນຳໄດ້ຕັດສິນໃຈຜິດ, ທຸກຄົນໃນກຸ່ມນັ້ນກໍໄດ້ຮັບຜົນສະທ້ອນຕາມກັນໄປ. ເຣື່ອງນີ້ໄດ້ເກີດຂຶ້ນມາແລ້ວໃນປະວັດສາດຂອງພວກອິສຣາເອນ.

3. ໃຫ້ບອກເຖິງກະສັດຊົ່ວ 5 ຄົນຂອງພວກອິສຣາເອນ. ບອກວ່າ 4 ໃນ 5 ໄດ້ຖືກຂ້າ ຫລືຄາດຕະກັມ ນອກຈາກຜູ້ຄອງບັນລັງພຽງເດືອນດຽວ, ເພາະພວກເຂົາໄດ້ເຮັດຊົ່ວຕໍ່ພຣະພັກຂອງພຣະເຈົ້າ (15:9, 24, 28). ຈັດໃຫ້ມີຜູ້ອ່ານພຣະຄັມພີ 5 ທີມຂຶ້ນ. ບອກໃຫ້ແຕ່ລະທີມອ່ານພຣະຄັມພີທີ່ກ່ຽວຂ້ອງກັບກະສັດ 5 ອົງຂອງພວກອິສຣາເອນ:

ຊັກຂາຣີອາ, 2 ກະສັດ 15:8-10
ຊາລາມ, 2 ກະສັດ 15:13-15
ເມເນແຮມ, 2 ກະສັດ 15:17-21
ເປກາຣີອາ, 2 ກະສັດ 15:23-26
ເປກາ, 2 ກະສັດ

*ດຣ. ບູນ ວົງສຸຣິດທ໌*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 10
## ການສຸດສິ້ນຂອງປະເທດຊາດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ກະສັດ 17: 1-18, 21-23

**ພູມຫລັງຂອງພຣະຄັມພີ:** 2 ກະສັດ 17

**ຈຸດສຳຄັນຂອງບົດຮຽນນີ້:** ຫລາຍໆຄົນນຳຄວາມພິນາດມາສູ່ຕົວເອງ ເພາະພວກເຂົາບໍ່ສັດຊື່ຕໍ່ອົງພຣະຜູ້ເປັນເຈົ້າ.

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງຫລາຍໆປະເທດຈຶ່ງພັງທະລາຍ ແລະກາຍເປັນພຽງແປວຝຸ່ນໃນປະວັດສາດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮຽນຮູ້ການພ່າຍແພ້ຂອງອິສຣາເອນ ແລະການອົພຍົບຈາກດິນແດນ ຈົນບໍ່ມີໂອກາດໄດ້ກັບເປັນປະເທດອີກ ແລະເພື່ອຈະຮຽນຮູ້ທິດທາງທີ່ຈະຫລີກເວັ້ນສະພາບເຊັ່ນນັ້ນໃນສມັຍນີ້.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນການຮຽນ ຂຽນ "ຜົນ" ໃສ່ເທິງກະດານ. ທ່ານອາດຈະຕຽມພາກຝຶກຫັດຕໍ່ໄປນີ້ໄວ້ລ່ວງໜ້າເພື່ອຈະແຈກຢາຍໃຫ້ນັກຮຽນ:

    ການກະທຳທຸກຢ່າງຈະມີຜົນຕິດຕາມ.

    (1) ຂັບຣົດໄວໂພດ ______________________
    (2) ບໍ່ກິນຢາຕາມໝໍສັ່ງ ____________________
    (3) ແກ້ງຕົວະຄົນອື່ນ _____________________
    (4) ບໍ່ອອກກຳລັງກາຍເປັນປະຈຳ _______________
    (5) ຂັບຣົດເວລາເມົາເຫລົ້າ ___________________
    (6) ນອກໃຈຜົວ/ເມັຽ ____________________
    (7) ຂຽນເຊັກແຕ່ບໍ່ມີເງິນໃນທະນະຄານ _____________
    (8) ບໍ່ເຊື່ອຟັງຄຳສັ່ງ ________________
    (9) ໂທຕົວະນາຍວ່າບໍ່ສະບາຍ ແລ້ວຂາດການ ________________

2. ພານັກຮຽນເຮັດພາກຝຶກຫັດ. ໃຫ້ເວລາຕອບ. ກ່າວວ່າ: ເວລາພວກເຮົາເລືອກເຮັດຄວາມຜິດ ຜົນຮ້າຍກໍຈະຕາມມາ. ໃນພຣະທັມມື້ນີ້, ພວກເຮົາຈະເບິ່ງຜົນຫລາຍຢ່າງທີ່ເກີດຂຶ້ນຈາກການບໍ່ເຊື່ອຟັງພຣະເຈົ້າ. ເປົ້າໝາຍແມ່ນການຮຽນຮູ້ຄວາມຜິດທີ່ອິສຣາເອນໄດ້ເຮັດ ເພື່ອພວກເຮົາຈະໄດ້ຫລີກເວັ້ນຜົນທີ່ຕິດຕາມມາໃນທຳນອງດຽວກັນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ພາທຸກຄົນເປີດເບິ່ງ 2 ກະສັດ 17. ບອກນັກຮຽນວ່າ ພວກເຮົາກຳລັງສຶກສາເຣື່ອງປະເທດອິສຣາເອນ ແລະປະເທດຢູດາ ຫລັງຈາກທີ່ໄດ້ແຍກອອກຈາກກັນເປັນອານາຈັກເໜືອ ແລະໃຕ້. ບົດຮຽນໃນຕອນນີ້ຈະເວົ້າເຖິງອິສຣາ

ເອນຊຶ່ງເປັນອານາຈັກເໜືອ. ໃຫ້ຜູ້ນຶ່ງອ່ານ 2 ກະສັດ 17: 1-6 ແລະໃຫ້ຕັ້ງໃຈຟັງໃນສິ່ງທີ່ກະສັດໂຮເຊຢາໄດ້ເຮັດ ແລະຜົນທີ່ຕິດຕາມມາ. ເບິ່ງບົດຮຽນກ້ອງຫົວຂໍ້ ຖືກການພິພາກສາຂອງພຣະເຈົ້າ (17:1-6) ແລະສລູບເຣື່ອງທີ່ເກີດຂຶ້ນເຊັ່ນ ໂຮເຊຢາຢາກເປັນພັນທະມິດກັບປະເທດເອຢິບ; ອັດຊີເຣັຽຍົກທັບຕີ ອິສຣາເອນ; ອັດຊີເຣັຽຈັບຊາວອິສຣາເອນໄປເປັນຊະເລີຍ. ຫລັງຈາກນັ້ນໃຫ້ເບິ່ງ 17:7-17 ແລະອະທິບາຍເຫດຜົນທີ່ກໍ່ໃຫ້ທຸກຢ່າງເກີດຂຶ້ນໃນທຳນອງນັ້ນ. ສັງເກດເບິ່ງໃນພຣະທັມ 10 ຂໍ້ຕໍ່ໄປແມ່ນເວົ້າໃນ ສິ່ງທີ່ອິສຣາເອນໄດ້ເຮັດຊຶ່ງຜິດ ແລະເປັນການບໍ່ເຊື່ອຟັງພຣະເຈົ້າ.

4. ທ່ານອາດຈະໃຫ້ນັກຮຽນແຕ່ລະຄົນອ່ານຜູ້ລະສອງຂໍ້ຈາກ 2 ກະສັດ 17: 7-27. ໃຫ້ອ່ານຢ່າງງຽບໆເພື່ອຊອກຫາຄວາມຜິດທີ່ອິສຣາເອນໄດ້ເຮັດຊຶ່ງເປັນການບໍ່ເຊື່ອຟັງພຣະເຈົ້າ (ໃຫ້ເວລາພໍສົມຄວນ).

5. ຫລັງຈາກນັ້ນໃຫ້ເຂົາເຈົ້າປ່ຽນຜຽນກັນສລູບໃຫ້ທຸກຄົນໄດ້ຍິນ ໃນສິ່ງທີ່ອິສຣາເອນໄດ້ເຮັດຕາມລຳດັບໄປ.

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

6. ຖາມ: ຖ້າທ່ານເປັນພຣະເຈົ້າ, ທ່ານຈະຮູ້ສຶກແນວໃດໃນການກະທຳຂອງຊາວອິສຣາເອນ ໃນພຣະທັມຕອນນີ້? ທ່ານຈະເຮັດແນວໃດກັບພວກເຂົາ?

7. ໃຫ້ຜູ້ນຶ່ງອ່ານ 17: 18-23. ບອກວ່າ: ຊາວອິສຣາເອນໄດ້ເຮັດຄວາມຜິດບາບຕໍ່ພຣະເຈົ້າຕັ້ງແຕ່ເລີ້ມຕົ້ນເປັນປະເທດ ແລະໄດ້ເຮັດຄວາມຜິດບາບໄປເລື້ອຍໆ. ຈົນໃນທີ່ສຸດ, ພຣະເຈົ້າຈຶ່ງຕ້ອງໄດ້ທຳລາຍປະເທດອິສຣາເອນເພາະການບໍ່ເຊື່ອຟັງຂອງພວກເຂົາ.

8. ເບິ່ງພາກ ສລູບ ໃນບົດຮຽນ. ໃຊ້ຄຳຖາມ 1,2, ແລະ 5 ເພື່ອຊ່ວຍໃນການສົນທະນາ. ຖາມ: ມີຫຍັງແດ່ທີ່ຊາວອິສຣາເອນໄດ້ເຮັດ ແລະມີຫຍັງແດ່ຄືຜົນທີ່ຕິດຕາມມາ ຊຶ່ງພວກເຮົາສາມາດຮຽນຮູ້ ແລະຫລີກເວັ້ນ?

*ດຣ. ສິດນີ ຄານ*

# ແນະນຳຄຣູສອນ
# ບົດຮຽນທີ 11
# ເວລາສະພາບການສຸກເສີນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ກະສັດ 18:1-19, 29-31; 19:1-11,14-20

**ພູມຫລັງຂອງພຣະຄັມພີ:** 2 ກະສັດ 18-19

**ຈຸດສຳຄັນຂອງບົດຮຽນນີ້:** ຄົນທີ່ສັດຊື່ແລະໄວ້ວາງໃຈໃນພຣະເຈົ້າຈະໄດ້ຮັບສິ່ງທີ່ຕ້ອງການໃນຊີວິດຈາກພຣະອົງ.

**ຄຳຖາມເພື່ອການຄົ້ນຄວ້າ:** ໃນເວລາສະພາບສຸກເສີນ ພວກເຮົາສາມາດໄວ້ວາງໃຈໃນພຣະເຈົ້າໃຫ້ພຣະອົງຊ່ວຍໄດ້ບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອນຳພາຫ້ອງຮຽນໃຫ້ສລູບເຖິງຄວາມໝາຍໃນເຣື່ອງພວກ ອັດຊີເຣັຽໄດ້ທ້າທາຍຕໍ່ກະສັດເຮເຊຄີອາ ທີ່ເພິ່ນໄດ້ເຊື່ອໃນພຣະເຈົ້າກ່ຽວກັບຊີວິດປະຈຳວັນ.

## ອະທິບາຍພຣະຄັມພີ

### ເຂົ້າໃຈໃນເນື້ອເຣື່ອງ

ສະພາບສຸກເສີນນັ້ນເປັນພາກສ່ວນຂອງຊີວິດປະຈຳວັນ. ພວກເຮົາຈະໂຕ້ຕອບໄດ້ດ້ວຍຢ່າງໃດ. ພວກເຮົາສາມາດໄວ້ວາງໃຈໃນພຣະເຈົ້າໃນເມື່ອລົມພະຍຸແຫ່ງຊີວິດເຂົ້າມາໄດ້ບໍ່? ບົດຮຽນວັນນີ້ແມ່ນເຣື່ອງການໄວ້ວາງໃຈຂອງກະສັດຜູ້ສຳຄັນຂອງເມືອງຢູດາ ຄືກະສັດເຮເຊຄີອາໃນພາວະສຸກເສີນ.

ເໝືອນດັ່ງພວກເຮົາໄດ້ຮຽນມາແລ້ວວ່າ ອານາຈັກທາງເໜືອຂອງອິສຣາເອນໄດ້ຕົກເປັນເມືອງຂຶ້ນ ຍ້ອນການໂຈມຕີຂອງພວກອັດຊີເຣັຽ ໃນ 722 ກ່ອນ ຄສ. ເພາະຄົນຂອງພຣະເຈົ້າບໍ່ສັດຊື່ຕໍ່ພຣະເຈົ້າ ( 2 ກະສັດ 18:9-12). ພວກອັດຊີເຣັຽໄດ້ປົກຄອງອິສຣາເອນດ້ວຍເຈົ້າແຂວງຂອງພວກເຂົາ. ກະສັດຊາກອນ 2 ໄດ້ຍົກຍ້າຍພວກອິສຣາເອນຫລາຍພັນ ຄົນໄປຕັ້ງຖິ່ນຖານຢູ່ອານາຈັກຂອງອັດຊີເຣັຽ. ເມືອງຢູດາທາງພາກໃຕ້ໄດ້ມີຊີວິດຢູ່ດີກວ່າພາກເໜືອຫລືບໍ່?

ກະສັດອາແຮບເປັນບິດາຂອງເຮເຊຄີອາ (735-715 ກ່ອນ ຄສ.), ໄດ້ຍອມຈຳນົນຕໍ່ອຳນາດຂອງພວກອັດຊີເຣັຽແລະເຮັດໃຫ້ເມືອງຢູດາກາຍເປັນຫົວເມືອງຂຶ້ນ (16:7-9). ເປັນໜ້າເສົ້າໃຈ ກະສັດອາແຮບຍັງໄດ້ໃຫ້ມີການນັບຖືພະຂອງພວກການາອານອີກດ້ວຍໃນເມືອງຢູດາ. ເພິ່ນຍັງໄດ້ສ້າງແທນບູຊາຕໍ່ພະຕ່າງດ້າວໃນພຣະວິຫານໃນກຸງເຢຣູຊາເລັມ (16:10-18). ຢູດາໄດ້ຈ່າຍພື້ໜັກພາຍໃຕ້ການນຳພາຂອງກະສັດອາແຮບປົກຄອງເພາະເພິ່ນໄດ້ຫ່າງຈາກພຣະເຈົ້າ. ພຣະຄັມພີໄດ້ປະນາມກະສັດອາແຮບວ່າ "ເພິ່ນບໍ່ໄດ້ເຮັດສິ່ງໃດດີຕໍ່ສາຍພຣະເນດຂອງພຣະເຈົ້າຂອງຕົນເໝືອນດັ່ງບັນພະບຸຣຸດ ກະສັດດາວິດໄດ້ເຄີຍເຮັດມາ, ແຕ່ກະສັດອິສຣາເອັນໄດ້ເຮັດແຕ່ຄວາມຊົ່ວຮ້າຍ" (16:2-3).

ກະສັດເຮເຊຄີອາ (715-687 ກ່ອນ ຄສ.) ໄດ້ສແວງຫາທາງໃໝ່. ເພິ່ນໄດ້ເຮັດກົງກັນຂ້າມກັບນະໂຍບາຍຂອງຜູ້ເປັນບິດາ-ເພິ່ນໄດ້ປະກາດຕົນເປັນເອກກະຣາດຈາກອຳນາດຂອງອາຊີເຣັຽ. ກະສັດຜູ້ມີຄວາມສາມາດແລະຖວາຍຕົນເອງກໍຫາໄດ້ຍາກ. ພຣະຄັມພີໄດ້ເວົ້າເຖິງກະສັດ 4 ຄົນຜູ້ເປັນກະສັດຂອງຢູ່ດາຜູ້ໄດ້ປະຕິຣູບເຊັ່ນ: ອາຊາ (1 ກະສັດ 15:9-15); ເຢໂຮຊາແຟດ (1 ກະສັດ 22:41-50); ເຮເຊຄີອາ (2 ກະສັດ 18-20); ແລະ ໂຢອາດ (2 ກະສັດ 22-23). ກະສັດທີ່ກ່າວມານີ້ເປັນຜູ້ນຳພາປະຊາຊົນຂອງຕົນເອງກັບຄືນຫາພຣະເຈົ້າໂດຍທຳລາຍເຄື່ອງບູຊາທີ່ກ່ຽວຂ້ອງກັບການນະມັສການຂອງພຣະຕ່າງຊາດ ແລະຂອງຕ້ອງຫ້າມທີ່ພຣະເຈົ້າບໍ່ຊອບພຣະທັຍ.

ກະສັດເຮຊາຄີອາໄດ້ຊ່ອຍຕຽມປະຊາຊົນຂອງພຣະອົງຕຽມຕົວເພື່ອຈະກູ້ເອົາຊາດຈາກການປົກຄອງຂອງອຳນາດອັດຊີເຣັຽ. ມີນັກປາດຫລາຍຄົນພາກັນໂຕ້ຖຽງກັນເຖິງເຫດການທີ່ເກີດຂຶ້ນທີ່ເປັນລຳດັບ, ແຕ່ຄວາມຈິງນັ້ນແຈ່ມແຈ້ງດີວ່າກະສັດເຮຊາຄີອາ ໄດ້ເອົາພຣະຕ່າງຊາດແລະເຄື່ອງກ່ຽວຂ້ອງກັບການນະມັສກາອອກໄປຈາກພວກຢູດາ, ແລະເພິ່ນໄດ້ພາປະຊາຊົນກະບົດຕໍ່ກະສັດຂອງພວກອັດຊາເຣັຽ, ເຊັນນາເຊຣິບ (705-687 ກ່ອນ ຄສ). ຕໍ່ມາໃນ 701 ພວກອັດຊາເຣັດໄດ້ໂຈມຕີຢ່າງໜັກທີ່ໄດ້ບັນທຶກໄວ້ໃນບັນຊີ, ວ່າພວກເຂົາໄດ້ຍຶດເອົາເມືອງຢູດາ ແລະໄດ້ທຳລາຍຫລາຍໆບ້ານເມືອງ ແລະໄດ້ຍຶດເອົາກຸງເຢຣູຊາເລັມເໝືອນກັນ.

ກະສັດເຮຊາຄີອາໄດ້ເຮັດຢ່າງໃດ? ເພິ່ນໄດ້ຍອມແພ້ແລະຈ່າຍຄ່າພາສີໃຫ້ຫລືເພິ່ນໄດ້ສະແວງຫາໃນດ້ານຈິດວິນຍານໂດຍເຊື່ອແລະໄວ້ວາງໃຈໃນພຣະເຈົ້າເພື່ອໃຫ້ພຣະອົງໄດ້ຊ່ອຍກູ້? ໃນບົດ 2 ກະສັດ 18-19 ໄດ້ເປີດເຫັນຄຳຕອບ. (ໝາຍເຫດ ໃນ ເອຊາຢາ 36-39 ແລະ 2 ຂ່າວຄາວ 29-32 ໄດ້ບອກເຖິງເຣື່ອງນີ້ຢ່າງລະອຽດ.

## ການແປພຣະຄັມພີ

### 1. <u>ກະສັດປົກຄອງທີ່ເຊື່ອຟັງພຣະເຈົ້າ</u> ( 2 ກະສັດ18:1-8 )

<u>18:1.</u> ການຄອງບັນລັງຊາວເກົ້າປີຂອງກະສັດເຮຊາຄີອາ (ໝາຍຄວາມວ່າ: <u>ພະລັງຂອງພຣະເຢໂຮວາ</u>) .ເຫັນວ່າເປັນການຍາກທີ່ຈະເອົາເຫດເກີດຂຶ້ນນັ້ນລຽງເປັນລຳດັບກັນໄປ. ມີນັກປາດຫລາຍຄົນເຊື່ອວ່າກະສັດເຮຊາຄີອາໄດ້ຂຶ້ນບັນລັງໃນປີ 715 ກ່ອນ ຄສ.) ອີງຕາມຄວາມຈິງວ່າກະສັດ ເຊັນນາເຊຣິບ ໄດ້ໂຈມຕີກຸງເຢຣູຊາເລັມໃນປີ 701 ກ່ອນ ຄສ. ເປັນປີທີສິບສີ່ໃນການຄອງຣາດ (2 ກະສັດ 18:13). ແຕ່ 2 ກະສັດ 18:1, 9-10 ໄດ້ບອກວ່າກະສັດເຮຊາຄີອາໄດ້ຄອງຣາດກ່ອນເມືອງຊາມາເຣັຽໄດ້ຕົກເປັນເມືອງຂຶ້ນ, ດັ່ງນັ້ນ, ຈຶ່ງເປັນການເຂົ້າໃຈວ່າກະສັດເຮຊາຄີອາປົກຄອງບັນລັງຈາກປີ 727-698 ກ່ອນ ຄສ.

<u>18:2-7.</u> ການແນະນຳເຖິງການຄອງຣາດຂອງກະສັດເຮຊາຄີອາເປັນເຣື່ອງດີ ເຫັນວ່າບໍ່ມີກະສັດຜູ້ໃດສາມາດປົກຄອງດີກວ່າເພິ່ນໄດ້. ມີບຸກຄະລິກບາງຢ່າງແຕກຕ່າງ. 1. ເຮຊາຄີອາ ໄດ້ເລີ້ມຕົ້ນປະຕິຮູບການນະມັສການໃນເມືອງຢູດາ. ເພິ່ນເປັນກະສັດຄົນທຳອິດທີ່ທຳລາຍບ່ອນນະມັສການຂອງພວກຕ່າງຊາດ (ໃນບ່ອນສູງຕ່າງໆ)ທີ່ຢູ່ຫ່າງຈາກກຸງເຢຣູຊາເລັມ. ໃຫ້ເຂົ້າໃຈວ່າບໍ່ແມ່ນບ່ອນສູງທຸກໆບ່ອນໄດ້ມີພາກສ່ວນຂອງການນະມັສການພຣະຕ່າງຊາດ, ບາງບ່ອນສູງກໍໃຊ້ຖືກຕ້ອງໃນການນະມັສການພຣະເຈົ້າ ພຣະເຢໂຮວາ. ແຕ່ຫລາຍໆບ່ອນສູງ ໃນອານາຈັກທາງເໜືອຕົກຢູ່ໃນການຄອບຄອງຂອງພວກການາອານທີ່ນັບຖືພະອື່ນທີ່ພຣະເຈົ້າບໍ່ພໍພຣະທັຍ.

2. ກະສັດເຮເຊຄີອາໄດ້ເຊື່ອຟັງພຣະຄຳຣັດຂອງພຣະເຈົ້າ (2 ກະສັດ 18:6) ແລະໄດ້ໄວ້ວາງໃຈໃນພຣະອົງ (18:5). ຄຳເວົ້າວ່າ ໄວ້ວາງໃຈເປັນຄວາມຄິດ ແລະຄວາມເຂົ້າໃຈທີ່ສຳຄັນໃນບົດ 18-19. ຄຳເວົ້ານີ້ໄດ້ມີຢູ່ຫລາຍບ່ອນ (18:5, 19-22, 24:19, 19). ມັນເປັນຄວາມຈິງແທ້ ຄຳເວົ້າວ່າ ໄວ້ວາງໃຈນັ້ນເປັນຫົວໃຈ ສຳລັບກະສັດ ເຮເຊຄີອາຢູ່ໃນຖານກາງພາວະສຸກເສີນ.

3. ເພາະເພິ່ນໄດ້ເຊື່ອຟັງແລະໄວ້ວາງໃຈໃນພຣະເຈົ້າ, ດັ່ງນັ້ນ ເພິ່ນຈຶ່ງໄດ້ຮັບຄວາມສຳເຣັດ (ຮັ່ງມີ) ໃນວິທີທາງຂອງເພິ່ນ (18:17). ຄວາມລຳເຣັດຂອງເພິ່ນປະກອບດ້ວຍ ຊັຍຊະນະດ້ານທະຫານຕໍ່ພວກຟີລິສຕິນ ແລະອັດຊີເຣັຽຄູ່ສັດຕຣູ. (18:7-8). ແນ່ນອນພຣະເຈົ້າໄດ້ສະຖິດຢູ່ກັບກະສັດເຮເຊຄີອາ ແລະປະທານກຳລັງໃຫ້ເພິ່ນເພື່ອຈະໄດ້ປະສົບກັບພາວະສຸກເສີນແສນສາຫັດ.

### 2. <u>ບົດຮຽນອັນລ້ຳຄ່າຈາກອະດີດ</u> ( 2 ກະສັດ18:9-12 )

ເປັນການເຕືອນໃຫ້ລະວັງເຖິງຄວາມບໍ່ສັດຊື່ຕໍ່ພຣະເຢໂຮວາ, ພວກນັກຂຽນໄດ້ສລູບເຖິງເຄາະກັມຂອງອານາຈັກທາງ

ພາກເໜືອ, ອິສຣາເອນ. ເປັນການສົມຄວນທີ່ພຣະເຈົ້າຈະໄດ້ລົງໂທດຜູ້ທີ່ບໍ່ສັດຊື່ຕໍ່ພຣະສັນຍາຂອງພຣະເຈົ້າ ແລະເປັນບົດຮຽນທີ່ເຕືອນໃຫ້ພາກໃຕ້, ຢູດາບໍ່ເຮັດຄວາມຜິດຊໍ້າຮອຍ.

### 3. ພາວະສຸກເສີນ: ພວກອັດຊາເຣັຽໄດ້ໂຈມຕີກຸງເຢຣູຊາເລັມ ( 2 ກະສັດ18:13-16 )

18:13-16. ກະສັດເຮເຊຄີອາໄດ້ມີແຜນການກະບົດຕໍ່ອຳນາດຂອງພວກອັດຊາເຣັຽຕັ້ງແຕ່ເລີ່ມຕົ້ນຄອງຣາດ. ເພິ່ນໄດ້ໃຫ້ມີນໍ້າປະປາຈາກກຸງເຢຣູຊາເລັມ, ເຮັດກຳແພງລ້ອມເມືອງຢ່າງແໜ້ນໜາ, ແລະກໍເກັບກຳເອົາອາວຸດໄວ້ໃນສາງເພື່ອຈະຕໍ່ສູ້ກັບການໂຈມຕີຂອງສັດຕຣູອັດຊາເຣັຽ (20:20; 2 ຂ່າວຄາວ 32:30; ເອຊາຢາ 22:8-10). ເວລາກະສັດຊາກອນ 2 ໄດ້ຕາຍໃນປີ 705 ກ່ອນ ຄສ.) ຜູ້ສືບຕຳແໜ່ງແທນແມ່ນ ເຊັນນາເຊຣິບ (705-581 ກ່ອນ ຄສ.) ໄດ້ມີການກະບົດຂຶ້ນໃນກຸງບາບີໂລນດ້ວຍການຊ່ອຍເຫລືອຈາກພວກເອຢິບໂຕ, ກະສັດ ເຮເຊຄີອາ ຈິ່ງສວຍໂອກາດຢຸດການຈ່າຍພາສີໃຫ້ອັດຊາເຣັຽ.

ດັ່ງນັ້ນ, ເຊັນນາເຊຣິບຈິ່ງຕອບໂຕ້ດ້ວຍການໂຈມຕີເມືອງຢູດາໃນປີ (701 ກ່ອນ ຄສ). ອີງຕາມໜັງສືຂອງພວກອັດຊາເຣັຽ ພວກເຂົາໄດ້ທຳລາຍ 46 ເມືອງທີ່ມີກຳແພງແໜ້ນໜາ. ພວກນັກວິທະຍາສາດດ້ານສຶກສາເມືອງເກົ່າແກ່ໄດ້ຄົ້ນພົບເຫັນວ່າມີການທຳລາຍໃນເວລານີ້ເກີດຂຶ້ນແທ້ໃນເມືອງຢູດາ, ຊຶ່ງເປັນພາບບອກເຖິງຄວາມໂຫດຮ້າຍຂອງອັດຊາເຣັຽ.

ກະສັດເຊັນນາເຊຣິບໄດ້ຍຶດເອົາກຸງເຢຣູຊາເລັມ ແລະຈັບເອົາກະສັດເຮເຊຄີອາ "ໃສ່ຕຸ້ມເໝືອນນົກ. " ໃນທີ່ສຸດກະສັດເຮເຊຄີອາ ກໍໄດ້ຈ່າຍພາສີສູງໃຫ້ສັດຕຣູເພື່ອບໍ່ໃຫ້ທຳລາຍປະເທດຊາດ. ກະສັດເຊັນນາເຊຣິບໄດ້ເກັບເອົາຂອງມີຄ່າຄືເງິນແລະຄຳອອກໄປຈາກພຣະວິຫານ (18:14-17).

18:17-36. ເຖິງແມ່ນກະສັດເຮເຊຄີອາຍອມທຸກຢ່າງ ພວກສັດຕຣູຍັງບັງຄັບຢ່າງໜ້າເຫລືອທົນໄດ້. ກະສັດເຮເຊຄີອາໃຫ້ທະຫານຢຸດການຕໍ່ສູ້ ແລະກະສັດເຊັນນາເຊຣິບໄດ້ສົ່ງເຈົ້າໜ້າທີ່ຂັ້ນສູງສາມຄົນໄປຍັງກຸງເຢຣູຊາເລັມຄື: ທາທັນ, ຣັບຊາຣີ, ແລະ ຣັບຊາເກ (18:17) ແລະພວກເຂົາໄດ້ປະຊຸມກັບເຈົ້າໜ້າທີ່ສູງສຸດຂອງກະສັດ ເຮເຊຄີອາ (18:17-19).

ພວກເຂົາໄດ້ປະຊຸມກັນຢູ່ນອກກຳແພງເມືອງເຢຣູຊາເລັມ. ຄວາມເວົ້າທີ່ໃຊ້ນັ້ນເປັນເຣື່ອງຈິດຕະວິທະຍາຂອງພວກອັດຊີເຣັຽໃຊ້ໃນເວລາສົງຄາມເພື່ອຈະໃຫ້ສັດຕຣູຢ້ານຕົກໃຈ. ຄວາມເວົ້ານັ້ນເປັນເຣື່ອງເປັນເຣື່ອງຕາຍ: ແມ່ນໃຜທີ່ກະສັດເຮເຊຄີອາ ໄວ້ວາງໃຈເພື່ອຈະໄດ້ຮັບການສົງຊ່ອຍ? ບ່ອນໃດເປັນບ່ອນປອດພັຍ? ຣັບຊາເກໄດ້ໂຕ້ຖຽງກັບວ່າກະສັດເຮເຊຄີອາໄດ້ເພິ່ງຄວາມຫວັງປອມ (2 ກະສັດ 18:19-25). (1) ເອຢິບໂຕບໍ່ເປັນໜ້າໄວ້ວາງໃຈທີ່ຈະຊ່ອຍ (18:21). (2) ພຣະເຈົ້າຈະບໍ່ຊ່ອຍເພາະກະສັດ ເຮເຊຄີອາ ໄດ້ເຮັດຜິດຕໍ່ພຣະເຈົ້າໂດຍປິດບ່ອນນະມັສການຂອງພຣະຕ່າງຊາດ (18:22) (3) ທະຫານຂອງຢູດາບໍ່ສາມາດຈະທຽບກັບກຳລັງທະຫານອັນຍິ່ງໃຫຍ່ຂອງອັດຊີເຣັຽໄດ້ (18:23-24). (4) ພຣະເຈົ້າຍົກອັດຊີເຣັຽຂຶ້ນເພື່ອຈະລົງໂທດເມືອງຢູດາ! (18:25).

ຣັບຊາເກໄດ້ສລຸບວ່າ ບໍ່ມີພຣະອົງໃດໃນໂລກນີ້ສາມາດຕໍ່ສູ້ພະລັງອຳນາດຂອງອັດຊີເຣັຽໄດ້. ລາວຍັງບອກຄົນທີ່ຕໍ່ສູ້ໃນອະດີດແລະບໍ່ໄດ້ຄວາມສຳເຣັດ (2 ກະສັດ 18: 33-35; ຄຳໂຕ້ຖຽງຢ່າງນີ້ໄດ້ມີຂຶ້ນອີກໃນບົດ 19:10-14). ແນ່ນອນພຣະເຈົ້າຂອງຢູດາກໍບໍ່ສາມາດຊະນະອັດຊີເຣັຽໄດ້ເລີຍ. ຄຳກ່າວຢ່າງນີ້ໄດ້ຜົນດີສຳລັບເຂົາ ເພາະປະຊາຊົນແລະກະສັດເຮເຊຄີອາ ກໍບໍ່ໄດ້ເວົ້າຕອບໂຕ້ຈັກຄຳ. ຄະນະເຈຣະຈາກໍໄດ້ກັບຄືນໄປໃນວັງດ້ວຍການຈີກເຄື່ອງນຸ່ງທີ່ເປັນສັນຍາໃນການຜິດຫວັງ. (18:36-37).

**4. ການຕອບໂຕ້ຂອງຜູ້ປະກາດພຣະທັມ ເອຊາຢາ ແລະ ກະສັດເຮເຊກີອາ** ( 2 ກະສັດ19:1-11, 14-20 )

19:1-11. ຄວາມໝົດຫວັງໄດ້ມາເຖິງກະສັດເຮເຊກີອາ. ເພິ່ນໄດ້ຈີກເສື້ອຜ້າແລະນຸ່ງກະສອບແທນເຄື່ອງທົງ. ເພິ່ນໄດ້ສົ່ງເຈົ້າໜ້າທີ່ຜູ້ສູງສຸດໄປຫາຜູ້ປະກາດພຣະທັມເອຊາຢາ ຊຶ່ງເປັນທີ່ປຶກສາຂອງກະສັດເປັນເວລາຫລາຍສິບປີ. ແມ່ນແທ້ ຂໍ້ 3 ໄດ້ເວົ້າເຖິງຄວາມຜິດຫວັງ, ນ້ອຍໃຈ, ຖືກຕິຕຽນ, ແລະໄດ້ຮັບຄວາມລະອາຍ. ເມືອງຢູດາແລະພຣະຜູ້ເປັນເຈົ້າໄດ້ຮັບການຫຍໍ້ຫຍັນ

ພຣະເຈົ້າໄດ້ຕອບກະສັດເຮເຊກີອາ ຜ່ານທາງຜູ້ປະກາດພຣະທັມວ່າ: "ຢ່າຢ້ານເລີຍ" (19:6). ພຣະເຈົ້າໄດ້ຍິນຄຳເຍາະເຍີ້ຍຂອງພວກອັດຊາເຣັຽ ແລະພຣະເຈົ້າເອງຈະເປັນຜູ້ຊ່ອຍປົດປ່ອຍເມືອງຢູດາອອກຈາກອຳນາດຂອງພວກອັດຊາເຣັຽ. 1. ພຣະເຈົ້າຈະເອົາຄວາມເຍາະເຍີ້ຍຂອງ ເຊັນນາເຊຣິບ ເຮັດໃຫ້ເພິ່ນຖອນອອກໄປ. 2. ພຣະເຈົ້າຈະເຮັດໃຫ້ເຊັນນາເຊຣິບຕາຍ.

ບົດນີ້ໄດ້ບອກເຖິງຈຸດສຳຄັນເຖິງການປ່ຽນແປງຂອງພວກອັດຊີເຣັຽຕໍ່ເມືອງເຢຣູຊາເລັມ. ກ່ອນນັ້ນຣັບຊາເກໄດ້ກ່າວວ່າກະສັດເຮເຊກີອາ ໄດ້ເວົ້າຕົວະຕໍ່ປະຊາຊົນ (18:19). ໃນບົດນີ້ກະສັດຂອງພວກອັດຊີເຣັຽກ່າວຫາວ່າພຣະເຈົ້າເປັນຜູ້ຕົວະຕໍ່ປະຊາຊົນໃນກຸງເຢຣູຊາເລັມ. ກະສັດອັດຊີເຣັຽກ່າວວ່າບໍ່ມີພຣະອົງໃດສາມາດເອົາຊັຍຊະນະຕໍ່ອຳນາດຂອງອັດຊາເຣັຽໄດ້. (19:12-13).

19:14-20. ໃນເມື່ອໄດ້ຍິນຄຳເວົ້າຂອງກະສັດອັດຊີເຣັຽ, ກະສັດເຮເຊກີອາ ໄດ້ເຂົ້າໄປໃນພຣະວິຫານແລະໃນທີ່ນັ້ນເພິ່ນໄດ້ຖອກເທຈິດໃຈຕໍ່ພຣະເຈົ້າດ້ວຍການອ້ອນວອນອະທິຖານຢ່າງມີພະລັງຊຶ່ງເປັນການຍົກຍ້ອງພຣະເຈົ້າ(19:15). ຕໍ່ວ່າ (19:16-19) ກະສັດເຮເຊກີອາ ຍັງໄດ້ກ່າວຢ່າງໝັ້ນໃຈວ່າພຣະເຈົ້າຂອງອິສຣາເອນຍັງນັ່ງບັນລັງເໜືອທຸກສິ່ງ. ພຣະອົງໄດ້ສ້າງຟ້າສວັນແລະພຣະອົງກໍຍິ່ງໃຫຍ່ໄປກວ່າອຳນາດທຸກຢ່າງ. ຄຳນີ້ເປັນສິ່ງຕົງກັນຂ້າມກັບຄຳເວົ້າຂອງກະສັດອັດຊີເຣັຽທີ່ອ້າງຕົວວ່າເປັນຜູ້ຍິ່ງໃຫຍ່. ໃນທີ່ສຸດກະສັດເຮເຊກີອາກໍໄດ້ເອົາຄວາມໝັ້ນໃຈໄວ້ໃນພຣະເຢໂຮວາ, ບໍ່ແມ່ນໄວ້ໃຈໃນພວກອັດຊາເຣັຽ.

ຜູ້ປະກາດພຣະທັມເອຊາຢາໄດ້ເວົ້າຢ່າງໜັກແໜ້ນວ່າ ພຣະເຈົ້າໄດ້ຍິນຄຳອ້ອນວອນຂອງກະສັດເຮເຊກີອາ ແລ້ວ (19:20). ເອຊາຢາໄດ້ເວົ້າເປັນຂັ້ນເປັນຕອນ (19:21-34) ເຍາະເຍີ້ຍອັດຊີເຣັຽ ແລະຍັງຢືນວ່າພຣະເຈົ້າຈະຊ່ອຍໃຫ້ເຢຣູຊາເລັມພົ້ນພັຍອັນຕະລາຍໄດ້ "ເພາະໃນພຣະນາມຂອງເຮົາ ແລະເພາະໃນນາມຂອງຂ້າໃຊ້ດາວິດ" (19:34). ເປັນໜ້າເສົ້າໃຈໃນຂັ້ນຕໍ່ໄປໃນບົດຮຽນນີ້, ປະຊາຊົນໃນເມືອງຢູດາເຂົ້າໃຈຜິດເຖິງຂໍ້ສັນຍານີ້ວ່າ ພຣະເຈົ້າຈະບໍ່ທຳລາຍເຢຣູຊາເລັມອີກຈັກເທື່ອເຖິງແມ່ນພວກເຂົາຈະເຮັດຜິດປານໃດກໍຕາມ.

**4. ຊ່ອຍກຸງເຢຣູຊາເລັມໃຫ້ພົ້ນ** ( 2 ກະສັດ19:35-38 )

ພຣະເຈົ້າໄດ້ເຮັດໃຫ້ຄຳທຳນວາຍຂອງຜູ້ປະກາດພຣະທັມ ເອຊາຢາກາຍເປັນຈິງ ໂດຍສົ່ງ "ເທວະດາຂອງອົງພຣະຜູ້ເປັນເຈົ້າ" ລົງມາທຳລາຍທະຫານຂອງພວກອັດຊີເຣັຽ. ທະຫານເປັນພັນໆໄດ້ເສັຽຊີວິດ, ພວກເຂົາໄດ້ຖອນໜີອອກໄປ. ກຸງເຢຣູຊາເລັມໄດ້ຮັບຄວາມຊ່ອຍເຫລືອຈາກພຣະເຈົ້າ. ຕໍ່ມາສະກັດເຊັນນາຊີຣິບ ໄດ້ຖືກຂ້າດ້ວຍລູກຊາຍສອງຄົນໃນວິຫານທີ່ເມື່ອງເນນີເວຕໍ່ໜ້າພຣະຊີາເປັຍຮູບໂຄຣົບຂອງອັດຊີເຣັຽ ຜູ້ບໍ່ສາມາດຊ່ອຍລາວເລີຍ!

**ໃຫ້ເບິ່ງຄວາມໝາຍ**

ປະວັດຂອງກະສັດເຮເຊກີອາ ໄດ້ຍົກສູງການໄວ້ວາງໃຈໃນພຣະເຈົ້າ. ກະສັດເຮເຊກີອາ ໄດ້ໄວ້ວາງໃຈໃນພຣະເຈົ້າ

ຜູ້ນຳເອົາຄວາມສຳເຣັດມາໃຫ້ເພິ່ນໃນການຕໍ່ສູ້ກັບສັດຕຣູ. ໃນເມື່ອເພິ່ນໄດ້ຄິດກະບົດຕໍ່ອຳນາດຂອງອັດຊາເຣັຽ ປະເທດຊາດກໍໄດ້ຮັບຄວາມຂັດສົນ. ພວກທະຫານຂອງອັດຊີເຣັຽໄດ້ອ້ອມຮອບເມືອງໄວ້, ເພິ່ນຈະຫັນໄປຫາໃຜຊ່ອຍ? ການຕັດສິນໃຈຂອງເພິ່ນເປັນຜົນສະທ້ອນຕໍ່ປະເທດຊາດ. ເພິ່ນສົມຄວນທີ່ຈະເພິ່ງພຣະເຈົ້າຜູ້ມອງເຫັນກັບຕາບໍ່ໄດ້ ຫລືເພິ່ນ ຈະເພິ່ງອຳນາດຂອງອັດຊີເຣັຽຜູ້ເຫັນກັບຕາບໍ່?

ກະສັດເຮເຊຄີອາ ໄດ້ຊອກຫາເອົາຄວາມແນະນຳຈາກຜູ້ປະກາດພຣະທັມເອຊາຢາ. ຜູ້ປະກາດພຣະທັມໄດ້ໜູນໃຈໃຫ້ເຊື່ອແລະວາງໃຈໃນພຣະເຈົ້າເທົ່ານັ້ນແຕ່ອົງດຽວ. ສິ່ງສຳຄັນແມ່ນກະສັດເຮເຊຄີອາ ໄດ້ຮຽນບົດຮຽນອັນລ້ຳຄ່າ ຄື ໃນພາວະສຸກເສີນໃຫ້ອ້ອນວອນຫາພຣະເຈົ້າຜູ້ຊ່ອຍໄດ້. ດ້ວຍການອ້ອນວອນ ພວກເຮົາກໍມີກຳລັງໃນການໄວ້ວາງໃຈໃນພຣະເຈົ້າເພື່ອຈະປະເຊີນກັບພາວະສຸກເສີນໃນຊີວິດໄດ້.

## ແຜນການສອນ-ກິຈກັມໃນການຮຽນ

<u>ສິ່ງທີ່ເອົາມາປະກອບໃຊ້ໃຫ້ປະຕິບັດ</u>

1. ໃຫ້ເລີ້ມກ່າວວ່າທຸກໆຄົນກໍຈະພົບກັບຄວາມລຳບາກ ຫລືຖືກທ້າທາຍໃນຊີວິດ. ບັນຫາຈະເຮັດໃຫ້ຄົນເຮົາເຮັດສອງຢ່າງ. ນຶ່ງ, ບັນຫາອາດເຮັດໃຫ້ຄົນເຮົາມີຄວາມຂົມຂື່ນ. ສອງ, ຫລືອາດເຮັດໃຫ້ເປັນຄົນດີໄດ້. ໃນເວລາລຳບາກ ຄຣິສຕຽນເຮົາສາມາດເພິ່ງພຣະເຈົ້າໄດ້ ໂດຍການໄວ້ວາງໃຈໃນພຣະອົງ ຫລືເຮົາອາດຈະອາສັຍກຳລັງຂອງຕົນເອງ.

2. ບອກວ່າກະສັດເຮເຊຄີອາ ຜູ້ເປັນເຈົ້າຊີວິດໃນເມືອງຢູດາໄດ້ປະເຊີນກັບຄວາມລຳບາກໜັກ, ແລະເພິ່ນຕ້ອງຕັດສິນໃຈ. <u>ພວກເຮົາໄດ້ຮຽນມາແລ້ວ ກະສັດຂອງອານາຈັກທາງພາກເໜືອໄດ້ພະຍາຍາມເພິ່ງຕົນເອງ, ໃຫ້ພວກເຮົາເບິ່ງສິ່ງທີ່ກະສັດເຮເຊຄີອາເຮັດ. ອ່ານ 2 ກະສັດ 18.</u>

3. ໃນເມື່ອເຮົາໄດ້ປະສົບກັບບັນຫາ ພວກເຮົາອາດອາສັຍກຳລັງຂອງຕົນເອງແກ້ໄຂ ຫລືພວກເຮົາຄວນເຂົ້າໄປຫາພຣະ ເຈົ້າ ໄວ້ວາງໃຈໃນພຣະອົງໃຫ້ພຣະອົງຊ່ວຍ.

*ດຣ. ບູນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 12
# ຄວາມຫວັງດຽວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປະຫວັດກະສັດທີສອງ 22:1-23:4
**ພູມຫລັງຂອງພຣະຄັມພີ:** ປະຫວັດກະສັດທີສອງ 22:1-23:30
**ຈຸດສຳຄັນຂອງບົດຮຽນນີ້:** ຄວາມຫວັງຂອງເຮົາແມ່ນເຊື່ອແລະປະຕິບັດຕົນໃນພຣະເຈົ້າເທົ່ານັ້ນ.
**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະໄປເພິ່ງໃຜຫາກບໍ່ແມ່ນພຣະເຈົ້າ, ເຮົາຕ້ອງເຂົ້າຫາພຣະເຈົ້າ.
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮຽນເອົາແບບຢ່າງເຈົ້າໂຢເຊອາຜູ້ເຮັດຕາມນ້ຳພຣະທັຍ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

## ວິທີສອນ

1. ເພື່ອຄວາມເຂົ້າໃຈໃຫ້ຄູຂຽນຊື່ບຸກຄົນສຳຄັນໃນບົດຮຽນດັ່ງນີ້;

| | |
|---|---|
| ມານາເຊ: | ເຈົ້າຊີວິດຊົ່ວ, ປູ່ຂອງເຈົ້າຊີວິດ ໂຢຊີອາ. |
| ເຈົ້າໂຢຊີອາ: | ເຈົ້າຊີວິດໃນບົດຮຽນນີ້. |
| ຊາຟານ: | ເລຂາຂອງເຈົ້າຊີວິດ. |
| ຮິນກີອາ: | ປະໂລຫິດໃນພຣະວິຫານທີ່ກຳລັງຈະສ້ອມແປງ. |
| ອາກີມການ: | ປະໂລຫິດປະຈຳພຣະຣາຊວັງ. |
| ອາກບໍ: | ປະໂລຫິດປະຈຳພຣະຣາຊວັງ. |
| ນາງຮຸນດາ: | ຜູ້ທຳນວາຍຍິງທີ່ມີຊື່ສຽງ. |

### 2. ອ່ານ 2 ກະສັດ 22:1-7 ປົວແປງພຣະວິຫານ

ກ. ຄວາມດີຂອງເຈົ້າຊີວິດໂຢເຊອາ
  1. ເພິ່ນໄດ້ເຮັດໃຫ້ຊີວິດຂອງເພິ່ນເປັນທີ່ພໍພຣະທັຍຂອງພຣະເຈົ້າ.
  2. ເພິ່ນໄດ້ປະຕິບັດຕົນຄ້າຍຄືກະສັດດາວິດ.
  3. ເພິ່ນໄດ້ເຮັດຕາມແບບຢ່າງການນຳຂອງໂມເຊ.

ຂ. ໂຢເຊອາເປັນເຈົ້າຊີວິດແຕ່ອາຍຸແປດປີ ຫລັງຈາກປົກຄອງມາໄດ້ 18 ປີເພິ່ນສ້ອມແຊມພຣະວິຫານ.
  1. ມອບວຽກໃຫ້ ຊາຟານໄປຫາຮິນກີອາເພື່ອລາຍງານເງິນ, ເອົາເງິນອອກຊື້ອຸປກອນສ້ອມ ແປງພຣະວິຫານ.

ຂ. ມອບເງິນຫືວໜ້າຄົນງານປະຈຳພຣະວິຫານ ບໍ່ຕ້ອງເຮັດບັນຊີລາຍຈ່າຍ ເພາະຮູ້ວ່າເຂົາສັດຊື່.

ຄ. ພຣະວິຫານຖືກປະປ່ອຍໃຫ້ຊຸດໂຊມເສົ້າໝອງໃນສມັຍກະສັດມານາເຊ ເປັນເວລາ 45 ປີ ເພາະມານາເຊ ບໍ່ເຊື່ອຟັງພຣະເຈົ້າ ແລະຂາບໄຫວ້ພຣະທຽມແລະຍັງນຳປະຊາຊົນຂາບໄຫວ້ພຣະທຽມອີກ.

**3. ອ່ານ 2 ກະສັດ 22:8-13 ພຣະທັມທີ່ຊຸກເຊື່ອງຖືກເປີດເຜີຍ**

ກ. ຫລັງຈາກຊາຟານແລະຮິນກີອາໄດ້ຕົກລົງກັນແລ້ວ ຮິນກີອາໄດ້ຝາກປື້ມພຣະທັມເຫລັ້ມນຶ່ງທີ່ພົບ ໃນພຣະວິຫານໃນຂະນະທີ່ມ້ຽມພຣະວິຫານນັ້ນໄປໃຫ້ເຈົ້າຊີວິດໂຢຊີອາ.

ຂ. ເຈົ້າຊີວິດໄດ້ຍິນແລ້ວກໍໃຈຮ້າຍຈີກເສື້ອຜ້າພ້ອມກົນແໜງໃຈໃນສິ່ງທີ່ໄດ້ຍິນຈາກພຣະທັມນັ້ນ.

ຄ. ພຣະເຈົ້າຈະລົງໂທດອິສຣາເອນຍ້ອນພວກປູ່ຍ່າຕາຍາຍບໍ່ເຊື່ອຟັງ ແມ່ນແນໃສ່ເຈົ້າຊີວິດ ມານາເຊ

**4. ກັບຄືນຟັງພຣະເຈົ້າ 2 ກະສັດ 22:14-20**

ກ. ເຈົ້າຊີວິດໂຢຊີອາສັ່ງ ຮິນກີອາ, ອາກີມການ, ອາກບໍ ແລະຊາຟານ ໄປຫາຜູ້ທຳນວາຍຜູ້ຍິງຊື່ ຮຸນດາ ເພື່ອຊອກສແວງຫານ້ຳພຣະທັຍ ແລະຫາວິທີແກ້ໄຂບັນຫາ.

ຂ. ພົບວ່າພຣະເຈົ້າຈະລົງໂທດຍ້ອນຄວາມຜິດພາດຂອງບັນພະບຸຣຸດ ມານາເຊ

ຄ. ເນື່ອງຈາກວ່າເຈົ້າຊີວິດໂຢຊີອາກົນແໜງໃຈສະແດງຄວາມຖ່ອມຕົວ ພຣະເຈົ້າຈະຜ່ອນໂທດໂດຍ ບໍ່ລົງໂທດໃນສມັຍຂອງເພິ່ນປົກຄອງ ແລະເພິ່ນເອງກໍຈະຕາຍຢ່າງສງົບ.

**5. ອ່ານ 2 ກະສັດ 23:1-4 ເຕົ້າໂຮມປະຊຸມຂອງພຣະເຈົ້າ**

ກ. ປ່າວປະກາດໃຫ້ປະຊຸມ, ພວກເຖົ້າແກ່, ພວກປະໂລຫິດ ແລະຜູ້ປະກາດພຣະທັມມາເຕົ້າໂຮມກັນ.

ຂ. ເຈົ້າຊີວິດໂຢຊີອາ ອ່ານພຣະທັມທີ່ໄດ້ມາຈາກພຣະວິຫານໃຫ້ທຸກຄົນຟັງ.

ຄ. ຊັກຊວນປະຊາຊົນໃຫ້ເຊື່ອຟັງພຣະເຈົ້າດ້ວຍສຸດອົກສຸດໃຈ (ວິທີການຂອງໂມເຊ).

ງ. ບອກປະຊາຊົນວ່າ ພຣະເຈົ້າຊົງເປັນພຣະເຈົ້າອົງດຽວຂອງອິສຣາເອນ ດັ່ງນັ້ນຈົ່ງສັນຍາວ່າຈະເຊື່ອຟັງ.

*ດຣ. ທູນພັນ ວົງນຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# ຈົບລົງແບບຂົມຂື່ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ກະສັດ 23: 31-32, 36-37; 24:8-9; 18-20; 25:8-21

**ພູມຫລັງຂອງພຣະຄັມພີ:** 2 ກະສັດ 23: 31---25:21

**ຈຸດສຳຄັນຂອງບົດຮຽນນີ້:** ໃນທີ່ສຸດ ພຣະເຈົ້າກໍຈະຊົງພິພາກສາຄົນທີ່ບໍ່ສັດຊື່ຢ່າງວ່ອງໄວ.

**ຄຳຖາມເພື່ອການຄົ້ນຄວ້າ:** ພວກເຮົາສາມາດໄວ້ໃຈໄດ້ບໍ່ວ່າພຣະເຈົ້າຈະໃຫ້ຄວາມຍຸຕິທັມ ແລະເອີ້ນຜູ້ຮັບຜິດຊອບ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍເຫດການຕ່າງໆທີ່ເຮັດໃຫ້ປະເທດຢູດາຖືກທຳລາຍ ແລະເພື່ອຈະນຳເອົາຫລັກທີ່ຂ້ອຍສາມາດນຳໄປໃຊ້ໃນສມັຍນີ້.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຂຽນຂໍ້ຄວາມຕໍ່ໄປນີ້ໃສ່ກະດານ: "ໄກອອກໄປ, ໄກອອກໄປ, ຫາຍໄປເລີຍ." ຖາມ: ພວກທ່ານຄິດເຖິງຫຍັງເວລາໄດ້ຍິນຖ້ອຍຄຳດັ່ງນີ້? ໃຫ້ເວລາຕອບ. (ເວລາພວກເຮົາແນມເບິ່ງເຄື່ອງບິນຢູ່ເທິງຟ້າ, ແນມເບິ່ງຈຣວດຂຶ້ນໄປອາວະກາດ, ແນມເບິ່ງນົກບິນ, ຄຣິສຕຽນໜີໂບດ, ແລະຕໍ່ໆໄປ).

2. ເວົ້າວ່າ: ຂໍ້ຄວາມ "ໄກອອກໄປ, ໄກອອກໄປ, ຫາຍໄປເລີຍ" ເປັນຮູບພາບຂອງສິ່ງທີ່ເກີດຂຶ້ນກັບອານາຈັກໃຕ້ຢູດາ (ປະເທດຢູດາ). ເຖິງຈະເປັນເວລານານສົມຄວນ ແຕ່ກໍເປັນການຫ່າງອອກຈາກພຣະເຈົ້າເທື່ອລະເລັກເທື່ອລະນ້ອຍ ຈົນໃນທີ່ສຸດກໍນຳການພິພາກສາຂອງພຣະເຈົ້າມາສູ່ຕົວເອງ. ພຣະເຈົ້າໄດ້ຊົງອະນຸຍາດໃຫ້ໄພ່ພົນທີ່ພຣະອົງຊົງເລືອກໄວ້ເປັນຂອງພຣະອົງ ຕົກໄປຢູ່ໃຕ້ອຳນາດຂອງຊາວບາບີໂລນ ເພາະການບໍ່ຍອມເຊື່ອຟັງ. ພານັກຮຽນ ເບິ່ງ 2 ກະສັດ 23. ຂຽນຫົວຂໍ້ໃຫຍ່ຕໍ່ໄປນີ້ໃສ່ກະດານ:

   **(1) ໄກອອກໄປ 2 ກະສັດ 23:31-32, 36-37**
   **(2) ໄກອອກໄປ 2 ກະສັດ 24: 8-9, 18-20**
   **(3) ຫາຍໄປເລີຍ 2 ກະສັດ 25: 8-21**

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ຖາມ: ມີໃຜແດ່ເຄີຍມີປະສົບການເຣື່ອງຄວາມບໍ່ຍຸດຕິທັມ? ໃຫ້ເວລາສົນທະນາ. ບອກວ່າ: ບາງຄັ້ງພວກເຮົາອາດຈະຄິດວ່າຊີວິດນີ້ບໍ່ມີຫຍັງຍຸດຕິທັມເລີຍ, ເ ຮົາອາດຈະຖາມວ່າ ພຣະເຈົ້າຢູ່ໃສ? ພຣະອົງຊົງເຫັນສິ່ງເຫລົ່ານັ້ນບໍ່? ປານໃດພຣະອົງຈະຊົງພິພາກສາ? ການກະທຳຂອງພຣະເຈົ້າກັບປະເທດທີ່ພຣະອົງຊົງເລືອກໄວ້ ບອກໃຫ້ພວກເຮົາຮູ້ວ່າພຣະອົງຊົງເບິ່ງຢູ່ ແລະພຣະອົງຊົງພິພາກສາຢູ່.

4. ທວນເບິ່ງຣາຊການຂອງກະສັດໂຢຊີຢາ ໃນບົດຮຽນ 12 ທີ່ຜ່ານມາ ແລ້ວເບິ່ງວ່າໂຢຊີຢາຕາຍຍ້ອນຫຍັງ. ບອກວ່າ: ການປົກຄອງຢູດາຂອງກະສັດໂຢຊີຢາເຫັນເປັນເວລາອັນຍິ່ງໃຫຍ່ສຳລັບອານາຈັກໃຕ້. ໃຊ້ບົດຮຽນອະທິ

ບາຍລະຍະການປົກຄອງລະຍະສັ້ນຂອງໂຢອາຮາດຜູ້ເປັນລູກຂອງໂຢຊີຢາ ແລະຂອງກະສັດເຢໂຮຍອາກິມຜູ້ສືບຕໍ່ບັນລັງຈາກນັ້ນ. ໃຫ້ນັກຮຽນອ່ານ 2 ກະສັດ 23: 31-32, 36-37), ແລະໃຫ້ທຸກຄົນພິສູດເບິ່ງກະສັດທັງສອງພຣະອົງ. ເບິ່ງເຣື່ອງເຢໂຮຍອາກິມປະຕິເສດຜູ້ປະກາດພຣະທັມເຢເຣມີຢາ ແລະພຍາຍາມທີ່ຈະຂ້າລາວ. ແລ້ວຊີ້ໃສ່ຫົວຂໍ້ "ໄກອອກໄປ."

5. ໃຫ້ຜູ້ນຶ່ງອ່ານ 2 ກະສັດ 24: 8-9. ເວົ້າເຣື່ອງຣາຊການຂອງກະສັດເຢໂຮຍອາກິນ; ເຖິງຈະເປັນເວລາສັ້ນ ກໍເປັນຊ່ວງນຶ່ງການຫ່າງໄກອອກໄປຈາກພຣະເຈົ້າ. ຊີ້ໃສ່ຫົວຂໍ້ "ໄກອອກໄປ."

6. ໃຫ້ຜູ້ນຶ່ງອ່ານ 2 ກະສັດ 24:18-20. ເວົ້າເຖິງຣາຊການຂອງກະສັດເສເດກີຢາ. ການປົກຄອງຂອງເສເດກີຢາເປັນເວລາຍາວອອກໄປ ແຕ່ກໍບໍ່ໄດ້ມີຫຍັງດີຂຶ້ນ "ທ່ານໄດ້ເຮັດບາບຕໍ່ສູ້ພຣະເຈົ້າຕາມທີ່ກະສັດເຢໂຮຍອາກິມໄດ້ເຮັດ." ພໍ່ແມ່ທີ່ຮັກລູກຈະບໍ່ປະປ່ອຍໃຫ້ເຂົາເຈົ້າເຮັດຄວາມຜິດໂດຍບໍ່ພະຍາຍາມຊ່ວຍດັດແປງ. ພຣະເຈົ້າຜູ້ຊົງຮັກພວກເຮົາ ສັນຍາວ່າພຣະອົງຈະລົງໂທດການບໍ່ສັດຊື່ຂອງພວກເຮົາ ດັ່ງທີ່ພວກເຮົາຈະໄດ້ເຫັນໃນພາກຕໍ່ໄປວ່າພຣະເຈົ້າເຮັດ ແນວໃດກັບປະເທດຊາດທີ່ພຣະອົງຊົງຮັກແລະເລືອກໄວ້.

7. ໃຫ້ຜູ້ນຶ່ງອ່ານ 2 ກະສັດ 25: 8-21 ແລະໃຫ້ທຸກຄົນຟັງວ່າມີຫຍັງເກີດຂຶ້ນ. ຫລັງຈາກອ່ານຈົບໃຫ້ບອກວ່າ: "ໄກອອກໄປ, ໄກອອກໄປ, ຫາຍໄປເລີຍ." ທະຫານບາບີໂລນທຳລາຍກຸງເຢຣູຊາເລັມ, ພຣະວິຫານ, ຣາຊວັງ, ບ້ານເຮືອນ, ແລະກຳແພງທີ່ປ້ອງກັນເມືອງ. ພວກເຂົາໄດ້ກວາດລ້າງເອົາສິ່ງທີ່ມີຄ່າໄປກຸງບາບີໂລນ. ນອກນັ້ນພວກເຂົາກໍໄດ້ຈັບຜູ້ນຳສຳຄັນໄປເປັນຊະເລີຍ ແລະຜູ້ນຳບາງຄົນກໍຖືກປະຫານຊີວິດ.

<u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ເວົ້າວ່າ: ຖ້າເຮົາຮູ້ວ່າພວກເຮົາມີໜ້າທີ່ຮັບຜິດຊອບຕໍ່ພຣະເຈົ້າ ພວກເຮົາກໍຄວນຈະດຳເນີນຊີວິດຢ່າງສັດຊື່ຕໍ່ພຣະອົງ. ຖາມ:
   - ເປັນຫຍັງພຣະເຈົ້າຊົງອະນຸຍາດໃຫ້ທະຫານບາບີໂລນທຳລາຍປະເທດຊາດທີ່ພຣະອົງໄດ້ຊົງເລືອກໄວ້? (ຄຳຕອບ: ການເຮັດບາບຕໍ່ພຣະເຈົ້າ ແລະການບໍ່ສັດຊື່ຕໍ່ພຣະອົງ)
   - ມີຕົວຢ່າງຫຍັງອີກແດ່ ນອກຈາກໃນບົດຮຽນນີ້ ທີ່ສະແດງໃຫ້ເຫັນວ່າ ພຣະເຈົ້າຊົງພິພາກສາ ແລະຊົງພຣະພິໂຣດເຣື່ອງຄວາມບາບ ແລະຄວາມບໍ່ສັດຊື່? (ຄຳຕອບ: ອາດາມແລະເອວາ; ນ້ຳຖ້ວມໂລກ; ໂຊດົມ ແລະໂກໂມຣາ)
   - ການຮູ້ວ່າພຣະເຈົ້າຊົງເບິ່ງເຮົາຢູ່ ຈະມີຜົນສະທ້ອນແນວໃດແດ່ ໃນການດຳເນີນຊີວິດນີ້? (ໃຫ້ເວລາຕອບ)
   - ມີຫລັກການຫຍັງອີກແດ່ໃນພຣະທັມຂອງພຣະເຈົ້າທີ່ພວກເຮົາຄວນເອົາໃຈໃສ່ ແລະປະຕິບັດຕາມ?

9. ເວົ້າວ່າ: ໃນທີ່ສຸດ, ໄມ້ກາງແຂນຂອງພຣະເຢຊູຄຣິດສະແດງໃຫ້ເຫັນເຖິງຄວາມຮັກຂອງພຣະເຈົ້າ ແລະທ່າທີຂອງພຣະອົງເຣື່ອງຄວາມຜິດບາບ ພຣະເຈົ້າໄດ້ສົ່ງພຣະບຸດຂອງພຣະອົງລົງມາຮັບໂທດຂອງຄວາມບາບ. ຄວາມບາບຕ້ອງຖືກໄຖ່ດ້ວຍຣາຄາແພງ. ພຣະເຈົ້າກຽດຊັງຄວາມບາບ, ແຕ່ພຣະອົງຊົງຮັກມະນຸດທຸກຄົນ. ພຣະເຈົ້າຈຶ່ງໄດ້ເອົາພຣະອົງເອງເປັນຄ່າຈ້າງ. ພຣະອົງຊົງມີພຣະປະສົງໃຫ້ທຸກຄົນປະຖິ້ມຄວາມບາບ ແລະຮັບເອົາຄວາມພົ້ນທີ່ໄດ້ປະທານໃຫ້ຜ່ານທາງພຣະເຢຊູຄຣິດ. ຖ້າທ່ານຍັງບໍ່ເຄີຍຮັບເອົາພຣະຄຣິດໃຫ້ເປັນພຣະຜູ້ໂຜດໃຫ້ພົ້ນ ເວລານີ້ເປັນເວລາທີ່ເໝາະສົມ ສຳລັບການຕັດສິນໃຈ. ອະທິຖານປິດການສຶກສາພຣະທັມ.

*ດຣ. ສິດນີ ຄານ*

# ບົດແນະນຳຄູສອນ
# ຢ່າສູ້ຢ້ານ
# ບົດຮຽນເຣື່ອງອີສເຕີ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມັດທາຍ 28:1-10

**ພູມຫລັງຂອງພຣະຄັມພີ:** ມັດທາຍ 28

**ຈຸດສຳຄັນຂອງບົດຮຽນນີ້:** ການຟື້ນພຣະຊົນເຮັດໃຫ້ເຮົາມີຄວາມຊົມຊື່ນຍິນດີ ແລະກ້າຫານ

**ຄຳຖາມເພື່ອການຄົ້ນຄວ້າ:** ອັນໃດເຮັດໃຫ້ທ່ານຂາດຄວາຍິນດີທີ່ໄດ້ເຊື່ອໃນພຣະເຢຊູ.

**ຈຸດປະສົງຂອງບົດຮຽນນີ້:** ເພື່ອນຳພາໃຫ້ມີຄວາມຊົມຊື່ນຍິນດີທີ່ໄດ້ເຊື່ອໃນພຣະເຈົ້າຜູ້ຊົງພຣະຊົນຢູ່.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ແບ່ງປັນພຣະກິດຕິຄຸນແກ່ທຸກຄົນ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ການຕັດສິນໃຈຮ່ວມກັນ ແລະເບິ່ງແຍງຊ່ອຍເຫລືອກັນ.
- ໃຫ້ເຂົ້າໃຈວ່າທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.

## ບົດນຳ

ໃນບົດຮຽນວັນນີ້ແມ່ນເຣື່ອງການໃຫ້ກຳລັງໃຈຄຣິສຕຽນບໍ່ໃຫ້ຢ້ານໃນການປະກາດຂ່າວປະເສີດ, ເຮົາຈະເຫັນກຸ່ມພວກຍິງທີ່ພາກັນໄປອຸບໂມງຝັງສົບ ມີຄວາມຢ້ານຢູ່ສອງເທື່ອງທີນຶ່ງແມ່ນຢ້ານເທວະດາທີ່ປາກົດຕົວໂດຍມີແຜ່ນດິນໄຫວແລະນັ່ງເທິງຫີນທີ່ອັດປາກອຸບໂມງ, ເທື່ອທີ່ສອງແມ່ນຢ້ານພຣະເຢຊູໃນຂະນະທີ່ພວກເຂົາພວມພາກັນແລ່ນຈາກອຸບໂມງໄປເພື່ອແຈ້ງຂ່າວດີນີ້ໃຫ້ພວກສາວົກນັ້ນພຣະເຢຊູກໍຊົງປາກົດແກ່ເຂົາ. ໃນປະເທດອະເມຣິກາບ່ອນພວກເຮົາຢູ່ໃນເວລານີ້ຂ້າພະເຈົ້າໄດ້ເຫັນຄວາມກ້າຫານຂອງຄຣິສຕຽນເຮົາ ຄືພວກເຂົາເຈົ້າບໍ່ຢ້ານສິ່ງໃດເພາະເປັນປະເທດເສຣີ ພວກເຂົາເຈົ້າກ້າເຮັດທຸກຢ່າງ ຫາກຄາແຕ່ຄ້ານຊື່ໆ.

1. ຖາມນັກຮຽນວ່າໃນນີ້ມີໃຜແດ່ມີລູກຫລືຫລານນ້ອຍ? ສົມມຸດວ່າລູກຫລືຫລານຫລົງເສັຽໄປ ທ່ານຈະເຮັດແນວໃດ? ເມື່ອພົບແລ້ວທ່ານຈະຍິນດີຫລາຍປານໃດ?

**໒. ອ່ານມັດທາຍ 28:1-4 ການປາກົດຂອງເທວະດາ**

ກ. ພວກຜູ້ຍິງເຂົ້າໃຈວ່າເສັຽພຣະເຢຊູແລ້ວຕັ້ງສາມວັນ.

ຂ. ວັນຖ້ວນສາມພວກຜູ້ຍິງພາກັນຊື້ນ້ຳຫອມ ເພື່ອໄປທາຶດສົງເປັນການນະມັສການ.

ຄ. ໃນຂະນະທີ່ພາກັນໄປກໍຄິດເຫັນບັນຫາເຣື່ອງຫີນອັດປາກຖ້ຳ

ງ.. ພວກຜູ້ຍິງຢ້ານຕົກໃຈເມື່ອເຫັນເທວະດາ ແຕ່ບໍ່ແຂງກະດ້າງຄືພວກທະຫານຍາມ, ຜູ້ຍິງຍັງດຳເນີນງານຢູ່.

3. <u>ອ່ານມັດທາຍ 28:5-7 ເທວະດາສົ່ງຂ່າວ</u>

ກ. ເກີດການອັສຈັນແຜ່ນດິນໄຫວ, ເທວະດາກິ້ງຫີນອອກຈາກປາກອຸບໂມງ.

ຈດຸປະສົງການກິ້ງຫີນອອກ:

1. ບໍ່ແມ່ນກິ້ງໃຫ້ພວກຜູ້ຍິງເຂົ້າໄປຫົດສົງ.
2. ເພື່ອພິສຸດວ່າພຣະເຢຊູຟື້ນຄືນມາຈາກຕາຍແລ້ວ.
3. ເປັນຮູບພາບວ່າຫາກເຮົາຕັ້ງໃຈເຮັດງານຂອງພຣະເຈົ້າແທ້ຈິງພຣະອົງຈະຈັດຫາໃຫ້.

ຂ. ເທວະດາເລົ້າໂລມພວກຜູ້ຍິງບໍ່ໃຫ້ຢ້ານ, ເພິ່ນຮູ້ພວກຜູ້ຍິງມາຫາພຣະເຢຊູ (ເຕືອນເຮົາວ່າຢ່າຊູ່ຢ້ານໃນການເວົ້າເຣື່ອງພຣະເຢຊູ ແຕ່ໃຫ້ຢຳເກງພຣະອົງດີກວ່າ)

ຄ. ຜູ້ຍິງກຸ່ມນີ້ໄດ້ຊື່ວ່າເປັນກຸ່ມແຮກທີ່ປະກາດຂ່າວການຄືນມາຈາກຕາຍຂອງພຣະເຢຊູ, ຄືເຂົາປະກາດໃນສິ່ງສິ່ງທີ່ເຂົາຮູ້ເຫັນເປັນພະຍານດ້ວຍຕົວເຂົາເຈົ້າເອງ.

ງ. ກັບຄືນເບິ່ງຄຳຖາມແຮກທີ່ຖາມວ່າ ຫາກພົບເຫັນລູກຫລືຫລານທີ່ຫລົງເສັຽນັ້ນຄືນມາຈະດີໃຈປານໃດ. ພວກຜູ້ຍິງເຂົ້າໃຈວ່າເສັຽພຣະເຢຊູໄປແລ້ວ ບາດນີ້ໄດ້ຄືນມາພວກນາງຈຶ່ງດີໃຈແລະຟ້າວແລ່ນໄປບອກຜູ້ອື່ນ.

4. <u>ອ່ານມັດທາຍ 28:8-10 ຊົງປາກົດກັບພວກແມ່ຍິງ</u>

ກ. ຄຳເວົ້າແຮກທີ່ພຣະເຢຊູເວົ້າກັບພວກຜູ້ຍິງ ແມ່ນພຣະອົງອວຍພອນເຂົາ "ຈົ່ງຈະເຣີນເທີ້ນ" (ຫາກເຮົາຊອກຫາພຣະອົງຄືພວກຜູ້ຍິງ ພຣະອົງຄົງກ່າວກັບເຮົາວ່າ ຈົ່ງຈະເຣີນເທີ້ນ ຄືກັນ).

ຂ. ພວກຜູ້ຍິງກົ້ມລົງຂາບພຣະບາດນະມັສການພຣະອົງດ້ວຍຄວາມຢ້ານຢຳເກງ.

ຄ. ພວກນາງຢ້ານ ແຕ່ບໍ່ແຂງກະດ້າງເປັນຄືຄົນຕາຍເໝືອນພວກທະຫານ ແຕ່ກັບກົ້ມຂາບນະມັສການ. (ຄຣິສຕຽນອາດຈະມີຄວາມຢ້ານເມື່ອຖືກຂູ່ ແຕ່ບໍ່ຄວນຢ້ານຈົນແຂງກະດ້າງໂດຍບໍ່ເຮັດຫຍັງເລີຍ).

ງ. ພວກນາງຮັບຄຳສັ່ງໃຫ້ໄປບອກພວກພີ່ນ້ອງ ແປວ່າພວກສາວົກແລະຄົນເຊື່ອທຸກຄົນຖືວ່າເປັນພີ່ນ້ອງ. (ຄຳສັ່ງໃຫ້ໄປບອກພວກພີ່ນ້ອງຍັງຍືດຍາວໄປທົ່ວໂລກ ໂດຍສເພາະແມ່ນເຣື່ອງຄຳສັ່ງໃຫຍ່ 28:19-20.

<u>ຄຳຖາມ:</u>

1. ເປັນຫຍັງພວກຜູ້ຊາຍຈຶ່ງບໍ່ໄປຍັງອຸບໂມງຝັງສົບ?

2. ເປັນຫຍັງຈຶ່ງຊົງປາກົດຕົວກັບພວກຜູ້ຍິງກ່ອນປາກົດກັບພວກສາວົກ?

3. ການຟື້ນພຣະຊົນຂອງພຣະເຢຊູເປັນຫລັກຄ້ຳປະກັນຄວາມເຊື່ອຂອງທ່ານແນວໃດ?

*ດຣ. ທູນພັນ ວົງສຸຣິດທ໌*